# ນິທານ

# ທ້າວສີທົນ

ເຫຼັ້ມ ໑

ຂອງ

ກົມວັນນະຄະດີ

ພິມເທື່ອທີ ໑ ຈຳນວນ ໒,໐໐໐ ສະບັບ

ທີ ໒໑ ທັນວາ ໑໙໒໗

# ຄຳນຳ

ໜັງສືເຣື່ອງທ້າວສີທົນ ເປັນໜັງສືທີ່ເພິ່ນແຕ່ງໄວ້ເປັນຄຳກອນລາວປະເພດຄຳຮ້ອຍກອງ ເປັນຄຳກອນທີ່ປະກອບໄປດ້ວຍເນື້ອເຣື່ອງອັນມ່ວນຊື່ນ ມີທັງຮັກ ທັງໂສກ ແລະວິບປະໂຍກພັດພາກຈາກກັນ ເປັນເຣື່ອງທີ່ໄດ້ຮັບຄວາມນິຍົມຊົມຊອບ ແລະລືລາຜາກົດຢູ່ໃນໝູ່ປະຊາຊົນຄົນລາວໂດຍທົ່ວໄປ ຈຶ່ງນັບເຂົ້າຢູ່ໃນພວກວັນນະຄະດີຊັ້ນດີຂອງລາວອີກເຣື່ອງນຶ່ງ ສຳລັບເຣື່ອງທ້າວສີທົນນີ້ຖ້າແມ່ນພວກໜຸ່ມສາວແຮ່ງມັກຫຼາຍ ເພາະເພິ່ນໄດ້ກ່າວເຣື່ອງຄວາມມັກຄວາມຮັກ ລະຫວ່າງຍິງຊາຍກ່ອນຊິໄດ້ເປັນຜົວເປັນເມັຽກັນນັ້ນ ຕ້ອງຄາດແຕ່ແຖນແນນແຕ່ຟ້າ ໝາຍຄວາມວ່າຜູ້ຈະເປັນຜົວເປັນເມັຽກັນ ຕ້ອງແມ່ນພຍາແຖນແຕ່ງໃຫ້ມານຳກັນແຕ່ເທິງສວັນຊັ້ນຟ້າ ຕາມຄວາມເຊື່ອຖືຂອງຄົນບູຮານ ຖ້າບໍ່ດັ່ງນັ້ນເຖິງແມ່ນວ່າຈະມັກຈະຮັກກັນປານໃດກໍບໍ່ໄດ້ກັນເປັນຜົວເປັນເມັຽເລີຍ ເພິ່ນຈຶ່ງມີຄວາມພຍາບົດນຶ່ງກ່າວໄວ້ ດັ່ງທີ່ພວກເຮົາເຄີຍໄດ້ຍິນໄດ້ຟັງຕໍ່ ໆ ກັນມາວ່າ " ບຸນບໍ່ຄາດແຕ່ແຖນແນນບໍ່ຄາດແຕ່ຟ້າແສນຊິຝັ້ນກໍເລົ່ານາຍ " ເຖິງຢ່າງໃດກໍຕາມ ໜັງສືເຣື່ອງນີ້ກໍຍັງໄດ້ຝັງຄະຕິຂອງຄວາມຮັກ ລະຫວ່າງຜົວເມັຽທີ່ຮັກກັນແທ້ໄວ້ຢ່າງໜ້າຈັບອົກຈັບໃຈຍິ່ງ ເມື່ອຖືກພັດພາກຈາກກັນໄປ ເຖິງຈະມີພັຍອັນຕຣາຍອັນອາຈເຖິງແກ່ຊີວິດນາ ໆ ປະການມາຂວາງກັ້ນກັນທາງຢູ່ ກໍອົດສາພຍາຍາມຕິດຕາມຫາກັນ ຢ່າງບໍ່ໄດ້ຢ້ານກົວຕໍ່ພັຍອັນຕຣາຍໃດ ໆ ທັງ

ເໜີດ  ສົມກັບຄຳທີ່ຄົນສມັຍທຸກວັນນີ້ເວົ້າກັນວ່າ " ຮັກແທ້ນັ້ນຍ່ອມບໍ່ມີອຸປສັກແລະອັນຕຣາຍໃດ ໆ ຈະມາຂວາງກັ້ນໄວ້ໄດ້ ".

ຖ້າທ່ານຜູ້ອ່ານຈະຖາມວ່າ    ໜັງສືເຣື່ອງນີ້ຕົ້ນເຫີມເດີມທີ່ແທ້ແມ່ນໃຜເປັນຜູ້ແຕ່ງ ? ແຕ່ງຢູ່ໃສ ? ເມື່ອໃດ ? ອັນນີ້ກໍເປັນເຣື່ອງຂັດສົນຈົນປັນຍາທີ່ຈະຮຽນໃຫ້ທ່ານຊາບໄດ້    ເພາະໜັງສືວັນນະຄະດີຕ່າງ ໆ ຂອງລາວເຮົາເກືອບທຸກເຣື່ອງ ບໍ່ວ່າຢູ່ໃນພາກອີສານຂອງໄທ ຫຼືໃນພຣະຣາຊອານາຈັກລາວ ບໍ່ຄ່ອຍພາກົດເຫັນຊື່ຜູ້ແຕ່ງ ແຕ່ໄປພາກົດເຫັນຊື່ຂອງຜູ້ສ້າງຜູ້ຂຽນ (ຜູ້ກ່າຍ) ໄປເສັຽເປັນສ່ວນຫຼາຍ    ທັງນີ້ຄົງຈະເນື່ອງມາຈາກເຫດຫຼາຍປະການຄື.

ກ. ຜູ້ແຕ່ງອາຈບໍ່ປະສົງອອກຊື່ຕົນເອງ ແລະບໍ່ໄດ້ລົງ ວັນ ເດືອນ ປີ ທີ່ແຕ່ງແລະສະຖານທີ່ແຕ່ງໄວ້   ຫຼືຜູ້ແຕ່ງໄດ້ລົງຊື່ຂອງຜູ້ແຕ່ງພ້ອມທັງວັນ ເດືອນ ປີ ແລະສະຖານທີ່ແຕ່ງໄວ້ໂດຍຮຽບຮ້ອຍ   ພາຍລຸນມາອາດຖືກລຶບອອກເສັຽ.

ຂ. ຜູ້ມີສັດທາປາກຈະສ້າງໜັງສືໃຫ້ເປັນທານ  ເພື່ອການກຸສົນຖ້າວົນມັກເຣື່ອງໃດ   ເມື່ອຕົນຂຽນໜັງສືບໍ່ເປັນກໍຈ້າງຄົນອື່ນຂຽນກ່າຍອອກຈາກສະບັບເດີມໃຫ້ແລ້ວ  ກໍໃສ່ຊື່ໂຕເອງແທນຊື່ຜູ້ແຕ່ງວ່າເປັນຜູ້ສ້າງ ແລະໃສ່ ວັນ ເດືອນ ປີ ທີ່ກ່າຍແລ້ວນັ້ນ   ໄວ້ແທນ ວັນ ເດືອນ ປີ ເກົ່າທີ່ແຕ່ງແຕ່ດັ້ງເດີມນັ້ນເສັຽ   ທັງສະຖານທີ່ແຕ່ງກໍເອົາບ່ອນທີ່ນຳໜັງສືໄປກ່າຍໄປຂຽນນັ້ນໂລດ  ລາງເຣື່ອງກໍສຸດຈຸດປຸດເອົາຊື່ ໆ ກໍມີ.

໗. ລາງຄົນເຫັນເຣື່ອງໃດມ່ວນແລະອອນຊອນ ຄືດປາກໄດ້ມາໄວ້ເປັນສົມບັດຂອງຕົນເອງກໍກ່າຍເອົາ ແຖມເອົາຊື່ຜູ້ແຕ່ງເກົ່າອອກແລ້ວເອົາຊື່ຕົນເອງໃສ່ເຂົ້າໄວ້ແທນວ່າຕົນເອງເປັນຜູ້ແຕ່ງ ເພາະເຫັນວ່າໜັງສືນີ້ເປັນສົມບັດຂອງຕົນເອງ ຈຶ່ງກາຍເປັນການລັກວັນນະຄະດີໄປໂດຍບໍ່ຮູ້ເນື້ອຄີງ.

ດັ່ງນີ້ໜັງສືເຣື່ອງນຶ່ງ ໆ ຢູ່ໃນທີ່ນຶ່ງ ໆ ຈຶ່ງມີຫຼາຍຜູກຫຼາຍມັດແລະຫຼາຍສະບັບ ແຕ່ລະສະບັບກໍມີຂໍ້ຄວາມຂາດຕົກບົກຫຼົ່ນໄປບ່ອນລະເລັກລະນ້ອຍໃນທີ່ຕ່າງ ໆ ກັນ ລາງສະບັບກໍຂາດເປັນວັກເປັນຕອນໄປກໍມີ ເນື່ອງຈາກແຕ່ລະສະບັບເມື່ອກ່າຍແລ້ວກໍເອົາໄລດ ບໍ່ມີການກວດແກ້ທວນຄືນໃສ່ຕົ້ນສະບັບເດີມອີກ ແລະໜັງສືເຣື່ອງດຽວກັນ ສະບັບນຶ່ງມີຊື່ຜູ້ນຶ່ງເປັນຜູ້ຂຽນເປັນຜູ້ສ້າງ ອີກສະບັບນຶ່ງກໍມີຊື່ຜູ້ນຶ່ງເປັນຜູ້ຂຽນເປັນຜູ້ສ້າງແລະຜູ້ແຕ່ງ ສະບັບອື່ນກໍມີຊື່ຜູ້ອື່ນອີກ ວັນເດືອນປີທີ່ຂຽນທີ່ສ້າງຕລອດຮອດສະຖານທີ່ກໍຕ່າງກັນໄປເລື້ອຍ ຖ້າຈະສັນນິດຖານເອົາຕາມເຫດຜົນ ກໍເປັນພຽງການສັນນິດຖານເທົ່ານັ້ນ ຈະເອົາຈິງແທ້ແນ່ນອນບໍ່ໄດ້ ຈຶ່ງເປັນການປາກທີ່ເຮົາຜູ້ເກີດມາສຸດທ້າຍພາຍລຸນ ຈະສາມາດອາດຮູ້ຊື່ຜູ້ແຕ່ງ ວັນເດືອນປີທີ່ແຕ່ງ ແລະສະຖານທີ່ແຕ່ງອັນແທ້ຈິງນັ້ນໄດ້ ຊຶ່ງເປັນຜົນເສັຽຫາຍແຕ່ວັນນະຄະດີຂອງລາວເຮົາຕໍ່ມາຕາບເທົ່າທຸກວັນນີ້.

ເຣື່ອງທ້າວສີທົນສະບັບນີ້ ແຕ່ເກົ່າຂຽນໄວ້ໃນໃບລານເປັນໂຕໜັງສືທັມ ເປັນໜັງສືເກົ່າແກ່ສະບັບນຶ່ງ ເພື່ອປໂຍດໃນການເຜີຍແຜ່ວັນນະຄະດີຂອງເຮົາໃຫ້ກວ້າງຂວາງ ຈຶ່ງໄດ້ກ່າຍອອກມາໂດຍໄດ້ກວດທວນໃສ່ກັບຕົ້ນ

ສະບັບເດີມຢ່າງຖືກຕ້ອງແລ້ວ ແຕ່ຂໍ້ຄວາມລາງບ່ອນນັ້ນໄດ້ດັດແປງຄວາມເວົ້າໃໝ່ ເພື່ອໃຫ້ແຈ່ມແຈ້ງແລະເໝາະສົມກັບກາລະສມັຍ ສ່ວນເນື້ອເຣື່ອງແລະຫຼັກໃຫ່ງໃຈຄວາມກໍຄົງໄວ້ຕາມເດີມທຸກປະການ ຫວັງວ່າໜັງສືເຣື່ອງທ້າວສີທົນນີ້ຄົງຈະເປັນປໂຍດແກ່ຜູ້ສົນໃຈ ໃນທາງວັນນະຄະດີບໍ່ຫຼາຍກໍໜ້ອຍ.

ປະທານຄນະກັມມະການວັນນະຄະດີ

ເຊັ່ນ: ສົມຈິນງິນ

ວຽງຈັນ, ວັນທີ ໒໒ ພຶສພາ ໒໕໑໑

# ພົ້ນທ້າວສິທົນ

ບັງມີເມືອງຫຼວງກວ້າງ ຮຽກຊື່ເປັງຈານ

ສົມພານເພັງ ໜື່ນເມືອງມານ້ອມ

ຄູລະວັງລ້ອມ ວຽງຫຼວງຫຼາຍຍ່ານ

ຜາສາດທ້າວ ພຽງຟ້າຜ່ານພະໂຍມ

ວາໂບດຕ້ອງ ສຽງລະງົມຫໍ້ທົງ

ງາມບົງພ້ຽງ ປາງແກ້ວເທພດາ

ອັນວ່າອາທົດທ້າວ ທົງແທ່ນເປັນກະສັດ

ບູທ່າງຄອງສົມບັດ ບັ່ງປອງເປັນເຈົ້າ

ຈັບທະເທວີເທງົ້າ ທຽມທວງເທົງແທ່ນ

ແທບແຜ່ນພົ້ນ ພຽນຊ້ອນຜ່ອນພຣະໄທ

ຫຼາຍປີໄດ້ ຈອມພຣະນາງທຽມພ່າງ

ບັງໄປ່ ມີລູກນ້ອຍ ຄອຍສ້າງສືບເມືອງ

ບຸນເຮືອງເຈົ້າ ຈອມນາງແມນຫຼ່

ກໍ່ຈົງທູບຮອດຟ້າ ເທວະທ້າວຜໍ່ຄອຍ

ຂໍລູກນ້ອຍ ບຸຕຣາດຊາຍເຊັງ

ແລ້ວຈົງຈໍາສົບສົບ ພໍ່າເພັງພຽນໄວ້

ເລີບເລົ້າຮ້ອນຮອດໄທ້ ພົພອາດອິນດາ

ຫິນສີລາເປັນແປວລຸກ ລວກຄີງຄວັນກຸ້ມ
ອິນຈິງຫຼິງນານປ້ຽມ ແລລີງໂລກລຸ່ມ
ເລີຍເລົ້າເຫັນອ່ອນອ້ວນ ນາງນ້ອຍປາຖນາ
ພຣະຈິງຕ້ານ ເຕີນລູກມາມວນ
ທັງສອງສີ ດ່ວນມາພຽງໜ້າ
ອິນຈິງຈາແກ່ນເຈົ້າ ໂລມລູກອິມອອນ
ນັດນີ້ເວນວຽນເຖິງ ລູກຄີງຄອນເສົ້າ
ເຈົ້າຈິງພາພົນສ້າງ ຊຸມພູພື້ນລຸ່ມ ແດ່ຖ້ອນ
ພໍ່ຂໍວອນແຈ່ມເຈົ້າ ຈອມຊ້ອນທ່ຽວລີງ
ກັບທັງນິງນາງນ້ອຍ ມະໂນຣາລີງຄູ່ ກັບຖ້ອນ
ຝູງໝູ່ບໍ່ຮິຈາກເຈົ້າ ລີງພ້ອມພ່ຳກັນ
ເມື້ອນັ້ນສອງສີໄຫ້ ພຣະສຸຣາລູກນີງ
ຫູນກີງແກ້ວ ລາລ້າລ່ວງລີງ
ຫຼິງດູນານ ໆ ຍ້າຍ ກາຍກີບເມືອງແມນ ພຸ້ນເປີ
ແນງເວຫາ ແກວ່ງແພນພາຍຟ້າ
ເຖິງທີສັດຫາກວ້າງ ວາໂຍກວັດແກວ່ງ
ລົມພັດຟົ້ງ ສອງເຈົ້າຈາກກັນ
ນາງນັ້ນຕົກຂອກຂັ້ນ ໄກຣາດພູເງິນ
ສີທິນຕົກເປັງຈານ ຈີມກະແສແສນທ້າງ
ນາກໍວາງຄີງເຂົ້າ ພຣະຄັນທອນພຣະແມ່
ຈັນທະນາດເນື້ອ ນາງຄ້າມຄ່ອນຝັນ

ຝັນວ່ານະບີໄຊແກ້ວ / ດວງດີລູກປະເສີດ
ສະເດັດສູ່ຫ້ອງ / ຫໍນ້ອງຮຸ່ງເຮືອງ
ນາງກໍເປືອງເປັ່ງຟ້າວ / ນາບເອົາອິນສ່ອງ
ເລີຍເລົ່າກົບຮອດຫ້ອງ / ມີຊ້າທ່ງວພລັບ
ຄ້ອນວ່ານາງຝັນແລ້ວ / ໄສຍາສະດຸ້ງດື່ນ
ນາງຈິ່ງຂຶ້ນຂາບໄຫວ້ / ຜົວແກ້ວກ່າວຄະດີ
ພູມີພຣະ / ຊື່ນພຣະໄທທົ່ງດ້ານ
ນັດນີ້ຮອຍທີ່ສົມພານໄດ / ບຸດຕາຕົນປະເສີດ
ຮ້ອຍທີ່ທ້າວແທພໄທ້ / ພາຍຟ້າຊິເກີດດອນ ແທ້ແລ້ວ
ຄ້ອນກ່າວແລ້ວ / ຊົມຊື່ນບົນດີ
ນາງກໍອັນຊະລີຮັບ / ພ່ຳພອນຜົວແກ້ວ
ແລ້ວເລີກມ້ຽນ / ເມືອສູ່ຫໍປາງ
ນັກສນົມແຫນ / ແຫ່ນາງພໍຮ້ອຍ
ພໍເມື່ອຫຼາຍເດືອນໄດ້ / ຈະດູເຖິງທີ່ສມາດ
ນາງນາດນ້ອຍ / ຈວນທ້ອງທອດນອນ
ຝູງໝູ່ນາມກອນເຊື້ອ / ຮຽກຮ່ຳໂຮມຂວັນ
ເຊີນກຸມານ / ອອກມາມີຊ້າ
ເມື່ອນັ້ນນາສີນ້ອຍ / ທວາຍທອດຄົງຫງາຍ
ດູດັ່ງຄຳຊາວຫຼອມ / ຫຼໍ່ລຽງໃນເບົ້າ
ມີທັງຂອງແພງເຈົ້າ / ທະນູສິນສອນດາບ
ຖຽນຄາວດເບື້ອ / ນຳໝັ້ນບໍ່ວາງ

ບໍຣິວານເຊື້ອ ຊາຍຫານຫົກໝື່ນ
ລົງສູ່ພື້ນ ພຽງທ້າວທີບດຽວ
ທຸກທີພ້ອມ ພວກເຜົາພົງສາ
ເຂົາກໍເຫັນບາການ ຣູບພຽງພິມແຕ້ມ
ໂສມສເລົາແບ້ນ ທຽມອິນຖວິນຫຼໍ່
ແຕ່ໃນທີບພ້ ວ້ ມີທ້າວຜູ້ດຽວ
ເຂົາກໍຍິນດີດ້ວຍ ທຽວຊົມຊ້ອຍຊື່ນ
ເພາະເພື່ອເຫັນຣູບທ້າວ ງາມລົ້ນລື່ນຄົນ
ແລ້ວຈຶ່ງໂທນຫາໃຫ້ ນາມບາບຸດຣາດ
ນັກປາດເຈົ້າ ຫຼາຍນີ້ແມ່ນຍາມ
ຕາມເກນທ້າວ ສະເດັດລົງໂລກລຸ່ມ
ຊື່ວ່າກຸມະເຣດນ້ອຍ ສີທົນທ້າວເກິງສວັນ
ສາວສນົມລ້ອມ ເປັນຖັນແຖວຄີ້
ປະຕິບັດແຈ່ມເຈົ້າ ບາທ້າວແກວ່ງວີ
ວັນສີທ້າວ ທຽມທອງຫຼອມຫຼໍ່
ອໍຣະໃໝ່ໜ້າ ງາມຍ້ອຍຍິ່ງຂຽນ
ພິເສດທ້າວ ທິງດາບສອນສິບ
ເປັນຂວັນແຂງ ມີງນະຄອນຄົນງ້
ຊາວນະບຸດສາເຊື້ອ ມີລໍຕ້ານຕໍ່
ເຂົາກໍຂາມເດດງ້ ບາທ້າວໜໍ່ພຸດໂທ
ທຸກເທດດ້າວ ທຽວທ່ອງຖວາຍສານ

ພັນເມືອງມາ　　　ສ່ວຍຫອງຫັງຄ້າຍ
ລືວ່າສີຫົນທ້າວ　　　ພູຫອນບຸນມາກ
ຫາກແມ່ນອົງເອກໄທ້　　　ພຣະໄຕແກ້ວຍອດຄົນ
ທໍ່ແຕ່ສົມຄວນເຈົ້າ　　　ສີຫົນທົງຣາດ
ພູວະນາດທ້າວ　　　ກຽນກວ້າງກວ່າໄກ
ເດັ່ງຣະດາດລົ້ນ　　　ພວກໄພ່ໄບທະກາ
ແສນລຳຊາຍ　　　ຊ່າເຊັງຫັງຄ້າຍ
ປາງຫອງທ້າວ　　　ຖູລະວັງຫຼາຍລັ່ນ
ນີຕັ້ງເຈັດແປດຊັ້ນ　　　ເປັນຂັ້ນໄລ່ກັນ
ຫຼີ ງດູປາຍເມກຊ້ອງ　　　ສານຍອດມະນີວັນ
ເມືອງ ໆ ໃສ　　　ດັ່ງດາວດາບ້ອຍ
ຄອຍເຫັນເບື໊ອງ　　　ພຣະເຈດີແກວດີ
ຜາສາດຊ້ອນ　　　ນຸງແກ້ວກ່ານສີ
ແສງໃສເຂັ້ນ　　　ປະດັບລຳນ້ຳເລື່ອນ
ບານເມື່ອລົມລ່ວງຕ້ອງ　　　ເພື່ອນພື໊ນກ່ອນກະດິງ
ງານບົ່ງພັ້ງງ　　　ບາງນາດເມືອງສວັນ
ເສນາບັນ　　　ອະເນກນອງເນືອງເຜົ້າ
ເບັ້ງຊອບທ້າວ　　　ນະນີໄຊໃສ່ອງ
ຄຸ້ມຂ່ວງທ້າວ　　　ພັນຫ້ອງໝື່ນເສົາ
ເຊັ້ງຊ່າເທົ້າ　　　ທັງກະໂອກເຂົາຂານ
ກໍຫາກລືເປັ່ງຈານ　　　ບອດນະຄອນຄົນບ້ອງ

ຫຼ ງຫໍຫ້ອງ ເຮືອງແສງໃສສ່ອງ
ມີທັງຮູບທ່ອນທ້າວ ຊົມຊ້ອນກ່າຍບາງ
ກັບທັງຮູບບາກກ້ຽວ ສັບສອດກຸມກັນ
ນັງກອນເຝືອ ບາກກາຍກຸມກ້ຽວ
ມີທັງມາລາຊ້ອນ ຊອນເຄືອກ້ຽວກ່າຍ
ລາຍດອກໄມ້ ລຽນກ້ານສອດສົນ
ສະພາດພ້ອມ ເດັ່ງລະດາດກິນນະຣີ
ກິນນະຮອນຍໍຫາງເຫີນ ຫອນພະໂຍມຍັງຟ້າ
ຝູງໝູ່ກັລຍາແກ້ວ ກຸມາຣີສອງໝື່ນ
ຊົມຊື່ນຊ້ອນ ແຜງເຜົ້າຊູ່ອັນ
ສອນລອນຕັ້ງ ຂັບຄຳຊອງໝາກ
ຫຼາຍຫຼາກລົ້ນ ນາງນ້ອຍນອນສລາ
ພຣະບາດໄດ້ ສົບສີທົງໃສມ
ພຣະກາຍກົມເຫຼືອງ ດັ່ງທອງທາເນື້ອ
ຝູງສາວເຊື້ອ ສນົມນາງປົວປົ່ນ
ສະພັງພ້ອມ ເຟືອນຟົ້ນດັ່ງຊີບົນ
ເນືອດ ໆ ເນືອ ນາງນາດກິນນະຣີ
ກຳກະສິງໂກວ ແກວ່ງວີລະວັງທ້າວ
ນັບແຕ່ໃຕ້ແຜ່ນພື້ນ ຊາວໂລກເລິງຂາມ
ໃນຊຸມພູ ດັ່ງຄາມຂໍໄຫວ້
ລືທ່ອນໄຮ້ ນະຄອນຮາດເປັງຈານ

ເງິນຄຳນັບ　　ໂກດກືກອງລ້ານ
ຝູງໝູ່ເດັຽຣະສານຊ້າງ　　ຫຼາຍຕົວກ້າແກ່ນ
ມ້ານິງຫົ້　　ແສນຕື້ຕົວອະສົງ
ທຸກຄ່ຳເຊົ້າ　　ລົງທ່າພໍພັນ
ຜັນສະເທືອນສຽງ　　ອະເນກລົງລອຍນ້ຳ
ມີມະຫົງສາເຊື້ອ　　ງົວໂຫນຫຽມທ່າ
ຫຼາຍສ່ຳຊ້າງ　　ງາຂ້ອນເຄືອງຄຳ
ບິດບິງລ້ຳ　　ທ້າວເທດເປັງຈານ
ໂບທາຫານ　　ໝື່ນກືກອງລົ້ນ
ນັບແຕ່ ສີຫົນທ້າວ　　ທົງນະຄອນຄອງຣາດ
ສິບຫ້າຂວບເຂົ້າ　　ນາທ້າວໃຫ່ຽສູງ
ຝູງໄພ່ພ້ອມ　　ຊົມຊື່ນໃນທະນາ
ຕາມພາສາ　　ແຜ່ນດິນເມືອງບ້ານ
ທໍ່ແຕ່ນາຄານທ້າວ　　ເນົາອາດອົງດຽວ
ຍັງໄປ່ ມີມະເຫສີ　　ຮ່ວມສະນອນຮຽງຊ້ອນ
ເຈົ້າກໍ່ນອນຄືນຄ້າ　　ຄະນຶງດຽວດົ້ນດັ້ນ
ໂອນໍປານນີ້ແນບນາດຫຼ້າ　　ລົງຄ້າງຝ່າຍໃດ ພີເດ
ຫຼື ວ່າຄາດຄູ່ແກ້ວ　　ກັລເບດນານພອນ ນໍ້ເດ
ຮູ້ວ່າເນົາແດນເຂົາ　　ເຂດພົງພະນາໄມ້
ຫຼື ວ່າແກມພົງໄຫ້　　ອະສຸຣາລູກນິງ ພາຍພຸ້ນ
ສັ້ງມາລະພີໄວ້　　ໃຫ້ແດດົ້ນດັ້ນດຽວ ນໍ້ເດ

ຫຼຽວໄປທາງເທິງຟ້າ    ເມຄາໄຫຼຜ່າ
ເຫັນແຕ່ເມກກີບຟ້າ    ໄຫຼຊ້ອນຊວ່າງກັນ
ຫັນໄປເວຫາຫ້ອງ    ຫັນໃດກໍດາຍເປົ່າ
ເຫັນແຕ່ເມກມືດເຕົ້າ    ມາແລ້ວຜັດເລົາຫາຍ
ພຣະກໍຟູມຟາຍໄຫ້    ສລົບລົງລົ້ມທ່າວ
ສາວສນົມບາດບ້ອຍ    ບໍ່ມີເອື້ອອ່າວຫາ
ມີແຕ່ໂສກາເສົ້າ    ເຫງົາພຣະໄທໄຫ້ຈົ່ມ
ຄຶດໃຄ່ເຫັນໜ້ານ້ອງ    ໂສມໜ້າດັ່ງໃດ ພີ່ເດ
ຫຼື ວ່າເວນຫຼັງກັ້ງວ    ໄກກັນເກີນຫ່າງ ຈິງບໍ່
ຈຶ່ງໄດ້ຕິກດ່ານດ້າວ    ໄກເຈົ້າແຈ່ມສມອນ ພີ່ເດ
ຄ້ອນຮ່ຳແລ້ວ    ສຸຣິເບດສູບແສງ
ຈັບໂທທຽວຣາສີ    ສ່ອງພຣະແຂໄຂແຈ້ງ
ຈອນແພງຜູ້    ສີທົບນິທເບັ້ງ
ສາວສນົມໜຸ່ມເຝົ້າ    ບາທ້າວປຽນບານ
ຕາມກະບິນເບື້ອງ    ບູຣິມກະສັດໄທ່ງ
ບໍ່ໃຫ້ເຂີນຂາດຂ້ອນ    ຮາມຮ້າງຢ່າງໃດ ເຈົ້າເອີຍ
ບຸດິກາໄວ້    ສີທົບທົງຮາດ
ກໍຫາກແລ້ວທໍ່ນີ້    ໄປໜ້າຊິກ່າວພານ ກ່ອນແລ້ວ ໆ

● ບັດນີ້ຈັກກ່າວເຖິງ    ກະໄທຊາຍເຊື້ອພານໄພທຸກຂມອດ
ມັນບັ້ນແສນທອດໄຮ້    ເຮືອນນ້ອຍທອດຫິວ

ມະຫາໃຈບແທ້ ຜົວເມັຽມັນກືວ
ບຸ່ງແຕ່ຜ້າຂີ້ລີ້ວ ພໍຫຸ້ມຫໍ່ກາຍ
ມັນບໍ່ມີລູກເຕົ້າ ບານໜີ່ບີງຊາຍ
ທໍ່ແຕ່ສອງຜົວເມັຽ ບໍ່ຖາຍທະລອນເບື້ອນ
ມັນຈິງພາທີກ້ານ ຈາເມັຽແລ້ວສັ່ງ
ບັດນີ້ຂ້ອຍຈັກເດີນດ່ານດ້າວ ດົງກວ້າງຄວ່າຫາ
ລາງເຫື້ອໄດ້ ບໍ່ບາກບີບງາ
ເປັນຂອງຄຸນ ເຄື້ອງປຸນປອງເຈົ້າ
ຈິງໃຫ້ເບິາໃນຫ້ອງ ເຮືອນເຮົາຄອຍພີ
ຢ່າໄດ້ມີໂລບລ້ຽວ ຫຼາຍຊູ້ເຊື້ອງເຊີງ
ຫຼອນເລົ້າມີຄວາມຮ້າຍ ແນວໃດໃຫ້ນ້ອງເບີງ
ຢ່າໄດ້ປະປ່ອຍຖິ້ມ ເຮືອນຢ້າວແຫ່ງເຮົາ
ພີ່ຈັກຜັບຜາຍເຂົ້າ ໄພພະນອນແນວປ່າ
ດັ້ນດຸ່ງຜ້າຍ ຫາເນື້ອນັ່ງເມີຍ
ຢ່າໄດ້ລືມໄລອ້າຍ ຫາຍເທີຍເປັນອື່ນ
ພີ່ຈັກຄືນຄອນນ້ອງ ມີຊ້າຕ່າວມາ ດອກນາ
ຢ່າໄດ້ມີນານກ້ອງ ໂອຄາບັງບຽດ
ນ້ອງຢ່າໄດ້ເດືອດຮ້ອນ ຮຸນຮ້າຍພ່າຍໜີ
ການພີ່ເດີນດົງດັ້ນ ຫຼາຍວັນຊີຄືນຄອນ
ຢ່າໄດ້ຕອມກອຍເສົ້າ ເດີເຈົ້າຈິງຢູ່ດີ ນ້ອງເອີຍ
ເມື່ອນັ້ນເມັຽມັນຕ້ານ ຂານຂອບຄຳຜົວ

ສັງຊິໄລຕົວນ້ອງ ໜີໄປປະປ່ອຍ
ໃຜຊິມາປູ່ບັ້ງ ບຳຂ້ອຍຄ່ຳແລງ
ຂ້ອຍຂໍໄປຕາມເຈົ້າ ຜົວແພງເປັນເພື່ອນ
ເປັນຜູ້ຖືຫໍ່ເຂົ້າ ບຳເຈົ້າຄຸ່ງໄພ
ລາງເທື່ອຜົວແພງໄຂ້ ໃຜຊິໄປປົວປິ່ນ
ໃຜຊິຫາເຂົ້ານ້ຳ ມາໃຫ້ສູ່ກິນ
ໃຫ້ຄ່ອຍໄປດີຖ້ອນ ສາບສມອນທົມຂົນ ອວນເອີຍ
ຄັນແມ່ນເຈົ້າໄປແລ້ວ ໃຫ້ຮີບຕ່າວຄືນມາ
ຢ່າໄດ້ໄປນານຫຼາຍ ໃຫ້ຕ່າວມາຫານ້ອງ
ຄ້ອນວ່າສອງສັ້ງແລ້ວ ດາຫານເຮວລົງ
ມືບາຍຖົງ ພ່ອງທະນູບຳເນື້ອ
ແນງຫົນຫ້ອງ ຫົມພານພອບຄູ່
ຫຼົ ງລ່ຳເນື້ອ ບຳຫ້ວຍຮ່ອມພູ
ກໍບໍ່ ມີພານພົບ ໝູ່ຄະນາແນວເນື້ອ
ມັນກໍເດີນດົງຜ້າຍ ຜາຍໄປໜອບສ່ອງ
ກໍບໍ່ເຫັນຮ່ອມເບື້ອງ ຮອຍເນື້ອທ່ອງທຽວ
ທໍ່ແຕ່ຕົນດຽວຄັ້ນ ໄພສົນແສນຍ່ານ
ຝູງໝູ່ສັດບໍ່ພໍ້ ພານເຖົ້າຫອດຫົວ
ຫຼາຍວັນເຖິງ ຂອບຊົນເຊົາບັ້ງ
ຫຼົ ງດູສະພັງນ້ຳ ນະທີວັງເວີນແກວ່ງ
ນ້ຳບວກບູ້ ບານຄ້ອຍຄ່ຳແລງ

ທີ່ນັ້ນເປັນແຫ່ງຫ້ອງ　　ພຍານາກເນົາບານ
ດູດະການສຸດ　　ຊີ້ວຕາເຕັມຢ້ຽມ
ຕັ້ງວ່າໃສສະອາດຜ້ຽງ　　ພຽງດັ້ງສຸບັນທາ
ປະທຸມມາບານ　　ແບ່ງສີສັນແຕ້ມ
ມີຫັ້ງຈັ້ງກອນແກ້ວ　　ອຸບົນບານເຣືອ
ຫຼາຍສ່ຳເຊື້ອ　　ບົວແກ້ວກ່າຍລຳ
ປຸນດະຣິກາກ້ານ (ດອກບົວຊນິດນຶ່ງມີ ສີຂາວ) ໂກວໃບຍາມຄ່ຳ
ປາງເມື່ອລົມລ່ວງຕ້ອງ　　ຫອມຊະບັ້ນທົ່ວທາງ ເຈົ້າເອີຍ
ຖັດນັ້ນພານກໍເຂົ້າແຫບໃກ້　　ເຖິງທີ່ສະພັງພຽງ
ປົງຂອງປຸດ　　ປູ່ຄຽງແຄມນ້ຳ
ພໍຄາວແຄ້ນ　　ຫາຍແຄວນຄ້ອຍຄ່ຳ
ພານຈອດຍັ້ງ　　ໃບຫັ້ນຫອດທົວ
ຍາມນັ້ນຍັງມີນາໂຄເຈົ້າ　　ພຍາຫຼວງນາກໃຫ່ຽ
ເຫັນທ່ານໄທ້　　ພານເນື້ອເນັ້ງນອນ
ນາກກໍຈອນຈາກນ້ຳ　　ນຳແຄ່ແຄມສະ
ເຖິງນາຍພານ　　ກ່າວຈາຈິງຕ້ານ
ທ່ານບໍ່ເນົາເຂດດ້າວ　　ແດນເທດທາງໃດ
ດົນດຽວເດີນ　　ດຸ່ງໄພມານີ້
ມີປະສົງສັ້ງແທ້　　ເດີນດຽວດັ້ນດຸ່ງ ມານີ້
ເຊີນບອກໃຫ້　　ພໍຮູ້ຮ່າງຄວາມ ແດ່ຖ້ອນ
ເມື່ອນັ້ນນາຍພານຕ້ານ　　ຂານຕອບນາໂຄ

| | |
|---|---|
| ຂ້ອຍນີ້ເປົາເປັງຈານ | ເພື່ອສແວງຫາເນື້ອ |
| ຫຼອນເລິງໄດ້ | ບໍບີນບໍາຈ່າຍ |
| ໝາຍສືບເຊື້ອ | ຊີວັງໃຫ້ຫ່າງໄພຍ |
| ເລີຍຫຼ ງດ້າວ | ໂດຍດຽວດູປ່ຽວ |
| ຫາເພື່ອນພ້ອງ | ພໍເວົ້າກໍບໍ່ມີ |
| ທ່ານນີ້ລຸກແຕ່ດ້າວ | ແດນທີບໃດມາ |
| ເມື່ອນັ້ນນາໂຄໄຂ | ຂ່າວຄະດີດູແຈ້ງ |
| ເຮົານີ້ເປັນນາກນ້ຳ | ເປົາແຫ່ງຊີລທີ (ແມ່ນ້ຳທີ່ໄຫຼ) |
| ມີເວນຫຼັງ | ລູກແພງພອນບ້ານ |
| ເພື່ອວ່າຂີ ນີຮ້າຍ | ນາງມານເປົ້າປ່າ |
| ກິນລູກນ້ອຍ | ເຮົາໃຫ້ຫ່າງຄີງ ທ່ານເອີຍ |
| ເຮົານີ້ວິໂຍກແຄ້ນ | ຍິນໂສກແສນສະຫັດ |
| ເຈັບເພື່ອມານມັນແຂງ | ຂີນເຫັງເຮົາໄດ້ |
| ເຮົາກໍຫວັງກັດກ້ຳ | ຫີນມັນມີປ່ອນ |
| ບັງບໍ່ແລ້ວທີ່ແມ້ງ | ເຄືອງຂ້ອງຂອດຂລັງ ທ່ານເອີຍ |
| ເທື່ອນີ້ທ່ານກໍເດີນດຸ່ງດັ້ນ | ດີງໃຫ່ງມາເຖີງ |
| ຂໍກູນາ | ເພີ່ງບຸນຍານແຄ້ນ |
| ແມ່ນຍັກດັບພຣະຂັນມ້ຽນ | ນໍຣະນານ້ອຍນຶ່ງ |
| ຄຸນກິ່ງແກ້ວ | ພັນຕື້ບໍ່ລືມ ທ່ານເອີຍ |
| ລືທ່ານຄືດໃດ່ໄດ້ | ດວງຍອດມະນວັນ ກໍດີ |
| ຂ້ອຍຈັກກອຍໃຈຫາ | ຕອບແທນທານເກື້ອ |

ຫຼື ຫາກມີປະສົງສ້າງ ສິງຄານຄາຣະວາດ
ຂ້ອຍຊິຂານຄາດຕັ້ງ ຕາງເຈົ້າຊູ່ອັນ
ເມື່ອນັ້ນນາຍພານໄດ້ ຍິນຄຳຊົມຊື່ນ
ມັນກໍຕົກແຕ່ງຕັ້ງ ທະນູຂຶ້ນຄາດສາຍ
ແລ້ວຈຶ່ງນາຍພົກຊຸ້ມ ທັນທີທາງມານ
ມະໃນໃນໝາຍ ກົ່ງທະນູຄອຍຈ້ອງ
ພານກໍມອງມານຮ້າຍ ໝາຍບົງຫຼື ໆລ່ຳ
ຍາມນັ້ນວັນຄ່ຳຄ້ອຍ ນົວມ້ອຍມືດແສງ
ຍັກກໍແບງບັງກ້ຳ ທາງທຽວເຄີຍທ່ອງ
ເຖິງແຫ່ງຫ້ອງ ພຽງຊຸ້ມບ່ອນພານ
ມັນບໍ່ມີລະວັງແທ້ ທາງທຽວເຄີຍທ່ອງ
ພານບໍ່ຊ້າ ປືນບ້າວບ່ຽວຍິງ
ປືນຕຳຕ້ອງ ຕົວມານລົ້ມຖ່າວ
ມັນກໍດ່າວ ໆ ດີ້ນ ດານ້ວຍນອດຊີວັງ ແທ້ແລ້ວ
ພານບັງຫວຍທະນູເປື້ອງ ຍິງໄປສອງເລົາ
ປືນສອດເນື້ອ ເລີຍລົ້ມຖ່າວຕາຍ
ມັນກໍວາຍຊີວັງມ້ຽນ ໃນດອຍດົງໃຫຍ່
ບັດນີ້ສຸທິແນ້ງ ຄຳຮ້ອນສວ່າງໃຈ
ເມື່ອນັ້ນພານໄພຕ້ານ ຈານາກນາໂຄ
ດາວນີ້ຍັກກໍເສັຽຊີວັງ ຄອນເວນວາງດ້າວ
ຈິດນາກຫ້າວ ຊົມຊື່ນຍິນດ

ຄຸນສະຫາຍນີ້ ມາກມາຍເຫຼືອລົ້ນ
ເປັນໃຈຂ້ອຍ ຂຶງມະໂນນຳສວ່າງ ເສັ່ງແລ້ວ
ທັງບອກນ້ຳ ວັງກວ້າງສວ່າງໃຈ ທ່ານເອີຍ
ນາກກໍມວນມອບໃຫ້ ສັພສິ່ງເງິນຄຳ
ກັບທັງແຫວນທັມມະໂຣງ ລູກແພງພໍລ້ານ
ເງິນຄຳເຂັ້ມ ຫຼາຍປະການມວນມອບ
ເງິນສີລ້ານ ບໍ່ໃຫ້ຕອບຄຸນ
ເມື່ອນັ້ນພານໄພຜູ້ ຍິນດີດອມສ່ຽວ
ແລ້ວຈິ່ງຕ້ານສັ່ງເສື້ອ ສະຫາຍນ້ຳນາກຄຳ
ບັດນີ້ເຮົາຈັກຄອຍຄືນກ້ຳ ເມືອເຮືອນຣາມເພື່ອນ ກ່ອນແລ້ວ
ທ່ານຈິ່ງເອື້ອນປະກອບເກື້ອ ການກວ້າງປູ່ເປັນ ແດ່ຖ້ອນ
ຖັດນັ້ນນາກກໍເອີ້ນສັ່ງເຈົ້າ ຈອມເກດໃຈຕາມ ຂ້ອຍເອີຍ
ຍາມເມື່ອການເກີຂວາງ ໃຫ້ຄ່ອຍຄືນມານີ້
ຄັນທ່ານມີປະສິງແທ້ ໃດເດດວ່າ ມາຖ້ອນ
ບໍ່ມີໃຫ້ຄັ່ງແຄ້ນ ເຄືອງຂ້ອງຮ່ອນໃດ
ຄ້ອນສັ່ງແລ້ວ ພານພາກເດີນດຽວ
ຫຼາຍວັນຂຽວ ຂອບພູພິງໄມ້
ກໍຈິ່ງໄປເຖິງເຈົ້າ ຈອມມູນີໃນເຖື່ອນ (ນັກບວດແບບສາສນາພຣາມ)
ພານກໍເອື້ອນຍາກຍ້ຳ ນຳເຈົ້າພຣະຣັດສີ
ພໍເມື່ອຣາຕີແຈ້ງ ພານໄພດັ້ນດຸ່ງ
ເຈັ່ງຣະຈາກເຈົ້າ ຈອມສ້ອຍພຣະບອດທັນ

ມັນກໍນຳທາງເທົ້າ　　　　ສະພັງພຽງພື້ນແອ່ງ
ດູສະອາດນ້ຳ　　　　ນອງບ້າແບ່ງຊິນ
ມີໝູ່ອຸບິນຊ້ອນ　　　　ບານຊອນກ້ານກ່ອງ
ນິລອອງເກດແກ້ວ (ດອກບົວຂຽວ)　ຫອມເຣົ້າຣ່ວງຣະດູ
ສອງຕາບຂ້າງ　　　　ມີໝູ່ມະລິວັນ
ຈັງກອນຈັບ　　　　ສິງຊອນຣະດູຮ້ອນ
ຫຼິງດູສາຄອນນ້ຳ　　　　ນອງກະແສໃສສ່ອງ
ມີໝູ່ຈັກກະພາກເຕົ້າ (ນົກກິນປາຊະນິດນຶ່ງ)　ຕອນຫຼິ້ນລຽບສະພັງ
ສັພສັນເຊື້ອ　　　　ຊຸມແຊງຄຳກ່ານ
ຫົງຫ່ານນ້ຳ　　　　ນາງຂ້ຂອນກະສາ
ເຂົາກໍລີງລອຍຫຼິ້ນ　　　　ຊີລທາຫຽວທ່ອງ
ບານເມື່ອລົມລ່ວງຕ້ອງ　　　　ລະອອງກົ້ວກິ່ນໄກ　ເຈົ້າເອີຍ
ເມື່ອນັ້ນພານໄພເຂົ້າ　　　　ຫືນໜາມລີ້ປູ່
ຝູງໝູ່ໄພນໂດກຮ້ອງ　　　　ຮຽກໄມ້ເມື່ອແລງ
ເປັນທີ່ບິນຊະອອນແມ້ງ　　　　ນະໂນພານພອນເມື່ອນ
ມັນກໍຄຶດອ່າວໂອ້　　　　ຄະນິງແກ້ວນິງເມັງ
ໂອນໍປານນີ້ເມັງຂວັນຂ້ອຍ　　　　ຊີກອນທາງຫຼີງລ່ຳ　ແລະນໍ
ຄ່ຳມືດນ້ອຍ　　　　ນາງນ້ອຍຊີປູ່ໃສ
ບານເຂົ້າບ່ອນ　　　　ໃຜຊີເປັນເພື່ອນຈາ
ຄ່ຳແລງມາໃຜຊີເປັນຜູ້ເວົ້າ　　　　ນຳເຈົ້າດັ້ງພີ່ຊາຍ
ໃຜຊີນາຍແຂນນ້ອງ　　　　ບານເປັນປ່າງປ່ວຍ

ໃຜຊິມາຊ່ວຍອຸ້ມ ເອົາເຈົ້າເຂົ້າບ່ອນນອນ ນ້ອງເອີຍ
ຄຶດເມື່ອຮຽນຮຽງຊ້ອນ ຊິນນາງນອນພ່າງ
ພີ່ບັງພີ່ຜ້າຕຸ້ມ ຕົວນ້ອງຫົ່ມໜາວ ພີ່ນາ
ຄາວເມື່ອຍູງຍອງຮີ້ນ ກິນນາງອ້າຍກໍໄລ່
ບັດນີ້ໃຜຊິມາກອດນ້ອງ ປະຄອງໄວ້ດັ່ງພີ່ຊາຍ ນ້ອງເອີຍ
ຍຸຕິນັ້ນ ພານພອຍພາກຄູ່
ຕໍ່ແຕ່ນີ້ ເມື່ອໜ້າຊິກ່າວນາງ ເຈົ້າເອີຍ ໆ

● ບັດນີ້ຈັກກ່າວກ້ຳ ນາງນາດມະໂນຣາ ກ່ອນແລ້ວ
ນາງນັ້ນເນົານະຄອນຂວາງ ເຂດພູພະນັງໄມ້
ເປັນແນວເຊື້ອ ພຍາໄກແກ້ວກູ່
ປຸນດັ່ງສາວປູ່ຟ້າ ພິມເລັ້ມເລືອກລິງ
ຫຼີ ໆດູເກສາເຫຼື້ອມ ປຸນເທົາຫຽນເກິງ
ສອງພຣະເນດນ້ອຍ ຄີນຄິ້ວຄ່ຽນໄຫຼ
ສີໃສເຫຼື້ອມ ພຣະຈັນເພັງມື້ສິບສີ່
ສີອ່ອນກ້ຽງ ພຣະກາຍແກ້ວເກິງເຫຼົາ
ດັ່ງຫາກຮອງ ໆ ໃສ ລູກແມນເມືອງຟ້າ
ແຂນຂາສ້ວຍ ກະສວຍທອງປ້ອງອ່ອນ
ນິ້ວແລນເລັ້ມ ຫຽມປັ້ນແປກປຸນ
ປາງເມື່ອນາງເນົາເອ້ ເອົາກະໂຈມຄາດເຄື່ອງ
ມີທັງຫາງປີກພ້ອມ ຄືຊິຟ້ອນພ່ອງບິນ

ດູດັ່ງປັກສິບແກ້ວ　　ສຸວັນຫົງເຫີນຫ່ອນ
ເປັນທີ່ຊາວເຫດຫ້ວງ　　ຫວງສະບັ້ນເນື້ອແລ
ຕັ້ງຫາການກະດັດແຫ້　　ຊາຍຊອນສນິ້ງເນື່ອຍ
ຄືຊິປິດປາດບ້ອຍ　　ໄຫຼເລື້ອຍລັ້ງລິງ
ພາກບຶ່ງເປັນດັ່ງແລເລງປ້ຽມ　　ດວງພຣະແຂໄຂກາບ
ຣັສມີສ່ອງແຈ້ງ　　ປະກາຍເຫຼື້ອມລັ້ງແສງ
ແມ່ນຊິແສນສາວຊັ້ນ　　ຊຸມພູການໂລກ ເຮົາບໍ່
ລືຫ່ອນພໍພາກສ້ຽວ　　ສເນີເຈົ້າແຈ່ມພຣະຈັນ ໄດ້ເດ
ອັນວ່າປົກກະຕິບ້ອຍ　　ມະໂນຣາລູກນີງ
ມັກໃຄ່ລົງອາບນ້ຳ　　ລອຍຫຼີ້ນລ່ວງສະພັງ
ນີວັນເວັ້ນ　　ຕະເດີ້ນດົງບິນແອ່ວ
ຫາດອກໄມ້　　ເນື້ອຊ້ອນເສບລະອອງ ເຈົ້າເອີຍ
ບານເນື້ອອາທິດພົ້ນ　　ແສງສ່ອງພະຄັນທອນ ພຸ້ນເປີ
ມະໂນຣາເຕີນສາວສີ　　ແອ່ວບິນບິນດ້າວ
ເຈັດສາວເຊື້ອ　　ຣະວັງອົງອວານແອ່ວ
ເຖິງຍ່ານນ້ຳ　　ສະພັງແລ້ວລ່ວງລົງ
ຫຼີງດູຍາບ ໆ ຍ້າຍ　　ສາວເທພກິນນະຣີ ພຸ້ນເປີ
ຄືຄູ່ຫົງຄຳເຫີນ　　ຫ່ອນລົງສະພັງແກ້ວ
ເຈັດນາງພ້ອມ　　ພາກັນຫຼີ້ນມ່ວນ
ບາງພ່ອງຫວາຍຫຸ່ມນ້ຳ　　ນອງຟົ້ງຟັ້ງສະເທືອນ
ບາງພ່ອງພຽນສະເກົ້າ　　ກາງຊົບຊອມຣູບ
ລົງລູບລ້າງ　　ກາງນ້ຳລ່ອງລອຍ
ເຈັດນາງນ້ອຍ　　ຫົວແຊວຊື່ຊວ່າ

ຊົມຊື່ນຫຼິ້ນ ສະພັງກວ້າງຫວັ່ນໄຫວ ແທ້ແລ້ວ
ເມື່ອນັ້ນພານໄດ້ຍິນສຽງເວົ້າ ຫົວເຊວຊົມຫຼາກ
ຜິດປລາດລ້າ ໃຜຫຼີ້ນລ່ອງສະພັງ ນີ້ເດ
ກ້ອມຄຶດແລ້ວ ພານພ່ຳພອນດູ
ເຫັນນາງແມນ ເມື່ອນມະໂນຄາແຄ້ນ
ສົນສເລົາຍ້ຽງ ຈັບໂຫເຖິງອາດ
ພານລ່າວລົ້ມ ລືມເນື້ອນັ່ງມອງ
ຈິດສວາດກັ້ນ ກາຍເກີດຄວນຕລົບ
ລືອາດຫົງຕົນຕິດ ອ່ອນລະຫວຍທັງເນື້ອ
ມະໂນໃນຄຸ້ມ ຄືເປັນບ້າປ່ວງ
ປະປ່ອຍຜ້າ ລືມເນື້ອຫຼ່າວຫຼົງ
ຈັກວ່າຫຼັງຫຼືຫນ້າ ພານໄພພອນສັ້ນ
ນັບຈິງເນື້ອນວາດໄວ້ ຄືນເຂົ້າຂານພຣະຄຸນ
ກັບເຖິງເຈົ້າ ຈອມຣັດສີດູແລງພາກ
ຂໍພຣະຊີ້ຣ່າງຂ້າ ຄົນໄຣ້ຫອດກະຫາຍ ແດ່ຖ້ອນ
ຂ້າກໍເດີນດົງຜ້າຍ ເຖິງສະພັງໄພໃຫ່ງ ພາຍພຸ້ນ
ດູຫຼາກລ້ຳ ລອນພ້ພານຄະດີ ພຣະເອີຍ
ບັ້ງມີເຈັດສາວເຊື້ອ ຊຸມໄດເດີນຣອດ
ຣູບຣ່າງອ້ວນ ອໍຣະອີ້ງອິນດາ
ລົງຫຼີ້ນນ້ຳ ນອງທຸ່ມຫວາຍຫາງ
ຈັກວ່ານາງຄົນຫຼື ລູກແມນແຖນຟ້າ
ດູດັ່ງສະພັງຍ້ຽງ ຄືນະຄອນອິນທະຣາດ
ຂໍໃຫ້ພຣະບາດເຈົ້ງ ຈາແຈ້ງຂ່າວຄະດີ ແດ່ຖ້ອນ
ເມື່ອນັ້ນພຣະຣັດສີຕ້ານ ໄຂຄຳຊີ້ຣ່າງ

ບາງບັ້ນລູກພຣະເຈົ້າລຸ່ມຟ້າ ໄກແກ້ວແກ່ວໄກ
ຊື່ວ່ານະໂບຣາໄທ້ ສາວສວັນລືເກີງ
ມີທັງເຈັດກິ່ງແກ້ວ ສາວໃຊ້ສິງກັນ
ເຂົາບັ້ນທັນມະຊາດເຊື້ອ ມີປີກບິນບິນ
ທະຍານເວຫາ ຮອດເຮົາພາຍພື້
ເຂົາກໍທຽວທະຍານຂ້າມ ຄີຣີຫຼາຍລົ້ນ ມາແລ້ວ
ສະເກດເກົ້າ ສະພັງກວ້າງຊູ່ວັນ ທ່ານເອີຍ
ເມື່ອນັ້ນພານເລົ່າລ້ຽວ ລວງໃຈດຫາກິນ
ເຂົາບັ້ນບິນບິນເປັນ ສິງໃດຊິເອົາໄດ້
ເມື່ອນັ້ນຣື ສີໄທ້ ທິງທັນໄຂຂ່າວ
ປຽວວ່າໄດ້ບາດບ້ວງ ແນວທ້າວບາກຄໍາ ບໍ່ຮູ້
ຄັນບໍ່ໄດ້ດັ່ງນັ້ນ ຢ່າອ່າວກະນຶງເຖິງ
ເຂົາບັ້ນທຽມດັ່ງຈັບໂທຫຽວ ທ່ອງພຣະແຂໄຂຟ້າ
ລືອາດເອົາມາໄດ້ ໂດຍຄະນຶງນໍາແອ່ວ
ຄ້ອນວ່າພານຣຸ່ງແລ້ວ ເລີຍແຄ້ນຄັ່ງຫວງ
ມັນກໍລາຈາກເຈົ້າ ຈອມມິງມີຂວາງ
ເຮວພລັນຄືນ ຮອດສະພັງເຊົາບັ້ງ
ມັນຈຶ່ງຮວາຍມົນກ້າ ອາຄົມແລ້ວສ່ຽງ
ເສກໃສ່ນ້ຳ ນອງຟັ້ງຝັ່ງສະເທືອນ
ເລີຍເລົ່າຮ້ອນຮອດທ້າວ ຈິຕບາກໃນສມຸດ
ບາໂຄຄະ ຄາດໂຮງເຮວຮ້ອນ

ນາກກໍໂຄຈອນເຫົ້າ ເຖິງມານພອນກ່າວ
ບັດນີ້ພຣະເພືອນຮ້ອນ ໂຣມຂ້ອນດັ່ງໄດ
ເມືອນັ້ນພານໄພຕ້ານ ຕາມຈິງຈາສ່ຽວ
ເຣົານີ້ກໍບໍ່ ມີກ່ຽວຂ້ອງ ໂຣມຮ້ອນຮ່ອມໄດ

ທີ່ແຕ່ມີປະສິງໄດ້ ດອມສະຫາຍບ້ວງບາດ (ບ້ວງບັກເອງທີ່ເປັນຮູບຕ່າງໆ)

ຂໍສະຫາຍຮາດຄ້າ ຄະນິງເອື້ອອືດູ ແດ່ຖ້ອນ
ເມືອນັ້ນຈິດນາກທ້າວ ມີອາດຂືນຂັດ
ເພາະເພື່ອບຸນພາຍຫຼັງ ແຫ່ງພານພອນຜູ້
ນາໂຄນ້ອມ ນຳນາບ້ວງບາດ
ຂອງຄ່າບ້ານ ວາງໃຫ້ນອນສະຫາຍ
ສິນໝາຍແລ້ວ ພານພາກບາຄາ
ໂຄຈອນເຖິງ (ທ່ຽວໄປ) ປ່າພະນອມແນວໄມ້
ມີນານເຫົ້າ ເຖິງສະພັງພື້ນແອ່ງ
ພານກໍບັງບຽດລີ້ ທືມຫ້ວຍຮ່ອມໜາ
ເມືອນັ້ນມະໂນຣາພ້ອມ ເຈັດນາງລິງອາບ
ແຊວຊວ່າຮ້ອງ ລິງຫຼີ້ ນລ່ອງສະພັງ
ທຸກທີ່ລ້ອມ ນາງນາດມະໂນຣາ
ກີນນະຣີສາວ ລ່ວງລິງລອຍນ້ຳ
ນາງຄານແກ້ວ ນະໂນຣາບັງປູ່
ກຳລັງສະເກດເກົ້າ ນາງນ້ອຍໄປ່ລິງ
ເພາະວ່າຣາຕີນັ້ນ (ກາງຄືນ) ນາງນອນຝັນຫຼາກ

ບາງກໍຟັງວ່າຮວງດອກໄມ້ ກົ້ງວເກດເກສີ
ດວງມະນີໃສ ສອດແຂນຂຶນມ້າວ
ແນ້ງນຶ່ງຟັງວ່າອາກາດກວ້າງ ໃສສ່ອງຣັງສີ
ບາງຄອຍເຫັນ ລ່ຳດູພໍປ້ຽມ
ຟັງວ່າຊິລຫາບ້ຳ ວັງຫຼວງນອງຊຸ່ນ
ບາດຣາດກວັດແກວ່ງນ້ຳ (ພຍາບາກ) ນອງກົ໊ວມືດມົວ
ຟັງວ່າໃບບົວຫຸ້ນ ພັນພຣະກາຍກົ່ງວຫົ່
ໂຣມຣັດກົ່ງວ ບາງນ້ອຍສັ່ນສາຍ
ນະໃນຣານ້ອຍ ສະດຸ້ງຕື່ນກະຊັ່ງຟັງ (ຕື່ນຫັ່ງຟັງ)
ອັນນີ້ມັນຈັກເປັນປະການໃດ ແຫ່ງກູຈິງແທ້
ຍາມນັ້ນນາງຄານແກ້ວ ນະໃນຣາແຄ້ນຄັ່ງ
ກັນສ່ວນສ້າງ ສົມໄວ້ສ່ວນຊີທັນ ແທ້ແລ້ວ
ຄ້ອມຮ່ຳແລ້ວ ຜັດແຜ່ນພື້ນແດງ
ຊິງກາສາ (ຜ້າບາງ ໆ) ແສ່ວບາງນິນພ້ອນ
ແນງຍັງກ້ຳ ອະໃນນາໃສສ່ອງ
ລີງລ່ອງຫຼົ໊ນ ລອຍແລ້ວເລົາຫົວ
ມີທັງເຈັດສາວໃຊ້ ຊຸມກັນກວນແອ່ວ
ຫຼິ ງລ່ຳເນື໊ອ ຄືຟ້າຍອ່ອນລະມຸນ
ນັບວ່າບຸນຕາພ້ ໃພເຫັນຫາຍສວ່າງ
ກາຍກ່ອງຄ້ອມ ງາມສ້ອຍຊູ່ປະການ
ອັນວ່ານາຍພານຜູ້ ປະສົງເອົານາງນາດ

ມັນກໍເຫັນອ່ອນນ້ອຍ　　ມະໂນຄ້ອຍເນື່ອຍນືນ
ຫຼີງຄຸບຕັ້ງ (ບິນ)　　ຈູນຄຳຄ້ອງລັ່ນ
ຍາມເນື້ອນາງລູບໄລ້　　ໃຈເຖົ້າສນິ່ງລີງ
ມັນກໍຈິງໃຈຕັ້ງ　　ຫວັງເອົານາງນາດ
ໝາຍນາດແນ້ງ　　ຊິນຊ້ອນສວ່າງໃຈ
ແນນທໍ່ໄດ້　　ນາງເທບມານີ້ ເນື້ອໃດ
ແສນທຸກນີ້ມາເຖິງ　　ຊິຄ່ອຍພຽນພາເວັ້ນ
ສັງນາງງາມກະດັດເດ　　ມະໂນຣາເຫຼີລ່ຽນ ອວນເອີຍ
ອີກພີແລລ່ຳນ້ອງ　　ຂວັນໄຂ້ຊີຂາດດອນ ແລ້ວນາ
ເຈົ້າຜູ້ຈອມພຣະຈັນຂຶ້ນ　　ບິວຣະພາເຮືອງໂລກ ອີຣຽມເອີຍ
ອິດພໍ່ໃສສ່ອງແຈ້ງ　　ແບງຮູ້ຮອດພີ່ຊາຍ ແດ່ຖ້ອນ
ໂອບໍສັບໄດໄດ້　　ນາງແນບມາຮ່ວມ ຮຽງນໍ
ເຊີນນ້ອງລອຍລ່ອງເຂົ້າ　　ມາໃກ້ຈິ່ມພີ່ຊາຍ ແດ່ຖ້ອນ
ຍາມນັ້ນສາຍສມອນແກ້ວ　　ໂສມສະອາດມະໂນຣາ
ບໍ່ມີອາໄລຄຶດ　　ວ່ານາຍພານຄ້ອງ
ເພາະເພື່ອເຄີຍລີງຫຼົ້ນ　　ຫຼາຍທີປາງກ່ອນ
ມະໂນຣາດນ້ອຍ　　ບໍ່ມີຮູ້ເນື້ອຖີງ
ທຸກທີ່ພ້ອມນາງ　　ເທບກັລຍາ
ລີງສະພັງຫວງ　　ລ່ອງລອຍໃນນ້ຳ
ນຳແນມເຈົ້າ　　ມະໂນຣານາງນາດ
ຕັ້ງຫາກງາມນິ່ງນ້ອຍ　　ຍາມຍ້າຍຍ່າງເຊີງ

ບາງກໍກົ້ມເກດເກົ້າ ສະສ່ວຍຄີງຂາວ
ພໍດີລອຍ ລຽບສະພັງຊມພົ້ວ
ນືຫວາຍກ້ານ ກຸບດະລີແລ້ວຫ່ວງ
ເດັດດອກໄມ້ ຊມແລ້ວເລົາຫິວ
ແຕ່ນັ້ນພານກໍຄວາເຄ້ຽງຄົ້ມ ປາສັງບ້ວງບາດ
ບ້ວງພາດກ້ຽວ ແຂນນ້ອຍບາຖແພງ
ພານກໍດີໃຈແນ້ງ ນະໂບນາຍມີລາບ
ມັນບໍ່ຊ້າ ເຣວຣ້ອນຣອດບາງ
ຈັບເອົາໄດ້ ນະໂບຣາເລົາລ່ຽບ
ບ້ວງບາດຄ້ອງ ຖາເຫ້ນແນບກາຍ
ເມື່ອນັ້ນສາຍສມອນແກ້ວ ເຫັນພານຢ້ານສັ່ນ
ໃຈກະສັນດັ່ນດົ້ນ ດາດ້າງດັ່ນແດ
ຂໍາເຂືອກຂ້ອນ ເຊັງແຊ່ໃນສະພັງ
ຝູງໝູ່ບໍຣິວານເຂົາ ດີ້ນດິນຕາຍກະດ້າງ
ເລີຍທະຍານແນ້ງ ເວຫາເຫາະຫ່ອນ ໄປແລ້ວ
ປະປ່ອຍເຈົ້າຕີວຊ້ອຍ ແພງລ້ານປູ່ດຽວ
ພານຈຶ່ງຈັບເອົາບ້ວງ ໃນແຂນບາງບາດ
ມັນກໍໝາຍມາດແນ້ງ ເຫັນຂໍ້ຂອບຄຸນ
ບັດນີ້ຄວນກູເອົາບາງແກ້ວ ເມືອເມືອງຖວາຍບາດ ດີແລ້ວ
ເຫດວ່າພູວະບາດທ້າວ ທັງນ້ອງເກີງກັນ
ຄ້ອນຮໍາແລ້ວ ຈານາດບາງສວັນ

ພີ່ຈັກເອົາບາງເມືອເມືອງຫຼວງ    ປູ່ກະເສີມສິມສ້າງ
ລືວ່າສີທົບທ້າວ    ທົງເມືອງບົດບົ່ງ
ພີ່ຈັກເອົາກົ່ງແກ້ວ    ຖວາຍໃຫ້ເທພຖຸບ ນ້ອງເອີຍ
ເມື່ອນັ້ນບາງບາດຕ້ານ    ຈາຕໍ່ນາຍພານ
ຂ້ອຍບໍ່ມີຂືນຂັດ    ຊິຄ່ອຍຕວຍຕາມເຈົ້າ
ເອົາແຕ່ບຸນເພຟຸ້ນ    ພາຍພຣະອວນລ້ຽງລ່ຳ ດູຖ້ອນ
ແຕ່ວ່າເຈົ້າຢ່ຳຕ້ອງ    ຄືງຂ້ອຍຂາດຊີວັງ ທ່ານເອີຍ
ເມື່ອນັ້ນພານກໍມີໃຊໄດ້    ມະໂນຣາບາງບາດ
ມັນກໍຄຶດສລາດຮູ້    ບໍ່ມີຕ້ອງຕ່ອຍບາຍ ແຫ້ແລ້ວ
ແຕ່ນັ້ນບາງກໍຟູມຟາຍໄຫ້    ເຫຫວງກົ້ງເກື່ອນ
ຊິລເບດນ້ຳ    ນອງລົ້ນເລື່ອນໄຫຼ
ມະໂນຣາໄຫ້    ທົງສີໃສສະອາດ
ບາງບາດນ້ອຍ    ຄະນິງແກ້ວແມ່ຕົນ
ມີແຕ່ທົນສະແດົ້ນ    ໂສກາກັ້ນໂສກ
ອົກອົ້ງເສົ້າ    ພຣະບາງເຈົ້າເມື່ອຍລົງ
ຈົງໃຈຄຶດ    ບໍ່ລືມຍາມນ້ອຍ
ໂອນໍປານນີ້ມານດາຂ້ອຍ    ຊິຄອຍຫາງຫຼົງລ່ຳ ລະນໍ
ເຈົ້າຊິຮ້ອງຮ່ຳໄຫ້    ຫານ້ອຍຢູ່ດັ່ງໃດ
ສັງມາເຫຼືອໃຈເດ    ໜີມາບໍ່ໄດ້ສັ່ງ
ເຈົ້າຊິໄປຢູ່ຢັ້ງ    ຄອຍຂ້ອຍຢູ່ໃສ ແມ່ເອີຍ
ບັດນີ້ເວນວຽນກ້ຽວ    ໄກກັນໃຫ້ເຫີນຫ່າງ

ລູກຊິພັດພາກຂ້າງ ຈອມເຈົ້າຈາກໄປ
ຊິໄດ້ໄກນາງດາ ຫ່າງເຫີນຫາຍໜ້າ
ລູກຊິໄລລາແກ້ວ ສອງພຣະອົງພໍ່ແມ່
ລູກຂໍນ້ອມເກດກົ້ມ ວອນໄຫວ້ແດ່ໄກ ແດ່ຖ້ອນ
ໃຫ້ຄ່ອຍຢູ່ດີເຢີ ບິດຸເຣດໃຫ້ຫັງກະໂອກເຂົາຂາມ ຂ້ອຍເອີຍ
ລູກຈັກເອົາຕິນຕິກ ຕ່າງແດນໄກເຈົ້າ
ກັບທັງນາງດາເຫງົ້າ ຈອມພຣະຄຸນຍັ້ງຂມ່ອມ ອວນເອີຍ
ບັດນີ້ວິບາກເບື້ອງ ບຽນຂ້ອຍຫ່າວຕາຍ ແລນາ
ຄ່ອຍຢູ່ດີເຢີສຸວັນນະເຫັມຫົນຫ້ອງ ພູເງິນໄກຣາດ ກູເອີຍ
ບັດນີ້ນ້ອງຊິໄດ້ໄກຫ່າງຫ້ອງ ໄກເຈົ້າບໍ່ເຫັນ ລະນໍ
ຄ່ອຍຢູ່ດີເຢີຜາສາດແກ້ວ ກະດິງກ່ອນນຸງນະບີ ກູເອີຍ
ນ້ອງຊິຣານເນົາບອນ ເປົ່າເສັ້ຽງສູບເສົ້າ
ກັບທັງສະພັງເຫົ້າ ຊິລຫີຫຽວທ່ອງ
ນ້ອງເຄີຍສະເກດເກົ້າ ລົງຫຼິ້ນຊູ່ວັນ
ເຄີຍໄດ້ທວາຍຫົງກ້ານ ດວງຫອມເຫີນແອ່ວ
ເຄີຍໄດ້ເບື້ອງປີກຄ້ອມ ຄອຍເຈົ້າເທື່ອຊິເມື່ອ
ບັດນີ້ເວຣາຮ້າງ ຣານກັບກົ້ວກິນ
ຍາມເມື່ອນ້ອງຈາກເຈົ້າ ເລີຍຊິເສົ້າໜົ່ນໜອງ ລະນໍ
ຄາວນີ້ກັນກະຊັງຂ້ອງ ເຂີນຫວງລືດ່າວ ໄດ້ເດ
ເປັນດັ່ງພານແອ່ວໄດ້ ຄະນາເບື້ອພາກຮັງ
ພາກນັ້ງເປັນດັ່ງປັກຂີຮ້ງ (ສັດມີປີກນົກ) ຮານພອຍພາກຄູ່

ນ້ອງຂໍຕ້ານສັ່ງຂໍ້ ຄຳແນ້ງແຕ່ໄກ ແດ່ຖ້ອນ
ນັບແຕ່ນາງຫອດໄຫ້ ກັ້ນສວາດວາງຂວັນ
ຄືດັ່ງສຽງຊະນີໄຫຍ ຮຸ່ງພະນອນນຳຊູ້ (ປ່າໄມ້)
ເມື່ອນັ້ນພານໄພຜູ້ ພານາງເດີນດຸ່ງ
ຈູງແຈ່ມເຈົ້າ ພະເນຜ້າຍຜ່າດອຍ
ຂວ້າມຍ່ານໄມ້ ເມີນເມກເຂົາຂຽວ
ມີທັງຜາຊັນສູງ ຮ່ອນພະນັງແນວໄມ້
ຟັງບິນສຽງໃສ່ຮ້ອງ ສະກູນາໃນເຖື່ອນ ພຸ້ນເປີ
ມະໂນຣາດຖຸ້ມ ຄືນ້າບິນກະຫາຍ
ພໍເມື່ອວັນສອດໄມ້ ນົວມືດເສັງແສງ
ພານກໍພານາງພັກ ຜ່ອນແຮງຮ່ອນເສົ້າ
ມັນກໍຫຼີງໂສມເຈົ້າ ມະໂນຣາລືນຮຸ່ງ
ຮັກຮູບນ້ອງ ນອນຖຸ້ມຄ່ອຍຄະນິງ
ອາເພດຮ້ອນ ຮອນຖຶກສອນສແວງ (ຖຶກລູກສອນ)
ຄືຄູ່ຄອຍດາວດາຍ ລ່ຳເລີງເລີນແຈ້ງ
ເມື່ອຈັກແຍງຂືນຕຸ້ນ ກວາຊີວັງນາງນາດ
ເປັນແຕ່ກັ້ນສວາດໄວ້ ມະໂນເອົ້າອັ້ງກະສັນ
ພານກໍທົນຫວງກັ້ນ ໃຈຈາວຈິດຫຼ່າ
ກູນີ້ເລີງວ່າຫວງຮູບໄວ້ ວາງປ້ອງແກ່ພຣະອົງ ແລະນໍ
ຫຼື ຈັກແກ້ຍ່ອນນ້ອຍ ຄືນຂອບນະຄອນຫຼວງ ທີ່ພຸ້ນ
ລືຈັກເອົາອວນເມືອ ນອນພຣະເມືອງເມີນແຈ້ງ

ເມື່ອນັ້ນນະໄບພານແຄ້ນ ປຸນເປັນສອງພາກ
ດີທີ່ກູຂານເກົ້າ ນຳເຂົ້າຂອບພຣະຄຸນ ຊອບແລ້ວ
ພໍເມື່ອຣາຕີຂ້ອນ ພຣະຄັນທອນທ່ຽວໂລກ ມາແລ້ວ
ພານກໍຈູງແຈ່ມເຈົ້າ ຈອມຊ້ອນລູກແມນ
ລັດລ່ວງຂຶ້ນ ເຂົາມາດເມືອເທິງ
ນະໄບຣາທິວ ອ່ອນຣຸນແຮງນ້ອຍ
ຄຶງແພງຊ້ຳ ໂສກີກ້ວຍບິນ
ວິບາກເບື້ອງ ເໝືອນຊິມ້ວຍເມື່ອຍທວງ
ຄຶດເມື່ອລູກປູ່ບັ້ງ ໃນພຣະຣາດເຮືອນຫຼວງ ທີ່ພຸ້ນ
ລີທ່ອນເຄີຍຄວາມທຸກ ທໍ່ທຸລີລາງຮ້າຍ
ບັດນີ້ປາປັງຮ້ອນ ໂຣມເຖິງແຖນສິງ
ຂໍໃຫ້ເທພທ່ອນຫຼ້າ ຫຼິງປ້ຽນປັ້ງພະຍານ ແດ່ແມ
ຂ້າຂໍມ້ນ ນີ້ເພດພານໄພ
ເຊັ່ງວ່າເປັງຈານຂວາງ ຊອບພຣະຄຸນຄິນນ້ອມ
ຈອມກະສັດສ້າງ ສິນທັມພາຍແພ່
ໂພດແກ່ສັດສ່ຳໄຮ້ ໃຈກວ້າງກ່າວມາ ວ່ານາ
ບັດນີ້ພານໄດ້ແລ້ວ ຊັກຈ່ອງຈູງມາ ນີ້ແລ້ວ
ຄັນວ່າເຖິງເປັງຈານ ໃຫ້ໂພດຣຽນຄິນເສົ້າ ແດ່ຖ້ອນ
ອັນວ່າໂສມສເລົາເຈົ້າ ນະໄບຣາແສນແສບ
ຈິດຫຼ່າເບື້ອ ທັງຟ້າວຟັ່ງກະທາຍ
ຊິລຫາເທົ້າ ສອງແຄນໄຫຼຫຼັ່ງ

ຄຶດເມື່ອໄກຈາກບ້ານ    ຊິນານພໍ້ພໍ່ພຣະເມອງ ແທ້ນາ
ລຸທກາບັ້ນ    ພານໄພໄດ້ອ່ອນ (ພານປ່າ)
ໃບດີກອນໄວ້ທີ່ນີ້    ສາວໃຊ້ຊິຕ່າວເມືອ ກ່ອນແລ້ວ ໆ

● ບັດນີ້ຈັກກ່າວກ້ຳ    ສາວສວ່າງກັລຍາ ກ່ອນແລ້ວ
ເຈົ້າສາວຄືນນະຄອນຂວາງ    ຂອບພຣະຄຸນຄຳແຈ້ງ
ເຖິງເມື່ອຍາມແລງແລ້ວ    ເຈົ້ານາງລົງຄອບ
ຂາບພຣະເຈົ້າແຜ່ນຟ້າ    ໄກກວ້າງກ່າວຄະດີ
ບັດນີ້ເສັງສນອນແກ້ວ    ນະໂບຣາລູກນຶງ ພຣະອົງແລ້ວ
ເພາະເພື່ອພານພູກຄ້ອງ    ເອົາໄດ້ດ່ວນເມືອ ພຣະເອີຍ
ເມື່ອນັ້ນຜູ້ຜ່ານພື້ນ    ຈອມຣາດເຣັ້ງໂບ (ທ້າວພຍາ)
ເຄືອງຄຳຄິດ    ຄອດຟູມຟາງຮ້າຍ
ສູເລົ້າໄປປະນ້ອຍ    ນາງດຽວເດີນດຸ່ງ ສັບນັ້ນ
ກູຈັກຟັນນອດນ້ຽນ    ນີເອື້ອອິດູ ແທ້ແລ້ວ
ສູນີ້ຊອບແຕ່ທີ້ນ    ລືມອ່ອນເອົາໂສນ ແລະບໍ
ພຣະກໍທິນ ໆ ສຽງ    ສນັ່ນໂຮງທິວໄຫ້
ກັບທັງນາດາໄຫ້    ນາງເມືອງດີ້ນດັ່ນ
ຫິວຮອດໄຫ້    ກອບກັ້ນເກືອບກະຫາຍ
ປານນີ້ສາຍໃຈແກ້ວ    ເມືອແຜນພາກແມ່ ລະບໍ
ຂໍລູກເອົາແມ່ນ້ຽນ    ເມືອພ້ອມພໍ່າກັບ ແມ່ຖ້ອນ
ອັນວ່າວິບາກເບື້ອງ    ຣານຂວັນເຂີນອ່ອນ

ປານບັ້ນພານອ້າເຈົ້າ ຕາຍແລ້ວຮູ້ວ່າຍັງ ແມ່ເດ
ອັນນີ້ເປັນແຕ່ປາປັ້ງເບື້ອງ ເວນໃດດາຄອບ
ແມ່ນີ້ຕອມຂອບເສົ້າ ບໍ່ເຫັນເຈົ້າສ່ວນຊິຕາຍ ແມ່ແລ້ວ
ຄ້ອນຈິມແລ້ວ ລົ້ມທ່າວຫວງສລົບ (ລືມຫາຍໃຈ)
ນາງເມືອງນິວ ສແມ່ງມືນລືມເນື້ອ
ຕົນຕົວນ້ອງ ແຂງດາຍດູເປົ່າ
ພຣະພໍ່ເຈົ້າຕົວສ້ອຍ ໂຈມນ້ອງເປົ່າຫົວ
ນາງຈິງລືງຕົນລຸກ ຮຸ່ງຄືງຄອບແຈ້ງ
ຄໍາສແວງຫົ້ນ ສອງພຣະອົງແຄ້ນຄັ່ງ
ນັກສນົມໜຸ່ມພັ້ງ ເພື້ອນໄຫ້ນີນັນ
ປະຣິເວທນາບັ້ນ (ຮ້ອງໄຫ້) ນີທານຫັນກ່າວ
ແລ້ວທໍ່ນີ້ ໄປໜ້າຊິກ່າວນາ ເຈົ້າເອີຍ ໆ

● ບັດນີ້ຈັກກ່າວເຖິງຜູ້ຜ່ານພົ້ນ ທ້າວເທບສິຫົນ ກ່ອນແລ້ວ
ໂຣມພົນໄປຊົມສວນ ຄອບນະຄອນຄວັນກຸ້ມ
ພໍ່ບານບ້າຍ ແບງກະບວນແຫນແຫ່
ມີທັງຂ້າຂາບກຸ້ມ ເຊັ່ງແສ້ສິງສຽງ
ມີນານເທົ້າ ອຸທິຍານສວນດອກ
ຊຸນກໍພັກຈອດຊ້າງ ເຊົາມ້າງນິງເມືອງ
ບານບັ້ນພານພາແກ້ວ ນະໂບຣາລັດລ່ວງ ມາແລ້ວ
ຂວ້ານຂ່ວງຄຸ້ມ ຊຽວເຂົ້າສູ່ເມືອງ

ຝູງໝູ່ຊາວເທດຫ້ວງ ຫັງຫີບຖາມເຖິງ
ອັນນີ້ບາງແນວໃດ ຣູບເຫຼົາຫຼອນແຕ້ນ
ເມື່ອນັ້ນສີຫົນປ້ຽມ ມະໂນຣາລືມເພດ
ສົມສະອາດອ້າງ ອົງອ້ວນດັ່ງຊີບິນ
ມະໂນໃນຫ້າວ ຫົງສະແດີ້ນດັ່ນ
ເພາະວ່າຈິດສວາດນ້ອງ ແລແລ້ວເລົ່າແຍງ
ແຕ່ນັ້ນພຣະບາດໃຊ້ ຊຸບຣີບເຣວເຖິງ
ຫັນພານໄພ ຂານເຣົາດຽວນີ້
ພໍພຣະອົງຕັດຊີ້ ຊຸນເຣວເລີຍລ່ວງ
ເຖິງທ່ານໄທ້ ພານໜ້າກ່າວຄະດີ (ຖ້ອຍຄຳ)
ບັດນີ້ພຣະທ່ອນໄທ້ ຫັນທ່ານເມື່ອເຖິງ ວ່າບາ
ພານກໍພາແພງສີ ຂານພຣະຄຸນຄຳແຈ້ງ
ພຣະກໍຜັດຖຸແລງຖ້ອຍ ຄຳຈິງຈິ່ງບອກ ເຣວເຖີ້ນ
ອັນວ່ານາງບາດໄດ້ ແດນດ້າວທີ່ໃດ ທ່ານເອີຍ ?
ເມື່ອນັ້ນພານນອບນ້ອມ ປະນົມບາດໄຂຂານ (ນົບໄຫວ້)
ອັນນີ້ນາງຄານແກ້ວ ມະໂນຣາໄກຣາດ ພຣະເອີຍ
ນາງນັ້ນທະຍານແຕ່ຟ້າ ລົງຫຼີ້ນອາບສົງ
ຂ້າພຣະບາດໄດ້ ໂດຍບາດບາໂຄ
ແລ້ວຈິ່ງນຳມາຖວາຍ ເພິ່ງບຸນຈອມເຈົ້າ
ເມື່ອນັ້ນສີຫົນຫ້າວ ດີພຣະໄທຊ້ອຍຊື່ນ (ດີໃຈ)
ພູວະບາດຫ້າວ ທຳສະອື້ນອິ່ມຫວງ

ພຣະຈິງຊິງປະທານພ້ອມ　　ໂພຄາມ້ານິງ
ທຸກສິງມ້ວນ　　ບໍໃຫ້ແກ່ພານ
ມີທັງອາພອນຜ້າ　　ແພພັນແສນບຶງ
ກັບທັງເງິນສີລ້ານ　　ຄຳເຂັ້ມສີແສນ
ທາສາຂ້າ　　ເງິນຄຳນັບໝື່ນ
ພຣະບາດໃຫ້　　ພໍຣ້ອຍແກ່ພານ
ຖັດນັ້ນພຣະຈິງເພີຍຄຳຕ້ານ　　ຈານາງມະໂນຣາດ
ຂໍແກ່ນາຖໜໍ່ນ້ອງ　　ນາງຫຼ້າປ່າຊີຊັງ ພີຖ້ອນ
ຄາວນີ້ບຸນຫຼັງກ້າ　　ບຳນາບູ້ສິງ
ພໍພີເຫັນໜ້ານ້ອງ　　ເປັນບ້າຫຼ່າຫຼິງ
ຈິງໃຫ້ກູນາອ້າຍ　　ໝາຍຊົມແກ້ມອ່ອນ ໆ ອວນແລ້ວ
ປ່າໃຫ້ເຂີນຂາດຂ້ອນ　　ຂລັງອ້າຍຜູ້ປູ່ພອຍ ແດ່ຖ້ອນ
ພີກໍກອຍຈິດຕັ້ງ　　ຫວັງເອົາເປັນນິງ
ທຸກສິງໝາຍມອບມ້ຽນ　　ພຣະນາງນ້ອງຜູ້ດຽວ ນີ້ແລ້ວ
ເມື່ອນັ້ນສີສລຽວນ້ອຍ　　ມະໂນຣາຂານຊອບ
ນ້ອງນີ້ບໍ່ໃຊ່ຮູ້ຮີດເບື້ອງ　　ຄອງແຫ່ງແບວກະສັດ
ມະໂນໃນເໜືອນ　　ດັ່ງຕິນເປັນບ້າ
ຫຼື ຈັກຫຽມເຖິງທ້າວ　　ບາບຸນພູວະບາດ ໄດ້ນັ້ນ
ສິນແຕ່ເປັນທາດໃຊ້ (ຂ້ອຍຂ້າ)　　ຮອງພື້ນຈັ່ງຊິຄວນ
ອັນໃຫ້ສິນພຣະອວນອ້າຍ　　ນາງພຍາຈິງຊິແມ່ນ
ຄັນວ່າພຣະແຜ່ນພື້ນ　　ກູນານ້ອງກໍວ່າບຸນ ພຣະເອີນ

ເມືອນັ້ນທ້າວທ່ຽວແຍ້ນ    ຍິ້ມໂອດໂອຍຫົວ
ຈາສຽງຫວານ    ຕໍ່ນາງນົງນ້ອຍ
ພີນີ້ກອຍໃຈຕັ້ງ    ຫວັງເອົາເປັນມິ່ງ
ມະໂນນາດຝັ້ນ    ແຝງນ້ອງຜູ້ດຽວ
ຂໍໃຫ້ສີສລຽວນ້ອງ    ມະໂນຣາຄຶດຮ່ຳ
ພີບໍ່ລວງຫຼອກນ້ອງ    ຄຳລ້ຽວລ່າຍພາງ
ພີຈັກເອົານາງຂຶ້ນ    ເປັນອົງເອກຣາດ
ບໍ່ໃຫ້ນາດຖໜໍ່ນ້ອຍ    ເສັ່ງແຕ້ມຕ່ຳເອົາ ດອກນາ
ແຕ່ນັ້ນມະໂນຣານ້ອຍ    ຖແລງອອດອອນຂວັນ
ຫຼາຍແຊງເຊິງ    ຕໍ່ພຣະອົງຄີຄ້ອຍ
ນ້ອງນີ້ແນວນາມນ້ອຍ    ມະໂນຣາໃນປ່າ
ບໍ່ ມີສິນສ່ຳເຊື້ອ    ແນວເຈົ້າເຜົ່າພຍາ ດອກດີ
ຄັນແມ່ນພຣະພີພ້ອມ    ຮູ້ຮ່ອມຄວາມຄຶດ ດັ່ງນັ້ນ
ນັບວ່າບຸນຣຽມມີ    ໝື່ນກືກອງລົ້ນ
ນ້ອງບໍ່ ຂືນຂັດຂ້ອງ    ຊິຕອບຕາມຕົນພີ
ຊີວິດນ້ອງ    ຍໍມ້ວນມອບພະໄນ ພີເອີຍ
ເມືອນັ້ນນາໄທທ້າວ    ເຕີນພິບຕົກແຕ່ງ
ເອົາແຈ່ມເຈົ້າ    ນາງນ້ອຍໂສດສົງ
ຄ້ອມກ່າວແລ້ວ    ຊາວເທດເປ້ງຈານ
ໂຣມ ໆ ຈັດ    ຊູ່ປະການມວນພ້ອມ
ອັນວ່າຈອມໃຈເຈົ້າ    ທັງນາງທົງເຄື່ອງ

ດຽນຄາດເນື້ອ ເຫຼືອງເຫຼື້ອມແຕ່ຄຳ
ຈັນມັນໄລ້ ໂລມກາຍກົ້ວກິ່ນ
ກິນນະເຣດນ້ອຍ ງາມຍ້ອຍເກິ່ງແມນ
ສອງສີເຂົ້າ ພາຂວັນເທິງແທ່ນ
ນັກສນົມນັ່ງແໜ້ນ (ສາວໃຊ້) ນຳທ້າວໜຶ່ງປາຍ
ເມື່ອນັ້ນພານມະນາເຖົ້າ ຄວາຍພອນກົ້ມຂາບ
ຂໍໃຫ້ພຣະຕົວສ້ອຍ ຍືນໝັ້ນໝື່ນປີ ແດ່ຖ້ອນ
ຂໍໃຫ້ຈັກກີແກ້ວ ລືຊາເຊັງຊ່າ
ເປັນມິ່ງເຖົ້າ ເມືອງບ້ານເຂື່ອນແຂງ
ຈົ່ງໃຫ້ລືຊາເທົ້າ ຊຸມພູຮ້ອຍປະເທດ
ສິທິເດດລ້ຳ ນະຄອນກວ້າງເພິ່ງບຸນ
ຈົ່ງໃຫ້ຫາຍເຫດຮ້ອນ ທຸກສິ່ງຢ່າພານ
ທັງທານສິນ ສືບພະວົງເຖິງເຖົ້າ
ເຂົາກໍຄວາຍພອນແລ້ວ ສວັດດີທູນບາດ
ສຽງເສບພ້ອມ ແຄນໄກ້ຂຸ່ຍລະບຳ
ນັນເມືອງເທົ້າ ຈາຕູນເທວະໂລກ (ສວັນຊັ້ນທີ ໑)
ຝູງໄພ່ພ້ອມ ໂຮຫ້າວສິ່ງສຽງ
ຊາວນະຄອນເປັງຈານ ຊື່ນຊົມດອມເຈົ້າ
ອັນວ່າສີທົນທ້າວ ພຍາເມືອງມະນຸສໂລກ
ສິນທັກຂວນເຂົ້າ ງາມແປ້ນດັ່ງຂຽນ
ພຣະນາດທ້າວ ທຽມແທນມະໂນຮາ

ຄືຄູ່ໃໝຄຳກິນ
ຫຼໍ່ລຽງຊາວເບົ້າ

ອັນວ່າສອງສີເຈົ້າ
ໃສມະບາຊ້ອຍຊື່ນ

ພຣະບາດທ້າວ
ພໍສະອື້ນອິ່ນຫວງ

ພໍເມື່ອຕາວັນຄ້ອຍ
ລົງແລງຄ້ອຍຄ່ຳ

ບົດຣິມກວ້າງ
ແສງເສົ້າເລົ້າເຢັນ

ຍາບ ໆ ຍ້າຍ
ເສເບດລົງໂຮງ

ບຸນເຮືອງເລີບ
ກ່ອນກັບກຸມປ້ອງ

ເທວີແກ້ວ
ໃຈເມືອງເມືອແທ່ນ

ຣຽງຮ່ວມຫ້ອງ
ບາທ້າວທີ່ສະຖານ

ຜູ້ຜ່ານພື້ນ
ເທວະຣາດເຮົງໃບ

ຍູສະບາຍສຸກ
ບໍ່ມີໄພຍຕ້ອງ (ບໍ່ມີພຍາດ)

ເຖິງເມື່ອວັນລຸນຍ້າຍ
ພໍບານແລ້ວຕື່ນ

ທ້າວກໍລຸກຈາກຫ້ອງ
ສະຖານກວ້າງອາບໃສງ

ສະພາບພ້ອມ
ພວກໝູ່ໄທຄົວ (ແມ່ຄົວ)

ບໍພາງາຍ
ຮີບຣຽງມາຕັ້ງ

ສອງພຣະອົງພ້ອມ
ພາກັນສເວີຍໂພດ (ກິນເຂົ້າ)

ຄ້ອນອິ່ມແລ້ວ
ເລີຍລ້າເລີກລາ

ເມື່ອນັ້ນສະພັ່ງພ້ອມ
ສາວຖ່ວນນາງສນົມ

ສອນລອນນີ
ຊູ່ນາງບຳເຝົ້າ

ຫຼີ ງດູສັງວານກ້ຽວ
ໃໝຄຳຄ້ອງໄຫຼ່

ງານຍິ່ງແຍ້ມ
ເລົາອ້ວນເກິ່ງກັນ

ຊຸມນີ້ຕົກແຕ່ຟ້າ ມາເກີດວັນດຽວ
ເປັນບໍຣິວານ ແຕ່ຫຼັງຫຼາຍຊັ້ນ
ເມື່ອນັ້ນພູມີຫ້າວ ສີຫິນເດີນປ່າວ
ບັດນີ້ເຮົາຈັກອວນໄພ່ນ້ອຍ ໄປຫຼີ້ນ ນລຽນນະຄອນ
ຊົມສວນກວ້າງ ດວງຫອມຫາຍສວ່າງ
ສູປ່າຊ້າ ເດີນຕ້ານແຕ່ງໄປ
ເມື່ອນັ້ນແສນເມືອງຕ້ານ ພົນຫານແຫນແຫ່
ມີທັງຊ້າງແລະມ້າ ກະເຫີມຫ້າວຫິງແຂວນ
ສີຫິນຫ້າວ ທັງນາງທັງເພດ
ມ້າວໃສ່ແລ້ວ ເພິງໄລ້ລູບແຫວນ
ແລຄາດຄ້ອຍ ຄືຄູ່ຫົງເຫີນ (ນົກຫົງບິນ)
ທັງສອງໂສມ ຮູບພີມພຽງແຕ້ມ
ຫົງກວຽນແກ້ວ ທັງທະລັງລືເກິງ
ປານວ່າເສີກຕ່າງດ້າວ ເທບ້ານນອກເມືອງ ແທ້ແລ້ວ
ອັນວ່າພີເສດນ້ອຍ ນາງນາດມະໂນຣາ
ຄຳປະຈິງຈິດ ເດືອດແດດາດິ້ນ
ບໍຣິວານລ້ອມ ພາຍພຣະອວນສອງໝື່ນ
ທັດດອກແກ້ວ ຄຽນເກົ້າຄູ່ຄິນ
ໂສມສະອາດພ້ຽງ ພຽງເກິງສາວສວັນ
ຊາຍໃດເຫັນ ນາດຫວງຫິນສະບັ້ນ
ຕັ້ງຫາກງາມກະດັດເດ ເຫຼືອຕາໄດ້ແຕ່ເບິ່ງ ລະນໍ

| | |
|---|---|
| ອີກອຸ່ນແລລ່ຳນ້ອງ | ຂວັນໄຂ້ຊີຂາດດອນ ແລ້ວເດ |
| ເມື່ອນັ້ນສາວກໍບານ ໆ ຍ້າຍ | ໄຫຼຫຼັ່ງລົງສນານ |
| ເຊົາພານພຽງ | ພາກພລານລົງຊ້າງ |
| ຝູງໝູ່ຊຸມບາງເຕົ້າ | ເດີນກັບເອ້ອວດ |
| ໄທລູກທ້າວ (ພວກເຈົ້ານາຍ) | ທະຈົງເຕັ້ນເລີດດາ |
| ນະບີວັນເຫຼື້ອມ | ໄໝຄຳຖຽນເກດ |
| ແຫນແຫ່ເຈົ້າ | ຈອມສ້ອຍພຣະບອດເມືອງ |
| ຝູງໝູ່ບໍຣິວານພ້ອມ | ພໍຕາທົກໝື່ນ |
| ເຂົາບັ້ນລົງເກີດພ້ອມ | ດອນທ້າວທົບດຽວ |
| ບ່ອງ ໆ ຄື້ວ | ຄ້ອນກ່ອງເດືອນຫງາຍ |
| ເປັນລຳຊາຍ | ຊູ່ຄົນຕອງແຕ້ນ |
| ສົມສນິດເນື້ອ | ແອວກົມກ້ຽງຫຼໍ່ (ຮູບງາມ) |
| ເພາະເພື່ອບຸນກ່ອນສ້າງ | ສົມໄວ້ຮ່ວມບາ ເຈົ້າເອີຍ |
| ອັນວ່າສາວສວັນນ້ອຍ | ນະໃນຣານາງບາດ |
| ທົງຈິດແກ້ວ | ດອນທ້າວຮ່ວມຮຽງ |
| ນ້ອຍນຶ່ງເຫົ້າ | ສວນດອກອຸທິຍານ |
| ພູຫອນລົງ | ຈາກກວຽນກົງແກ້ວ |
| ແຊວ ໆ ຫຼົ້ນ | ໃນສວນຊົມມ່ວນ |
| ບາງພ່ອງໄດ້ດອກຊ້ອນ | ຊົມພົ້ວພຸ່ມກະຈອນ |
| ນະລີວັນຊ້ອນ | ແຊມດວງດອກສະນັ້ງ |
| ຫອມຮ່ວງເຮົ້າ | ໂຮມສະບັ້ນທົ່ວທວງ |

ເມື່ອນັ້ນດວງສມອນນ້ອຍ    ນະໂນຣາເຫຼົາຫົ່
ນາງກໍຄຶດຮອດຫ້ອງ    ຄະນຶງເອື້ອອ່າວປາງ
ເລື່ອນ ໆ ນ້ຳ    ຕາຫຼັ່ງໄຫຼຕົກ
ຄຶດເມື່ອທົ່ງພູເງິນ    ນຶງເມືອງພາຍພຸ້ນ
ບໍຣິວານພ້ອມ    ຫົກນາງນ້ອງພີ
ຄອຍຈຶມໜ້າ    ພຽງເອື້ອຍພາກກັນ ແລະນາ
ເມື່ອນັ້ນຂຸນໄຂນ້ອຍ    ແສນເມືອງຫູບບາດ
ບັດນີ້ເຊີນພຣະລົງຂວ່າງຫຼີ້ນ    ຄືຄ້ອນພວກພລັບ
ອັນວ່າພາຍຂວາໄດ້    ພຣະອົງເອງປຸນແຕ່ງ
ເບື້ອງຝ່າຍຊ້າຍ    ເຊີນນ້ອງນາຖແພງ
ແລ້ວຈຶ່ງປັນຄົນຫານ    ທໍ່ກັນປາຍໄວ້
ອັນວ່າຮາງວັນໃຫ້    ນາລາແສນຮວດ
ຮ້ອຍທີ່ພຣະບາດໃຫ້    ຫາໄວ້ຊູ່ຄົນ
ພໍເມື່ອຕາວັນຄ້ອຍ    ຄາວແລງແດດອ່ອນ
ພຣະທ່ອນທ້າວ    ທົ່ງມ້າມ່າຍຄື
ທຸກທີ່ພ້ອມ    ພວກໝູ່ນາງສນົມ
ທັງເຫວີ    ປູ່ຄອງຄອຍທ້າວ
ຮົນ ໆ ຮ້ອງ    ກາງສນາມມ້າແລ່ນ
ພຣະບາດທ້າວ    ຕີຕ້ອງຕ່ອຍໄປ
ອໍຣະໄໝ່ໜ້າ (ໜ້າງານ)    ນ້ອຍນາດນາງເມືອງ
ປຸນເປື້ອງປັດ    ຍາດຄືຄອຍຕ້ອນ

ພໍດູດາວປະກາຍພຸ້ນ ກຸມຄືຄ້ອນຄວ່າງ ພຸ້ນເປີ
ຍາບ ໆ ນ້ຳ ຄອຍຕ້ອນໄລ່ຄີ
ແຕ່ນັ້ນພູມີເຈົ້າ ສີທົນເທວະຣາດ
ພຣະບາດເຈົ້າ ຕີໄດ້ແມ່ນນີ້
ວາງຄືງເຕັ້ນ ຖືກແມ່ນທັງໂຫມ (ຖືກໝົດ)
ຣິນ ໆ ສຽງ ຊຸ່ຍຊໍ່ຊະໂຍເຈົ້າ
ຣາຊາພ້ອມ ແສນເມືອງຊົມຊື່ນ
ເກັບດອກໄມ້ ແສນຮ້ອຍຮວດງາມ
ໂຫລູກທ້າວ ສາມໝື່ນທັງທັດ
ນວນມາພໍພັນສາວ ຊູ່ຄົນຄຽນເກົ້າ
ອັນວ່າເທວີເຈົ້າ ຫວາຍທັງຄ້ອງເກດ
ພຣະບາດເຈົ້າ ແຊມຊ້ອນເສບລະອອງ
ເຖິງເມືອຣາກີຂ້ອນ ຣາສີແສງຕ່ຳ
ພຣະກໍຊົງເສບຊ້ອນ ສເນຝັ້ນຝ່າງຝັນ
ມື້ຫວາຍດັ້ນ ຖັນພຣະອວນອົງອ່ອນ
ກໍບໍ່ຫຼັບຍິບຍັ້ງ ມືໄລ້ລູບຫວງ
ຮັກອ່ອນພ້ຽງ ພົ້ນທີ່ແສນກະສັນ
ລ່ຳ ໆ ມື້ ບໍ່ວາງຫວງນ້ອງ
ຮັກຮູບທ້າວ ລືມເອື້ອອ່າວປາງ
ດູດັ່ງສອງສະພັນກົງ ກາມຄຸນເຄີຍຮ່ວມ
ນ້ອງແນບອ້າຍ ປຸນປ້ອນປ່ຽນສລາ

ອັນນີ້ຊິວ່າສເນຫາຮ້ອນ   ໂຮມມະນັງນຳແອ່ວ
ເປັນດັ່ງນົວເມກຕັ້ງ   ປະຕູຕ້ອງຕ່ອນສເມນ
ມະໂນບາດໃຫ້   ທົນສວ່າງວະແວວແສງ
ຄອນ ໆ ຫຼັບ   ສແນ່ງວິນວຽນນ້ອຍ
ພາກນຶ່ງເປັນດັ່ງເນົານະຄອນຄ້າຍ   ພຣະອິນໂທເທິງແທ່ນ
ນັບແຕ່ໄດ້ຖແລງຫຼ້າ (ພື້ນໂລກ)   ເລິງພໍ້ພາກດຽວ ນີ້ແລ້ວ
ຄ້ອນຮຸ່ງແລ້ວ   ລາຈາກສນາມຫຼວງ
ພົບຫຼວງຫຼາຍ   ດັ່ງປະຕູວຽງກວ້າງ
ຣົນ ໆ ພ້ອມ   ທັງຫຼາຍແທນແທ່
ພຣະບາດເຈົ້າ   ດຶງຄ້ອມຕ່າວຄືນ
ທັງແສນເມືອງ   ເລີກລາເມືອພ້ອມ
ພໍຄາວເທົ້າ   ປາງທອງເຊົາຈອດ
ພຣະທ່ອນທ້າວ   ຈູງນ້ອງສູ່ສະຖານ
ກໍບໍ່ທຸກຍາກແຄ້ນ   ປະການສິ່ງສັນໃດ
ບູທ່າງນອນໃນປາງ   ພ່າງມະໂນຄາຄ້ອຍ
ບຸດີນັ້ນ   ບາຊົມສວນອາດ
ຕໍ່ແຕ່ນີ້   ບາທ້າວຊິພາກນາງ ແທ້ແລ້ວ

● ບັດນີ້ຈັກກ່າວກ້າ   ແດນທົບທວາຍນະຄອນ ກ່ອນແລ້ວ
ຝູງທະມິນມັນເທັງ   ຍາດຊູຊີງປ້ານ
ຕົວມັນຜູ້   ຊຸນຈັບທ້າວບາບ

ມັນກໍອວນໄພ່ພ້ອມ ພົນຕື້ຍາດແດນ
ເມື່ອນັ້ນຊາວເທດຮ້ອນ ຣິນເຣ່ງຂວາງຂັດ
ມັນບໍ່ຍອມຍັງແຖນ ຫ່ຽວພັນທະລາຍມ້າງ
ເຂົາຈຶ່ງນຳສານໃຊ້ ທູນເຖິງເທວະຣາດ
ບັດນີ້ໃຈນຈອບດັ້ນ ແດນທ້າວທີບໄກ
ເຊີນແກ່ພຣະກໍ່ເກື້ອ ການຍາກຍາຂວາງ ແດ່ຖ້ອນ
ຝູງຂ້າຄອຍຄຳສຸກ ເພິ່ງບຸນຈອມເຈົ້າ
ແຕ່ນັ້ນສີທິນທ້າວ ຣິນກະຫາຍແສນໂສກ
ພຣະຈຶ່ງຕ້ານສັ່ງນ້ອງ ແພງຕື້ຕ່ອນສເນ
ບັດນີ້ພີ່ຈັກໄປໂພດໃຫ້ ເຂົາຊື່ນຊົມບານ ກ່ອນແລ້ວ
ຍາມໃດບໍຣະບວນຈັກ ຊີຕ່າວເຊີຍຊົມນ້ອງ
ຈຶ່ງໃຫ້ເນົາໃນຫ້ອງ ຫໍປາງຄອຍພີ່
ນ້ອງຢ່າໄດ້ເດືອດຮ້ອນ ຣຸນຮ້າຍພ່າຍໜີ
ພີ່ຈັກໄປໄກແກ້ວ ນະໂນຣາຢ່າລືມພີ່
ຢ່າໄດ້ມີໂລບລ້ຽວ ຊົມຊູ້ຈາກພີ່ຊາຍ
ພີ່ຈັກພາພົນຜ້າຍ ພູພະນັງລັດລ່ວງ
ນ້ອງຈຶ່ງຢູ່ສືບສ້າງ ປາງກວ້າງຄ່ອຍຄິງ ແດ່ຖ້ອນ
ເມື່ອນັ້ນເທວີແກ້ວ ມະໂນຣາທົນສວາດ
ໄດ້ຍິນພຣະບາດເຈົ້າ ຈອມສ້ອຍສັ່ງຄະດີ
ເຈົ້າຊິໜີຈາກນ້ອງ ນາງນາດເມັ່ງຂວັນ
ສັງບໍ່ເອົາອວນເດີນ ດຸ່ງໄພນຳອ້າຍ

ສັງຊິເດີນດົງຜ້າຍ    ໄກບາງໜີຫ່າງ
ຫຸກສິງມາບໍ່ແລ້ວ    ສອງຊ້າຕື່ນມາ ແລນໍ
ໃຫ້ຄ່ອຍໄປດີເຢີ    ພູຫອນຫ້າວລືກຽນບົດບຶງ ອວນເອີຍ
ຂໍໃຫ້ລຸລາບແພ້    ມານນ້າງມຸ່ນກະຈວນ
ຄັນວ່າເດໃຊແພ້    ສັດຕູມວນມາມອບເນື້ອໃດ (ຂ້າເສິກ)
ຂໍໃຫ້ພຣະຕ່ອນຕົ໊    ແພງລ້ານຕ່າວໄວ ແດ່ຖ້ອນ
ຫຼອນວ່າໄພຍໄພຣ້ອນ    ໂຣມຂວັນແຂງຂນາດ ບໍ່ຮູ້
ນ້ອງພີ່ເປັນກ່ຳພ້າ    ພອນບ້ານເພີງພຣະອົງ ນີ້ແລ້ວ
ເກັງທໍ່ດັບພຣະຂັນຂ້ອນ (ດັບຂັນຫັງຫ້າ) ຂົນພຣະໄທທວງມ່ອນ
ໃຜຈັກບຳຂ່າວໃຫ້    ເຊີນຫ້າວຫ່ຽວເຖີງ ໄດ້ເດ
ຍັງທໍ່ມາລາແກ້ວ    ໄໝຄຳຄຽນຄາດ
ພຣະພີ່ເອົາແນບເນື້ອ    ດາງນ້ອງເນື້ອຊິນອນ ຫັ້ນແລ້ວ
ຖ້ານ້ອງມຸດມອດມ້ຽນ    ມາລາຫ່ຽວເສັຽໂສມ ເນື້ອໃດ
ຜີວ່າບຸບຜາຍັງເບີຍບານ    ນ້ອງຄ່ອຍຄົງຄຳໜັ້ນ ນັ້ນເດ
ນັບແຕ່ນາງຫູນຫ້າວ    ສີທົນທວນສັ່ງ
ນ້ຳຕາໄຫຼຫຼັ່ງຍ້ອຍ    ຣຳແກ້ມດັ່ງຝົນ
ອັນວ່າສີທົນຫ້າວ    ໂຊມນາງມາຈູບ
ມືລູບໄລ້    ຫຼັງແລ້ວສັ່ງຄະດີ
ໃຫ້ຄ່ອຍປູ່ດີເປັນະໂນຣາສ້ອຍ    ສາວສວັນສເນີເນດ
ຈົ່ງໃຫ້ທົນທະເວດເນື້ອນ    ບານຫຸ້ງງໃຄ່ຄອຍ ພີ່ຖ້ອນ
ນັດນີ້ ຄືຄູ່ສອນສິບຮ້າງ    ຣານຂວັນເຫີນຫ່າງ

ຈິດພີ່ຍັງປູ່ຊ້ອນ ຊົມແກ້ມແຈ່ມພຣະຈັນ ພີ່ນາ
ຄ້ອນວ່າພຣະສັ່ງແລ້ວ ເຈັ້ງຣະຈາກພອຍພັດ
ເສນາຈັດ ເຄື່ອງຄຳຄວນຫ້າງ
ພໍ່ບານຊ້າງ ຮຽງເກີຍຫຼຽມພ່າງ
ພູວະບາດທ້າວ ທັງເບື້ອນພາກບາງ
ເຝື່ອງ ໆ ຍ້າຍ ຫຼາຍສ່ຳພາຍສານ ພຸ້ນເປີ (ຊ້າງ)
ບາດາບພຣະ ພາກບາງໄປໜ້າ
ມະໄນຣາຂຶ້ນ ຫໍປາງເມີນຜໍ່ (ຫຼຽວເບິ່ງ)
ຮ້ອງຮ່ຳໄຫ້ ແດດີ້ນດັ່ນດອນ ແລະນາ
ຫຼີ່ງດູຍານ ໆ ຍ້າຍ ພົນພວກຫວຍຫານ ພຸ້ນເປີ (ກອງທັບ)
ຝູງໝູ່ຊາວເປັງຈານ ອອກວຽງເປັນຊັ້ນ
ພົນຫຼວງທ້າວ ປະຖະພີໄຫວຫວັ່ນ (ແຜ່ນດິນ)
ມ້າເທດທ້າວ ພັນຕື້ຫຼັ່ງໄຫຼ
ພຣະບາດທ້າວ ຫຼຽວຜໍ່ ຄືນຫຼັງ
ລຳ ໆ ດົມມາລາ (ດົມດອກໄມ້ເລື້ອຍ ໆ) ແທບທວງດາງບ້ອງ
ພາພົນຂວ້າມ ເຫົ້ວຫີນຫ້ວຍຮ່ອມ
ດີແກ່ນົກຮ່ຳຮ້ອງ ປາຍສ້ານສົ່ງລາງ
ພໍ່ດູເດັ່ງຣະດາດຊ້າງ (ຮຽງເປັນແຖວ) ເຊົາຮົມຂາມຂວາງ ພຸ້ນເປີ
ປວງໝູ່ຊຸມເຂົາຊຸບ ປູ່ເຊົາພຽງພ້ອມ
ກຸບຊະໂຣຊ້າງ ພໍພັບແກ້ເຄື່ອງ
ທ້າວກໍຄືດຮອດຫ້ອງ ຄະນຶງນ້ອງພໍ່ຫາ

ຫຼິງເຫັນຟ່າຍ ໆ ຟ້າ ຊ້ອງຊໍ່ຊຽງບິນ ພຸ້ນເຢີ
ດີແກ່ວາໂຍພັດ (ລົມ) ກິ່ງເຟືອນເຟືອຍກ້ານ
ຟັງບິນກາເລັບຮ້ອງ(ແນງໄມ້ຊບິດບົ່ງຄືໂຕຈັກຈັ່ນ) ໂຮຍສຽງສັນຊຸ່ຍ ພຸ້ນເຢີ
ເປັດປ່ອງສ້ານ ສເນີຕ້ອງຕີ່ງຊໍ
ພູວະບາດທ້າວ ຄະນິງອ່ອນນິນາຍ
ສເວີຍເພົາພາ ໂພດເຄັນຄືງ້ວນ
ພໍເນື່ອສູບແສງຄ້ອຍ ລົງແລງລັບລ່ວງ
ລົມເລັ່ງຕ້ອງ ດອກໄມ້ເຣົ້າຫອມ
ຄືຄູ່ຈອມໃຈເຈົ້າ ມະໂນຣາໂຮຍກິ່ນ
ພຣະກໍ່ຄືດຮຸ່ງນ້ອງ ວິນສນ້ອຍເນື້ອຍລົງ
ໃບຄືນນັ້ນ ພຣະອົງເລີຍຝັນຫຼາກ
ຝັນວ່າເຈົ້າຕ່ອນຊ້ອຍ ແຜງຂ້າງແນບນອນ
ພູຫອນທ້າວ ສະດຸ້ງຕື່ນຕົນລຸກ
ນຶ ຕືຫວງ ຮ່ຳຄະນິງເຖິງນ້ອງ
ພໍເນື່ອວັນໃສເປື້ອງ ບົວຣະພາເພັ້ງໂລກ
ຟັງຊະນີບ່ວງໄມ້ ເຣຮ້ອງສົ້ງສຽງ
ນົກຫົງບົກອີອຽງ ຮ້ອງກີ່ລຽງໃນດົງ ພຸ້ນເຢີ
ສຸຣິໂຍໃສ ສ່ອງມາເນີນແຈ້ງ
ສືຄາບຍ້າຍ ດົງຄວນມາບອກ
ຄ້ອນພາດຄ້ອງ ພົບລ້ານລ່ວງໄປ
ຫຼິງສ່ຳໄມ້ ນົວນຶດເຂົາຂວາງ

ໄພພຽງປະດັບ ຫຼັ່ນດອຍດົງຊ້າງ
ຈຽມແຕ່ ສີທົນຮ້າງ ນະໃນຮາວດອນປ່າ
ພັດນ້ອງເປັນກ່ຳພ້າ ມາໄດ້ພ່ຳນານ ນີ້ແລ້ວ
ຍຸວີບັ້ນ ນາຄານແຮມເດືອນ
ຕໍ່ແຕ່ນີ້ ນາງນ້ອຍຊິຈາກໄປ ແທ້ແລ້ວ ໆ

● ເທື່ອນີ້ຈັກກ່າວກ້ຳ ພຍາພໍ່ສີທົນ ກ່ອນແລ້ວ
ພຣະກໍທົງເປັງຈານ ໄພ່ເມືອງນວນພ້ອມ
ຈອມເມືອງເຈົ້າ ໄສຍາເພຫເພ່ງ (ນອນຫຼັບ)
ພຣະກໍຝັນປລາດລ້ຳ ລື ຮູ້ຮ່ອມເປັນ
ຝັນວ່າອຸທອນທ້ອງ ເທທະລາຍເລີຍແຕກ
ໄສ້ເຮັ່ງຟື້ງ ເຟືອນສະທ້ານທົ່ວເມືອງ
ແລ້ວເລົາເຂົ້າ ຄືນຄອບອຸທອນ (ທ້ອງ)
ດູສຸກໃສ ແປກພຣະໄທທັງປ້ານ
ພໍປະມານໄດ້ ໄສຍາຍາມດື່ນ
ພຣະເລົາຕ້ານ ເດີນເຖົ້າທ່ານໂຫນ
ໝໍກໍບາຍເອົາໄດ້ ກະດານດຳເດີນຮອດ
ພຣະໃຈດແຈ້ງ ຖາມຖ້ວນເຫດນີ ບໍ່ນັ້ນ
ໝໍກໍເກນຕາມຊັ້ນ ຊາຕາຕັ້ງທ່ຽງ
ບັດນີ້ເດາະຄາດຮ້າຍ ໂຮມຮ້ອນຮອດພຣະອົງ
ເກັງຈັກເສັງໃສມທ້າວ ສີທົນທົງເດດ

ເປັນດັ່ງກຸສລາດຮ້າງ ຮາມນ້ອງນິງມະລິ
ບັກແອ່ວອຸ້ນ ເອົາອ່ອນເນືອແປງ
ອັນນີ້ລາງລືເອົາ ຂ່າວມານີແຈ້ງ
ເມື່ອນັ້ນນໍອິນໄຫ້ (ຜູ້ເປັນໃຫຍ່ຂອງຄົນ) ຫົນກະສັນບ້າປ່ວງ
ເປັນດັ່ງໄຟລວກເນື້ອ ນອງໄໝ້ທົ່ວຄີງ
ແຕ່ນັ້ນໂຫນກໍພາກັບຕ້ານ ຖແລງຄຳກ້ຽງກ່າວ
ຄວນທີ່ແຕ່ງເຄື່ອງພ້ອມ ພາຊື້ນພອກພະລີ ພຣະເອີຍ
ອັນວ່າພູມີທ້າວ ພາທີຕ້ານຕອບ
ຕາມແຕ່ຜູ້ແຕ່ງຕັ້ງ ເຄີຍຮູ້ບໍ່ ອີນ
ເມື່ອນັ້ນເອົາກໍຂ້າຊ້າງມ້າ ສັດສິງງົວຄວາຍ
ປຸນຄວາມຫາພຍາຫອນ ກ່າວພິໝາຍເຊື້ອ
ເອົາຈິ່ງຖວາຍຄຳໃຫ້ ພູຫອນຮູ້ຮ່າງ
ຝູງຂ້າປຸນແຕ່ງຕັ້ງ ຫາໄດ້ຊູ່ອັນ
ບັງທົ່ວາງສິ່ງເຊື້ອ ລູກເທບພຍາຫອນ
ດູຂ້າໄປສແວງຫາ ທີ່ໃດມີໄດ້
ບັດນີ້ເຄືອງໃຈດ້ວຍ ມະໂນຣາເອົາແລກ ຈິງເຖີ້ນ
ລູກພຣະເຈົ້າແກ່ນໄຫ້ ປາງນີ້ຮ່ຳຄະນິງ ເບິງຖ້ອນ
ປຽວທີ່ພິດແພກພ້ຽງ ພີປ່າປອມມາ ພຣະເອີຍ
ເກັງຈັກເສັງບຸດດາ ພາກເນືອງສູນເສົ້າ
ເມື່ອນັ້ນພູຫອນທ້າວ ບິນໂດຍດອມທ່ານ
ເລີຍເລົ່າວາງກິ່ງແກ້ວ ສາວສະໄພ້ແກ່ພານ

| | |
|---|---|
| ເມື່ອນັ້ນຝູງສ່ຳເຊື້ອ | ຮັກສາບາດນາງຄານ |
| ເຂົາກໍເນື່ອງຄວາມລັບ | ລອບຫູນນາງນ້ອຍ |
| ບັດນີ້ຝູງມານຮ້າຍ | ຊິງຊັງນາງນາດ ຈິງແລ້ວ |
| ເຂົາຈັກຂ້າແຈ່ມເຈົ້າ | ເອົາຊີ້ນເບີກພະລີ ວ່າດາຍ (ບູຊາຜີ) |
| ເມື່ອນັ້ນມະໂນຣາຮູ້ | ຮີບກະຫາຍແສນແສນ |
| ຄຶດໂສກເສົ້າ | ນາງນ້ອຍຫງ່ວມເຫງົາ |
| ເຈົ້າດັ່ນດິ້ນ | ໃຈສັ່ນເສັຽຂວັນ |
| ເພາະເພື່ອກົວພານເອົາ | ຜອກພີສວາງເສື້ອ |
| ນາງຈິ່ງເນື່ອຫູນໄຫວ້ | ຈອມພຣະເນື່ອງຫູນແມ່ |
| ວອນແຈ່ມເຈົ້າ | ບຸນກວ້າງໄພດຜາຍ ແດ່ຖ້ອນ |
| ດູດັ່ງມານມາເຫັງ | ອີ່ມຕົນຕົວຂ້ອຍ |
| ຂ້າຈັກບິນບິນຜ້າຍ | ເຖິງຈອມໄກຣາດ |
| ຜາຍແຜ່ນຟ້າ | ໜີພົ້ນຈາກໄພຍ ກ່ອນແລ້ວ |
| ເມື່ອນັ້ນທິພອາດເຈົ້າ | ຕົນແມ່ສີທົນ |
| ເຫຫວງທົນ | ທ່າວກະຫາຍຫິວໄຫ້ |
| ຄັນຊິຂັດຂືນໄວ້ | ກົວນາງນໍຣະບາດ |
| ຈິ່ງເອົາເຄື່ອງຄາດເນື້ອ | ວາງໃຫ້ແກ່ນາງ |
| ເມື່ອນັ້ນນາງນາດນ້ອຍ | ຊ້ອນປີກກັບຫາງ |
| ລຳ ໆ ນີ້ | ແກວ່ງແພນເພື່ອຍຟ້ອນ |
| ອັນຊະລີນ້ອມ | ປະນົມກອນກົ້ມຂານ |
| ໄຫວ້ແມ່ເຈົ້າ | ຈອມສ້ອຍຄ່ອຍຄົງ ແດ່ຖ້ອນ |

ແຕ່ນັ້ນອີງສນອນແກ້ວ　　ນາງດາພຣະແມ່
ໃຈຂາດດິ້ນ　　ດອນສະໃພ້ທ່າວຫວງ
ໃຫ້ຄ່ອຍໄປດີເປີດວງສນອນແກ້ວ ນະໂຍຣາລູກນຶ່ງ ກູເອີຍ
ເຈົ້າຫາກລະແມ່ໄວ້　　ພາຍພີ້ຢ່າຊິລືມ ແມ່ເນີ
ຄັນຫາກວ່າເຈົ້າພາກພີ້　　ເຖິງທີ່ພູເງິນ ເມື່ອໃດ
ເນົາສະຖານທອງ　　ຢ່າຊິລືມພຣະອີງອ້າຍ
ຍາມເມື່ອສີທິນຍ້າຍ　　ຍັງນະຄອນຄອຍອ່ອນ
ຫຼອນບໍ່ເຫັນໜ້າເຈົ້າ　　ຊິແດດິ້ນດັ່ງຕາຍ ແມ່ແລ້ວ
ແຕ່ນັ້ນນາງກໍພັນພາຍເປື້ອງ　　ທະຍານບິນບິນແອ່ວ
ແລ້ວເລົາເຍື້ອນ　　ຄືນຄອນຫໍປາງ
ຄະນຶງຜົວຂວັນ　　ເກືອນກະຫາຍຫິວໄຫ້
ຄ່ອຍຢູ່ດີເປີອົກສເນຫາຫ້ອງ　　ແນວອິນອີງພີ້ ອວນເອີຍ
ນ້ອງຈາກເຈົ້າ　　ພອຍບ້ານບໍ່ເຫັນ ລະນໍ
ຄ່ອຍຢູ່ດີເປີພຣະພີ້ພຸ້ນ　　ພຽງພຣະເນດນະໂຍຣາ ອວນພີ້
ນ້ອງຈັກຮອນແພງຂວັນ　　ຄ່ອຍຢູ່ຢືນຍາວໝັ້ນ
ບັດນີ້ປາປັງເປື້ອງ　　ເວນຫຼັງໄຫຼຮອດ ອວນແລ້ວ
ຄຳທຸກມາແລ່ນກົ້ວ　　ໄກອ້າຍບໍ່ເຫັນ ລະນໍ
ຄ່ອຍຢູ່ດີເປີສີທິນທ້າວ　　ຈອມຂວັນຜົວນຶ່ງ ກູເອີຍ
ພຣະພີ້ເປັນກ່ຳພ້າ　　ມາແລ້ວຊິບໍ່ເຫັນ ລະນໍ
ໂອນໍບໍ່ປາກພັດພາກເວັ້ນ　　ອ້າຍພີ້ພໍຍານ ດອກນາ
ບໍ່ປາກຣານພຣະອີງໜີ　　ພາກພອຍຄາວນ້ອຍ

ກໍຫາກເປັນຕັ້ງແຕ່ເວນຫຼັງຂ້ອຍ ບຳມາບ້າວຈ່ອງ
ນ້ອງຂໍເອີ້ນສັ່ງອ້າຍ ແພງຕີ້ແຕ່ໄກ ແຕ່ຖ້ອນ
ແມ່ນວ່າໂຫສາຂ້ອງ ຂືນພຣະໄທຫວງພີ ກໍດີ (ຂ້ອງໃຈ)
ຂໍໃຫ້ພຣະໂຜດເວັ້ນ ວາງໃຫ້ຫ່າງກັບ ແດ່ເນີ
ຖາວນີ້ເວນວຽນຈ້ຳ ຈວນຕິວຕາມອ່ອນ
ນ້ອງຂໍນ້ອມຂະມ່າອ້າຍ ແພງຕີ້ແຕ່ຂວັນ ນີ້ແລ້ວ
ແມ່ນວ່າໂຫສາຂ້ອງ ຂືນພຣະໄທຫວງພີ ກໍດີ
ນ້ອງຂໍນ້ອມຂະມ່າອ້າຍ ແພງຕີ້ແຕ່ຂວັນ ນີ້ແລ້ວ
ເມື່ອນັ້ນຍາມຄວນແລ້ວ ນະໂບຣາເລີຍເຈີດ
ບິນປູ່ອ້ອນ ໂຣງເຈົ້າຣ່ວບຣີບ
ຝູງບາບຣ້າຍ ຫຼີງລ່ຳດູບາງ
ທັງປວງເຂົາ ເລົາແລເລີຍແລ້ວ
ຣ້ອຍທີເວນບາງແກ້ວ ບຳມາຄອຍຄອບ
ກໍຈີງຕອມກອບເສົ້າ ເຖີງທ້າວທີໄກ
ບາງກໍຊີລຫາໄຫຼ ຫຼັ່ງລີງນີເອື້ອນ
ປານນີ້ມາລາແກ້ວ ໄໝຄຳຄຽນຄາດ ພຣະອົງພຸ້ນ
ພຣະບາດຄ້ອງ ຄໍໄວ້ຫ່ຽວເຫີບ ລະບໍ
ໂອບໍ່ຄືດເມື່ອຍາມປູ່ຊ້ອນ ຣຽງຣູບພຣະສີທົນ ນັ້ນນາ
ດູດັ່ງໄພພອບເຫີນ ຫ່າງໄກກອບເວັ້ນ
ພຣະເຄີຍປຸນປຸກນ້ອງ ພື້ກະສາດຸ້ມຫົ່ມ (ຜື້ຜ້າຫົ່ມ)
ພຣະເຄີຍອຸ້ມອ່ອນໄວ້ ເພົາຜ້າແພ່ນຫອມ

| | |
|---|---|
| ບານເມື່ອທົ່ງພຣະກອນຊ້ອນ | ຊົມອວນກົ້ວກິນ ວັນນັ້ນ |
| ເປັນທີ່ອີກຫຼາດຫຼັ້ນ | ມະໂນນ້ອງສວ່າງກະສັນ ແທ້ນາ |
| ບັດນີ້ພຣະພີຣາມເຊີນແກ້ນ | ກິນນະຣີລຳຕ່າງ ລະນໍ |
| ເຈົ້າຊີຣາມພ່າງຕຸ້ມ | ພຣະກາຍນ້ອງແທນພຣະໄທ |
| ຣາມທັງສະໄບບາງຜ້າ | ພົນພຣະອົງເອົາກິນ |
| ຣາມໄດ້ເປື້ອງປີນແກ້ນ | ໄກອ້າຍຊີອ່າວຣຽມ ລະນໍ |
| ໂອນໍປ່າງເມື່ອນາໄທທ້າວ | ທົ່ງນະຄອນຄຽງອຸ່ນ |
| ຄືຄູ່ດາວດາດຟ້າ | ຊົມກົ້ວກ່ອມສເມີ |
| ບັດນີ້ປຸນດັ່ງຈັກກະພາກຮ້າງ | ຣາມແມ່ໄກຮັງ ແລເດ |
| ພານຕະເດີນດົງ | ແອ່ວເອົາຊົມປ້ອນ |
| ກາກໍຄືນມາຫ້ອງ | ເຮືອນຕົນພາກລກ |
| ນ້ອງຊີໄດ້ຈາກອ້າຍ | ດຽວນີ້ດັ່ງກາ ນີ້ແລ້ວ |
| ນັບແຕ່ມະໂນຣາຄຸ້ມ | ຄະນິງຜົວເມີນພໍ່ |
| ປຽວວ່າພຣະພີພຸ້ນ | ແພງຕໍ່ຊີຕ່າວມາ |
| ມະໂນຣານ້ອຍ | ຮ້ອນເຮົ່າໂຮມກະສັນ |
| ທະຍານເວຫາ | ຫອນພະໂຍມຍັງຟ້າ |
| ພໍດູອໍຣະທືນໄມ້ | ຊ້ອງຊໍ່ຊົມໃບ ພຸ້ນເຍີ (ໃບຂຽວຊະອຸ່ມ) |
| ດີແກ່ລົມພານພັດ | ງ່າຄອນໄຄວ່ຄ້ອນ |
| ມີໝູ່ດວງດອກໄມ້ | ບານຊ້ອງຊໍ່ແຊງ |
| ເມັ້ງບົ່ງເຖິງປະເທດດ້າວ | ແດນທີ່ນພຣະຣືສີ |
| ນາງກໍລົງວັນທາ | ຝາກແທວນທັງຜ້າ |

ຫຼອນວ່າສີຫິນຜ້າຍ　　ຄືຈີນາຣອດ ບໍ່ຮູ້ (ປ່າໄມ້-ພູເຂົາ)

ຂໍພຣະເອົາໃຫ້ທ້າວ　　ເໝືອນໜ້າອຸ່ນຫວງ ແດ່ຖ້ອນ

ໃຫ້ພຣະຮູ້ຂ່າວນ້ອງ　　ທັນທີ່ພູເງິນ ວ່າເນີ

ແລ້ວໃຫ້ຄືນເມືອເມືອງເປັງຈານ　　ປູ່ກະເສີມແສນສ້າງ

ແຕ່ນີ້ທາງໄກລ້າ　　ເສືອສິງສັດຕ່າງ

ມີທັງໝີສ່ຳຊ້າງ　　ງູຮ້າຍໄຂວ່ຂຶ້ນ (ປົບເປ)

ຢ່າໃຫ້ຮ້ອນ　　ນະໂບຣາດທື່ຣະໄທ ແດ່ຖ້ອນ

ຄັນວ່າບຸນບາມີ　　ຊິຕ່າວຄືນຊົມຊ້ອນ

ແຕ່ນີ້ພູຜາຂັ້ນ　　ເຫວຕັນເຕັ້ງຊ່ອງ

ມົວມືດໄມ້　　ບັງໜ້າໜ່ວງໜາ

ນາງກໍພາທີວ້ານ　　ທູນຖແລງແລ້ວສັ່ງ

ໄຫວ້ທ່ານທ້າວ　　ຮັດສີແລ້ວລວດທະບານ

ບັງເລົາຫຼຽວຫຼັງປ້ຽມ　　ເປັງຈານໃຈອ່ອນ

ຄຶດເມືອຄາວຄຶງອ້າຍ　　ເອົາຜ້າພ່າງຫາວ

ໂອນໍອັນນີ້ເວຣາຂ້ອງ　　ເຊີນພຣະໄນເມີນຫ່າງ ກັບບໍ່

ຄຳຫຸກມາແລ່ນກຸ້ມ　　ໄກທ້າວທ່າວຕາຍ ແລະບໍ

ນາງກໍຈົງໃຈຕັ້ງ　　ເວທາເທາະແອ່ວ

ເມືອຣອດຫ້ອງ　　ເມືອງໃຫ້ພໍ່ຕົນ ຫັ້ນແລ້ວ

ແກ່ນັ້ນທ້າວທອດປ້ຽມ　　ເຫັນຮ່າງໂຮມຂວັນ

ນະໂບຣາໄປເມືອງຄືນ　　ພໍ່ນານມາແລ້ວ

ເຈັດປີໄດ້ເຈັດເດືອນ　　ຄືນຄອບ ເຮົາແລ້ວ

ຜົວຜ່ອງນ້ອຍ　　ໄຄຄ້າວກຶນຄົນ
ໃຫ້ນາງປຸດປູ່ຍັ້ງ　　ຫາຍກຶນສະອາງຄົນ ກ່ອນຖ້ອນ
ຈຶ່ງຄ່ອຍມາໂຮງຫຼວງ　　ຣາຊວັງແວນໄດ້
ເມື່ອນັ້ນມະໂນຣາແກ້ວ　　ເຊົາຫໍໄກພໍ່
ຄຶດຣອດທ້າວ　　ນອນແລ້ງລວດກະສັນ
ຄຶງຄວນຄ້ຳ　　ຄືເປັນບ້າປ່ວງ
ເບົາວະນອດຣ້ອນ　　ໂຣມເສົ້າແສນຂມອງ
ນາງກໍຄຶດຄັ່ງແຄ້ນ　　ບໍ່ມີເຫືອດເຫີຍຫາ
ຄະນຶງຜົວຂວັນ　　ຊູ່ວັນມີເວັ້ນ
ປານນີ້ຜົວຂວັນຂ້ອຍ　　ມາເມືອງບໍ່ເຫັນນາດ
ພຣະພີ່ທົນສວາດກັ້ນ　　ກະສັນເສົ້າອ່າວຫາ ລະນໍ
ນາງກໍຊົລຫາໄຫ້　　ຫາຜົວນ້ອຍຍັ້ງ
ຫວັງວ່າພຣະພີ່ພຸ້ນ　　ຊິນຳນ້ອງດຸ່ງມາ ແທ້ແລ້ວ
ບຸດິກາບັ້ນ　　ມະໂນຣາໄລພີ່
ຕໍ່ແຕ່ນີ້　　ນາທ້າວຊິຕ່າວມາ ເຈົ້າເອີຍ ໆ

● ບັດນີ້ຈັກກ່າວເຖິງສີທົນທ້າວ ໄກນາງນອນປ່າ ກ່ອນແລ້ວ
ລອນທີ່ເນືອນຍາກທ້າວ　　ທົງຊ້າງຊວ່າງພົນ
ແຕ່ນັ້ນພຣະບາດທ້າວ　　ໄປຣອດແດນນະຄອນ
ຄອຍວັນສູນ　　ເລົາເຊົາພລານພົ້ນ
ພົນພລຶກສາພ້ອມ (ຈຳນວນພົນຫຼວງຫຼາຍ) ພາກັນຕັ້ງດູນ

| | |
|---|---|
| ພູວະບາດທ້າວ | ເຊົາຊ້າງຈອດເກີບ |
| ພໍເມື່ອດາວເຮືອແຈ້ງ | ໃສສ່ອງຣັງສີ ພຸ້ນເປີ |
| ຄອນ ໆ ໜາວ | ໝອກຣວາຍຣຳພຶນ |
| ສີຄາບຄຸ້ມ | ຄະນິງຫຼັງເຫຼືອຣຸ່ງ |
| ຄຶດຣອດນ້ອງ | ນອນຄູ້ຄ່ອຍພຽນ |
| ມີທີ່ຊິນຣອດແກ້ວ | ກ້ານກ່າຍກາກະສາ |
| ປຸນດັ່ງຊິນມະໂນຣາ | ເມື່ອເນົາໃນຫ້ອງ |
| ພໍຍາມທ້າວ | ໄສຍາເນຫເນ່ງ |
| ເປັນດັ່ງວິນສແນງລົ້ມ | ເລີຍຄ້ານຄ່ອຍຝັນ |

ປຸນດັ່ງທ້າວເທດທ້ວງ (ຄິນຕ່າງໜ້າ) ເອົາດາບດວງແສງ

| | |
|---|---|
| ຟັນແຂນຂວາ | ຂາດລົງເລີຍໄດ້ |
| ຝັນວ່ານັບຍັງຊ້ຳ | ສອງທີໃຫມຜ່າ |
| ຕັດເກດເກົ້າ | ເປັນບັ້ນບັ້ນພຣະສໍ (ຕັດຄໍ) |
| ພຣະບາດທ້າວ | ສະດຸ້ງດິ້ນດາຍສລົບ |
| ພໍ ດີສູນ | ສ່ອງໄພພະບາດ້າວ |
| ຣາຊາທ້າວ | ສີທິນເລີຍດິ້ນ |
| ແລ້ວຈາກຫ້ອງ | ຫໍແກ້ວອານພຣະກາຍ |
| ພຣະກໍຄຶດຄັ່ງແຄ້ນ | ເຖິງເຫດຄວາມຝັນ |
| ມະໂນໃນໝອງ | ສິງໄຟຟູນເອົ້າ |
| ບໍຣິວານພ້ອມ | ບໍພາເພົາວະໄພດ (ບໍພາເຂົ້ານາກິນ) |
| ພຣະບາດເຈົ້າ | ຄຶງຄ້ອນຄ່ອຍສເວີຍ |

ເມື່ອນັ້ນນາລາແກ້ວ　　ແຂວນຄໍເລີຍຂາດ
ດອກໄມ້ແກ້ວ　　ເລີຍແຫ້ງຫ່ຽວເຫີຍ
ສີທົບທ້າວ　　ເຫັນລາງເລີຍສເນງ (ຄຶດຕ່າງ)
ອັນນີ້ຮ້ອຍທີ່ແກ້ວພີ່ພຸ້ນ　　ພອຍບ້ານພາກພຣະອວນ ແທ້ເດ
ຫຼື ນ້ອງລິດຊີວນັ້ງນ　　ນ້ອຍນຶ່ງເມືອແມນ ແລ້ວເດ
ນະໂນຣາເອີຍ　　ສິງໃດເດເຈົ້າ
ຫຼື ເມ່ນແພງຂວັນຂ້ອຍ　　ຂືນທວງທິ່ງໂສກ
ເພາະເພື່ອວິໂຍກອ້າຍ　　ອິງຕີ້ຕ່ອນພຣະໄນ ພີ່ເດ
ພຣະຮ່ຳແລ້ວ　　ແລ້ວຮ່ຳເພິງຄຶດ
ເພາະເພື່ອໄກກອງສີ　　ພຣະເນດນອງຮຳແກ້ມ
ຫັດໄທທ້າວ　　ເທທວງກັ້ນສວາດ
ເປັນດັ່ງຂວັນຂຶດຂວ້າງ　　ບັງບ້ານິນໃນ
ພຣະເລົ້າໄລລາເວັ້ນ　　ວາງງາຍໄວ້ເປົ່າ
ຝູງໝູ່ເສນດເຈົ້າ　　ລະວັງທ້າວທ່ຽງຕະວັນ ແທ້ແລ້ວ
ນັບແຕ່ທ້າວຫອດໄທ້　　ທານນາດນະໂນຣາ
ຄືງໃຊຍອນ　　ປ່ວຍປານເປັນໄຂ້
ນັບແຕ່ໄກກູແກ້ວ　　ສາມເດືອນເດີນປ່າ
ພຣະບາດທ້າວ　　ຄະນຶງໄອ້ອ່າວປາງ ແລເດ
ເມື່ອນັ້ນຈັນທະເທດຜູ້　　ພົບພວກໂຈຣະກັມ (ພວກທຳການປຸ້ນ)
ມັນບໍ່ຍອມບັງປຸດ　　ທ່ຽວລະດົມດັ່ງສະທ້ານ
ພູນານທ້າວ　　ທັງພົບເມີນຜໍ່

ເຫັນໝູ່ນາງນຶກກຸ້ມ ຄວາມເຂົ້າເຂດນະຄອນ
ພຣະບາດທ້າວ ເລີຍລັ່ນທະນູສິນ (ໜ້າຈິງກິງ)
ປຸນດັ່ງທໍຣະນີເຟືອນ ຟັ່ງດິນດາຂວ້ານ
ປືນທະນູຟ້າງ ແສນດວງດັ່ງສນັ່ນ
ຄວັນນຶກກຸ້ມ ຕາວັນເສົ້າບໍ່ສ່ອງແສງ
ປືນເລົາຍັງສແວງອ້ອມ ຈັກກະວານລະວັງທົບ (ຮອບໂລກ)
ພູຜ່າຍຂວ້ານ ເຂົາຄ້ານໃຄ່ນຄອນ
ເນື້ອນັ້ນໃຈນນາງຮ້າຍ ນິວກະຫາຍເຫັນເຫດ
ຄືອາດຕ້ານຕໍ່ໄດ້ ດີເຂົ້າຂາບພຣະອົງ ຊອບແລ້ວ
ຄ້ອມວ່າແລ້ວ ດົກແຕ່ງບັນນາການ (ຂອງຝາກຂອງຕ້ອນ)
ນຳທູນຖວາຍ ພຣະຍອດທັມທົງເກື້ອ
ເນື້ອນັ້ນສົມພານແພ້ ນາງຂານເຂົາອ່ອນ
ເສິກມອດມ້ຽນ ເມືອງບ້ານຢູ່ເຢັນ
ພຣະກໍເຕີນພວກພ້ອມ ພົນໝື່ນມາເມືອງ
ເພື່ອຄະນິງມະໂນຣາ ລວດສະເຈົາໃຈເຈົ້າ
ຂຽວຄືນຂວ້ານ ເຂົາຍວງເຍື້ອນຍ່າງ
ເພາະເພື່ອຄຶດຮອດນ້ອງ ນາງແກ້ວນິງມະໂນ ແທ້ແລ້ວ
ພຣະບາດເຈົ້າ ມາຮອດແຄມນະຄອນ
ຍັງທີ່ສະຽງຄືນຂຽວ ຮອດນະຄອນຄອຍນ້ອງ
ເນື້ອນັ້ນສີຖານແກ້ວ ນາງດາພຣະແມ່
ໃຊ້ຂ້ານ້ອຍ ປະນົມນິ້ວກ່າວກອນ

ສີຫົນຮູ້      ຣິນກະສັນແສນແສນ
ປາກບໍ່ໄດ້      ບິນແຄ້ນຄັ່ງຫວງ
ຊົລເນດນໍ້າ      ນອງທຸ່ມທັ່ງສອງ
ພູມີສລົບ      ອອກຄວາມຫິວໄຫ້
ສັງນາເສັງດາຍແກ້ວ      ມະໂນຣາເຫຼົາຫຼໍ່ ອວນເດ
ສັງນາລະພີໄວ້      ເປັນຮ້າງຫ່າງສເນ ພີ່ນໍ
ເມື່ອນັ້ນພຣະບາດຕ້ານ      ດອນໝູ່ແສນເມືອງ
ອັນວ່າທາງເມືອເມືອງພູເງິນ      ດັ່ງລີໄກໃກ້
ບັດນີ້ກູຈັກນໍາແຝງແກ້ວ      ມະໂນຣາໄກຣາດ
ຄັນບໍ່ໄດ້ນາງນ້ອງ      ນາງແກ້ວແມ່ນບໍ່ຄືນ ໄດ້ແລ້ວ
ເມື່ອນັ້ນແສນເມືອງໄຫວ້      ບໍ່ມີທູນບາດ
ອັນວ່າທາງທ່ອງເຫົ້າ      ເມືອງນັ້ນບໍ່ຫ່ອນເຄີຍ ພຣະເອີຍ
ຝູງຂ້າຫຼອນປູ່ບ້ານ      ແຝງບາດນາບຸນ
ຜັດແຕ່ເປັນຄົນເຄີຍ      ບໍ່ຫ່ອນຫຽວທາງນັ້ນ
ປຽວວ່ານາຍພານຜູ້      ສແວງຍິງເມີຍນັ້ງ
ມັນຫາກເດີນດຸ່ງດັ້ນ      ທາງນັ້ນສ່ວນຊິເຄີຍ ບໍ່ຮູ້
ເມື່ອນັ້ນພຣະບາດທ້າວ      ເຮວຣີບມາພລັນ
ຫຼິງເຫັນຫໍຄໍາເຮືອງ      ເຮື່ອແສງໃສແກ້ວ
ມົນທຽນທ້າວ (ເຮືອນຫຼັງໝຽງ)      ອາພາໃສສ່ອງ
ທຸກກິ່ນໄມ້      ລາຍລ້ວນລວດມະນີ
ພຣະຈອດຊ້າງ      ຊັກແທບທຽມເກີຍ

ປຽວວ່ານະໂບຣາບັງ    ປູ່ຄອຍຄອງອ້າຍ

ເມື່ອນັ້ນພຣະມຫາຄຸນຄ້ຳ    ນານດາຖແລງກ່າວ

ບັດນີ້ນະໂບຣາດນ້ອງ    ບິນໄດ້ພ່ຳນານ ແມ່ແລ້ວ

ທ້າວກໍ່ຍ່າວ ໆ ນ້ຳ    ຊິລເບດນອງໄຫຼ

ຄະນິງເມັຽຂວັນ    ສແນ່ງວິນວຽນເກົ້າ

ຍັງບໍ່ບັນເທົາຂື້ນ    ຂນິງທ.ອງທິງໂສກ

ດີນພຣະເຈົ້າຕົວສ້ອຍ    ຄືໄຂ້ບໍ່ສະບາຍ

ເທື່ອນີ້ອຸປໂລກຮ້ອນ    ຣິນຍິງໄຟກັບ ແລະນາ

ເມັຽຂວັນເຂີນ    ພາກຄືງຄືນ້ຳ

ພໍເມື່ອສຸຣະພາເສົ້າ    ສູນດອຍຄ້ອຍຄ່ຳ

ພຣະກໍ່ນ້າວແຜ່ນຜ້າ    ຊິນແລ້ວເລົາວາງ

ຣິດຣ່ວງເຮົ້າ    ນາງເທບກັລຍາ

ຄືດັ່ງຫອມມິນທາ (ດອກໄມ້ຫົບ)    ເທພສວາງສວັນຟ້າ

ປານນີ້ມະໂບຣາແກ້ວ    ເດີນດຽວດັ້ນດຸ່ງ ໃດນໍ

ນ້ອງເລົາພາກພີໄວ້    ຂວັນຂ້ອຍຊີຂາດດອນ ແລເດ

ພຣະກໍ່ໂສຍາເບື້ອນ    ດີນດຽວດົນດັ້ນ

ຝູງສນິມໜຸ່ມນ້ອຍ    ລຽນລ້ອມນັ້ງແຝງ

ພຣະບໍ່ຄືດອ່າວເອື້ອ    ຍິນຊື່ນຊີນໃຜ

ຄືດັ່ງຂອນຄີນຕາຍ    ປູ່ເຜືອແຝງຂ້າງ

ບັດນີ້ເມືອງມິວຮ້າງ    ເສັຽສີສັນປ່ວຍ

ຍາມເມື່ອນ້ອງປູ່ຕຸ້ມ    ນະຄອນຄ້າຍເທພດາ ພີ້ເດ

ນ້ອງພີເປັນດັ່ງຂາງເມືອງໝັ້ນ ສເມນທອງຫງຽນອາດ
ລືທີ່ຮາກໂຄ່ນແລ້ວ ລອນຕັ້ງຕໍ່ປະສານ ໄດ້ເດ(ຕິດຕໍ່ກັນ)
ບັດນີ້ມະໂນຣາອ້າຍ ໄປຈອນເຈັຽຣະຈາກ ເສັຽແລ້ວ
ລອນທີ່ຂັນທາດຕັ້ງ ດອນໄວ້ດັ່ງຂອນ ພີແລ້ວ
ຖ້າບໍ່ໄດ້ນາດນ້ອງ ນາງເທບມານີ ເມື່ອໃດ
ພີ່ບໍ່ຫວັງຄອງເມືອງ ສືບຊີວັງໄປໄດ້ (ຢູ່ຢ່າງມີຊີວິດ)
ແມ່ນຊິແສນສາວລ້ອມ ຕາງຕາດິນອຸ່ນ ກໍຕາມຖ້ອນ
ລືໄປປຸນປຽນແກ້ວ ພຣະກູພຸ້ນຜູ້ດຽວ ໄດ້ເດ
ນັບແຕ່ພຣະທອດໄຫ້ ຫານາດມະໂນຣາ
ວັນໃສແສງ ສ່ອງມາເມີນແຈ້ງ
ເມື່ອນັ້ນນໍຣິນທ້າວ ທັບພາມາຮັບ
ພຣະບາດທ້າວ ຈອມເຈົ້າທ່ຽວຖາມ (ຮີບຖາມ)
ທ່ານນີ້ເຄີຍທ່ອງເທົ້າ ທາງປ່າຫີມພານ ທີ່ພຸ້ນ
ຫິນທາງເມືອເມືອງພູເງິນ ເງື່ອນໃດຂໍແຈ້ງ
ເມື່ອນັ້ນພານໄພນ້ອມ ປະນົມກອນກົ້ມຂານ
ທູນບາດຜູ້ ທາງເທົ້າບໍ່ເຄີຍ ພຣະເອີຍ
ທີ່ວ່າຍັງຮ່ອມຮູ້ ຈອມເກດພຣະຣືສີ ທີ່ພຸ້ນ
ຫິນທາງເມືອງພູເງິນ ທ່ານຊິເລິງລອນຮູ້
ເມື່ອນັ້ນພູທອນທ້າວ ຍິນດີຊົມຊື່ນ
ປະທານນາດແນ້ງ ພໍລ້ານແກ່ພານ
ບັດນີ້ທ່ານຈົ່ງພາເຮົາຂວ້ານ ພຣະຄືຣີແຖວເຖື່ອນ ໄປເຖິງ
ເຖິງທ່ານໄຫ້ ຮັດສີແລ້ວຈົ່ງຄືນ ທ່ານເອີຍ

ພານກໍວັນທາໄຫວ້ ພູທອບລາເລີກ
ເມືອຮອດຫ້ອງ ເຮືອນແລ້ວສັ່ງເມັງ
ບັດນີ້ພີຈັກຮານຊິນແກ້ນ ຈອມຂວັນເຂີນຫ່າງ ແລະບໍ
ອ້າຍຈັກໄປສົ່ງເຈົ້າ ຈອມສ້ອຍໃສ່ຫາງ ກ່ອນແລ້ວ
ພໍວ່າເຖິງແຫ່ງຫ້ອງ ແດນດ່ານພຣະຣືສີ ເມື່ອໃດ
ພີຈັກໂຄຈອນຄືນ ກ່ອນພຣະໄມມີຮ້າງ
ເມື່ອນັ້ນນາງເມັງຕ້ານ ຖແລງຄວາມຄໍາຊອບ
ໄປປ່າຊ້າ ບານນີ້ໃຫ້ດ່າວມາ ໝ່ອມເອີຍ
ພໍເມື່ອສອງຈາແລ້ວ ຫາທະນູຫງຸມແຫບ
ພານກໍພາຍແຫ້ງແລ້ວ ແຍງເຈົ້າບໍ່ນານ
ສະພູ່ພ້ອມ ອາມາດມົນຕີ
ໂຮມພົບທານ ໃຫ່ນໍາບາທ້າວ
ຝູງໝູ່ຊາວເມືອງໃຫ້ ຫາບາກົ້ງເກື່ອນ
ປິຕຸເຣດເຈົ້າ (ພໍ່) ໃຈບ້າຫອດຫິວ
ພໍ່ກໍຫ້າມລູກແກ້ວ ກູບໍ່ມີພັງ ແລະບໍ
ລູກສັງຊີໄລເມືອງສູບ ເປົ່າແປນເປັນຮ້າງ
ອັນວ່າບົວບາງລ້ອມ ສບົນໃນນ້ອງພີ
ຕາມແຕ່ລູກເລືອກເລັ້ນ ຊົມຊ້ອນສວ່າງພຣະໄທ ພໍ່ຖ້ອນ
ລູກຢ່າເອື້ອ ເອົາອື່ນມາແຝງ
ນາງນັ້ນບົນບົນໜີ ໜ່າຍສະອາງເອື່ອນເອົ້າ
ເຂົາບໍ່ໃສດາດ້ວຍ ຊີເດີນດອນດັ້ນດຸ່ງ ເປັນລື

ປງວວ່າເສັງເດດທ້າວ    ຕາຍຄ້າງແດ່ເຂົາ ບໍ່ຮູ້
ເມືອນັ້ນບາສີຕ້ານ    ຈາຣະຈາດອນພໍ່ (ເວົ້າໂລມກັນ)
ເປັນເພື່ອພຣະພໍ່ໃຊ້ເຂົາຂ້າ    ນາງນ້ອຍກໍຈິງໜີ ພຣະເອີຍ
ຖ້າວ່າລູກບໍ່ໄດ້    ໂດຍດັ່ງຄຳຄະນຶງ ເທື່ອນີ້
ລູກບໍ່ຫວັງຄືນຄອງ    ຄອນນະຄອນອາຍໜ້າ
ແມ່ນວ່າພາຣາໄວ້ (ເມືອງ)    ວາງອິງປິຕຸເຣດ
ລູກຂໍຂາບພໍ່ເຈົ້າ    ຈອນດັ້ນດຸ່ງພະນອນ ກ່ອນແລ້ວ
ພຣະກ່າວແລ້ວ    ເລຍສັ່ງຊາວເມືອງ
ທັງຈອມຂວັນ    ພຣະແມ່ເມືອງຢ່າຮ້ອນ
ບັດນີ້ລູກຈັກໄຄຈອນດັ້ນ    ເດີນຕາມນ້ອງຂຶ້ນ
ຂໍແມ່ຍືນໝັ້ນນີ້    ຢ່າເສົ້າຄ່ອຍຄິງ ແດ່ຖ້ອນ
ຄ່ອຍຢູ່ດີເປີຟູງສນິມເຊື້ອ    ສາວສີສິນຄ່າ ອວນເອີຍ
ບັດນີ້ອິກພີ່ຣາມຮູບນ້ອງ    ເລີຍຊິເສົ້າໝົ່ນໝອງ ແລະນໍ
ຄ່ອຍຢູ່ ດີເປີປາງປະຄີເຂັ້ນ    ວິໄຊຍິນເຮືອງໂລກ ກູເອີຍ
ເຮົາພີ່ຣາມຮູບນ້ອງ    ເລີຍຊິເສົ້າໝົ່ນໝອງ ແລະນໍ
ຄ່ອຍຢູ່ດີເປີຜາສາດແກ້ວ    ກົງຣາດນຸງນະບີ ພີ່ເອີຍ
ຕັ້ງຫາກເມືອງ ໆ ໃສ    ສ່ອງຄຳແກມແກ້ວ
ກ່ອຍຢູ່ ດີເປີພັງພາຍຊ້າງ    ນາເຄນຕົວປະເສີດ ກູເອີຍ
ກູຫາກຣາມຂີ່ປ້ອງ    ຊົມຫຼີ້ນມ່ວນເມືອງ ແທ້ແລ້ວ
ຄ້ອມວ່າພຣະສັ່ງແລ້ວ    ລາຈາກສນາມໄຊ
ຫວາຍທະນູສິນ    ອອກເມືອງຍາມເຊົ້າ

ນາຍພານພ້ອມ　　　　ພາພຣະອົງເດີນດຸ່ງ
ມັນກໍພາຍແຫຼ້ງໜ້າ (ບົ້ງລູກໜ້າ)　ອວນເຈົ້າສູ່ໄພ
ໄທລູກທ້າວ　　　　ຫົກໝື່ນມີນດີ
ແສນຍາກອນກຽນຕີປະດັບ　　　　ດຸ່ງຕາມດີນນ້ອຍ
ອາຊະໄນພ້ອມ (ມ້າ)　　　　ຮຽງເກີຍຣົດທະຣາດ
ເດັ່ງຣະດາດລົ້ນ　　　　ນຳເຈົ້າບໍ່ໄລ
ນັບແຕ່ພຣະພາກຫ້ອງ　　　　ເຫີນຫ່າງກຸງສີ
ເປັງຈານສູນ　　　　ດັ່ງດີງແດນຊ້າງ
ເມື່ອນັ້ນອິນຕັດແຈ້ງ　　　　ເຫັນບາເດີນດຸ່ງ
ກໍຈືງລົງຊ່ອຍຫັ້ງ　　　　ທາງໄວ້ບໍ່ໃຫ້ໄກ
ວັນດຽວໄດ້　　　　ທາງໄກສິບສອງໂຍດ
ຝູງໝູ່ຂ້າມະຫາດໄທ້　　　　ນຳເຈົ້າບໍ່ທັນ ແທ້ແລ້ວ
ອັນວ່າພົນແພນພ້ອມ　　　　ອົນທະການກາງປ່າ
ເລີຍເລົາຫຼົງແຈ່ມເຈົ້າ　　　　ຈອມຊ່ອຍເທພຄຸນ ເຈົ້າເອີຍ
ພໍດູອາພັສຣາຟ້າ　　　　ຟາງຝົນໜາວໜ່ວງ ພຸ້ນເປີ
ພຣະພໍ່ຫຼຽວເຫຼືອ ອດປ່ຽນ　　　　ແບນນ້ອຍບ່ອນຊີເດີນ
ແມ້ງບຶ່ງເຖີງແຖວພື້ນ　　　　ພລານຫີນເຫວຫຼົງ
ທາງຮ່ອມຫ້ວຍ　　　　ຜາຊັ້ນຊໍ່ຊັນ
ລືນາດທ້າວ　　　　ຜູ້ຜ່ານແສນເມືອງ
ທົນທວງທຸກ　　　　ຊີບໍ່ບິນໄປໄດ້
ແລ້ວຈືງບໍ່ມີໄຫວ້　　　　ປະນົມກອນທູນບາດ

ຂໍເຊີນເຈົ້າຕ່ອນຕີ້ ຄືນເຂົ້າຄອບບະຄອນ ກ່ອນເຖີ້ນ
ອັນນີ້ຕັ້ງຫາກວິບາກແທ້ ເປັນຕາດເຫັວຫີນ
ລືຈັກປີນປາຍຜາ ຜ່າເລີຍລິງໄດ້
ຂໍພຣະໄລລາຖີ້ມ ນະໂນຣາບ້ອງຂຶນ
ແລ້ວເລົາຄືນຄອບຫ້ອງ ທໍາແກ້ວກ່ອມສບົມ ພຸ້ນຖ້ອນ
ນາງນັ້ນບິນລ່ວງລ້າ ອາກາດກາງຫາວ
ເຈົ້າພີ້ເດີນທາງດີນ ດັ່ງໃດຊິທັນນ້ອງ
ອັນນີ້ ຊິວ່າແນນບໍ່ມານໍາຂ້ອງ ເຂີນກັບໄກຫ່າງ
ຕິກປູ່ທາງລະພາກຟ້າ ຊິຫາໄດ້ຮ່ອມໃດ
ປຸນດັ່ງຊາວມະໂນໃບ້ ຂັບກວງນນໍານິກເຈົ້າ
ລືອາດເຫັນຮອດບັ້ງ ປຽວແຫ້ງຫອດຕາຍ ແທ້ແລ້ວ
ຫຼ້າງວ່າບຸນຄາດແຄ້ວ ຫາກຈັກໄດ້ຄອຍເຫັນ ພຣະເອີຍ
ຫຽນດັ່ງຊຸບລູທົງລວາພອນ ຜັ່ນນໍານາງອົ້ວ
ອັນວ່າເບົາວະກາແກ້ວ (ຜູ້ກໍາລັງອ່ອນ) ທົງຄວາຍຄາວກ່ອນ
ທ້າວທ່ອນທົງຂີ່ມ້າ ຕາມນ້ອງບໍ່ຫ່ອນທັນ ດອກນາ
ອັນນີ້ໂລກເລົາໄວ້ ປາງກ່ອນການຂວາງ
ຂໍພຣະຄືນເມືອເມືອງ ປ່າຊິຕວຍຕາມນ້ອງ
ອັນນີ້ໄພຂວາງຂັ້ນ ເຫັວຕັນເຕັງຊ່ອງ
ມີທັງສີງແຮດຊ້າງ ຊຸມເນື້ອອະເນກນອງ (ນັບບໍ່ໄດ້)
ລໍານາກແຄ້ນ ຫ້ວຍຮ່ອມຣາວເຂົາ
ລືຈັກທົງຕີນເດີນ ດຸ່ງດຽວພຣະອົງໄດ້

ແຕ່ນັ້ນສີທົນທ້າວ    ຖແລງຄຳຄຸນຄຽດ
ພີບໍ່ໄດ້ນາດນ້ອງ    ແພງຕີ້ຊີຕ່າວຕີນ ໄດເດ
ຖ້າບໍ່ພົບອ່ອນອ້ວນ    ອົງອາດມະໂນຣາ ເມື່ອໃດ
ເຮົາບໍ່ ຄືນເມືອເມືອງ    ໃຫ້ໄພ່ໄທຫ້ຽນຫ້ຽງ
ເມື່ອນັ້ນຝູງເຂົາແຄ້ນ    ຄາງດອນນາບ່າວ
ຫູນແຈ່ມເຈົ້າ    ຈອມສ້ອຍກໍບໍ່ຟັງ ແລະນໍ
ຄ້ອມວ່າຂຸນກ່າວແລ້ວ    ທ້າວເລົ້າເລີຍລາ
ນາຍພານໄພ    ລ່ວງທາງນຳເຈົ້າ
ຝູງໝູ່ແສນເມືອງພ້ອມ    ພາກັນເອື້ອນອ່ວຍ
ຫຼາຍຂວບນີ້    ຄືນເຂົ້າເຂດນະຄອນ
ສາມເດືອນໄດ້    ເດີນດົງດອນພຣະບາດ
ດູດັ້ງທຸກທໍ່ຟ້າ    ຄະນຶງທ້າວທ່ຽວດົງ ແຫ້ແລ້ວ
ບຸດີນັ້ນ    ເສນານຳສົ່ງ
ຕໍ່ແຕ່ນີ້    ນາທ້າວຊີດຸ່ງດຽວ ເຈົ້າເອີຍ ໆ

● ບັດນີ້ຈັກກ່າວເຖິງສີທົນຜ້າຍ ພູສູງແສນງ່ອນ ກ່ອນແລ້ວ
ທຸກໜື່ນຊຸ້ນ    ນາທ້າວຄ່ອຍຖນອມ
ເລີຍເລົ້າໄປຮອດຫ້ອງ    ຫີນແຫ່ງຈອມຫັ້ນ
ເມື່ອນັ້ນພູທອນທົງ    ກ່າວພານໄພກ້າ
ບັດນີ້ທ່ານຈົ່ງຄືນຫາຫ້ອງ    ເມືອງຫຼັງບ້ານເກົ່າ ເທາະເນີ
ເຮົາຈັກດັ້ນດຸ່ງຜ້າຍ    ຫານ້ອງຜູ້ດຽວ ກ່ອນແລ້ວ

ຄ້ອນວ່າພຣະກ່າວແລ້ວ　　ພານພາກພອຍພຣະອົງ
ດົນດຽວດົກ　　ຕ່າງແດນດູໝ້ອມ
ຍາມນັ້ນພຣະຣືສີເຈົ້າ　　ຫຼຽວເຫັນພູວະນາດ
ພຣະກໍຄຶດສລາດຮູ້　　ນາງແກ້ວສັ່ງຄວາມ
ອັນນີ້ແມ່ນເຜົ່າເຊື້ອ　　ຜົວມຶງມະໂນຣາ ແທ້ແລ້ວ
ໂຄຈອນນໍາ　　ນາດຸຣຸນຣາໄຫ້
ເມື່ອນັ້ນສີທົນທ້າວ　　ສະເດັດເຖິງຍົວຣະບາດ
ເຂົ້າຂາບກົ້ມ　　ທູນນົ້ວນອບຄະດີ
ບັດນີ້ຈອມພຣະຄຸນສ້າງ　　ສົມພານຍັງຄ່ອຍປູ່ ດີຫຼື
ຝູງໝູ່ມັນນາກໄມ້　　ມີພ້ອມເພື່ອນບຸນ ແດ່ລື
ເມື່ອນັ້ນຟ່າຍ ໆ ໜ້າ　　ຈອມເກດພຣະຣືສີ
ພາທີໄຂ　　ຂ່າວນາບັນແຈ້ງ
ເຮົານີ້ເປັນຊີສ້າງ　　ສົມມະນາໃນເຖື່ອນ
ຍັງຄ່ອຍສຸກປູ່ເບື້ອນ　　ຖ້າໄຂ້ຫ່າງເຫີບ ທ່ານເອີຍ
ແມ່ນວ່າມຸນມັນພ້ອມ (ຫົວເຜືອກຫົວມັນ) ຂອງຄວນພິຊໂພດ
ມີບໍ່ໄຮ້　　ພໍລ້ຽງຊີບຊີວັງ ປູ່ນາ
ເມື່ອນັ້ນນາບຸນທ້າວ　　ທູນຖາມຖແລງເຫດ
ພຣະຫາກຊົງເພດສ້າງ　　ສິບລ້ານເລີດຄຸນ
ຍັງເລົ້າເຫັນໂສມນ້ອຍ　　ມະໂນຣາລົງແວ່ ບໍ່ເດ
ຂໍພຣະຊີຮ່າງເບື້ອງ　　ບົນຂ້າຂອບຄຸນ ແດ່ຖ້ອນ
ເມື່ອນັ້ນພຣະຕອບຕ້ານ　　ເຫັນແຫ່ງມະໂນຣາ

24/VII

ລິງເຊີວພັກ ເພິ່ງເຣົາຄາວນ້ອຍ
ທ່ານນີ້ເນົາແດນກວ້າງ ກາບໃດດັ້ນດຸ່ງ
ທ້າວຕອບຕ້ານ ຕົນຂ້າແມ່ນຜົວ ພຣະເອີຍ
ຢູ່ປະເທດດ້າວ ຊັ້ນຊື່ເປັງຈານ
ຂ້າກໍນຳນາງພັດ ພາກພອຍເມືອງບ້ານ
ເພື່ອຄະນິງນາງນ້ອຍ ມະໂນຣາເລີຍລ່ວງ
ຂວ້າມຂວ່າງດ້າວ ມາພີ້ພ່ຳນານ ພຣະເອີຍ
ຂໍພຣະໄຂຂານຊີ້ ທາງທ່ອງເຖິງນາງ ແດ່ຖ້ອນ
ຂ້າຈັກຕວຍຕາມຕິດ ບໍ່ໄລວາງເວັ້ນ
ຍາມນັ້ນສີທົນຄ້ຳ ຄະນິງນາງນ້ອງຖ່າວ
ນ້ຳພຣະເນດທ້າວ ຍົນຍ້ອຍຍ່າວໄຫຼ
ເມື່ອນັ້ນຣືສີເຈົ້າ ຈອມທັມທົງກ່າວ
ຂໍແກ່ພຣະຢ່າຮ້ອນ ເຄືອງແຄ້ນຄ່ອຍທົນ
ອັນວ່າເນື້ອໝື່ນນ້ອຍ ນາງນາດມະໂນຣາ
ບິນບົນເທາະ ຮອດເຣົາພາຍພີ້
ຍັງທໍ່ ພີທູນແກ້ວ ກອງມະນີນາງຝາກ
ໄວ້ໃຫ້ທ້າວ ເໝືອນໜ້າຢ່າໄປ ວ່ານາ
ອັນວ່າພາຍໜ້າພຸ້ນ ຍາກຍິ່ງແສນເຂັນ
ໄພຂວາງຫຼາຍ ເພດພາຍໂພງເປົ້າ
ມີທັງພູເຂົາຂວ້າງ ຂວາງທາງຫຼວງທ່ອງ
ມີທັງສັດສິງຮ້າຍ ຊີໂຮມເຮົ້າຮອດພຣະອົງ ແທ້ແລ້ວ

ເມື່ອນັ້ນພຣະບາດເຈົ້າ ທິງແທ່ນເປັງຈານ
ບານແຫວນສຸບ ສອດມືໂຫມກັ້ນ
ທີບສະແດເທົ້າ ເຖິງບາງດົ໊ນດັ່ນ
ພຣະຄ່ອຍໂຈມຈູບແກ້ວ ຕາງນ້ອງຄ່ອຍກະສັນ
ອັນວ່າໄກຣາດກວ້າງ ເອົາໃຫ່ງພູເງິນ ທີ່ພຸ້ນ
ແມ່ນຊິພັນໂພງຜີ ຂ້າບໍ່ຍິນຍອມງ້
ແນມທໍ່ເຫັນອິງນ້ອງ ບາງອິນເອົາຫຼໍ່
ແມ່ນຊິຍາກທໍ່ຟ້າ ຕົວຂ້າທ່ອນຖອຍ ໄດ້ເດ
ພຣະກ່າວແລ້ວ ຣັງສີເລົ່າໂຣມຂວັນ
ຂໍທ່ານຟັງຄວາມເຮົາ ປ່າຊິລອບລວນຮ້າຍ
ອັນວ່າໄພຂວາງພຸ້ນ ພຶງຄະນາເປົ້າປ່າ (ໝູ່ຜີໝູ່ເຜດ)
ມີທັງງູງອດຮ້າຍ ຫຼາຍລົ້ນລຸງນຜາ
ກັບທັງໂພງພາຍບ້າ ເຫັນຄົນມືປ່ອຍ
ມັນກໍອ່ອຍຫຼ່ອຍລ້ ລວງຂ້າໄຂວ່ຂິນ ພຣະເອີຍ
ອັນວ່າຣິດທີເດດທ້າວ ລືອາດອິງດຽວ
ມີທັງພິງໄພຂຽວ ເຂືອນພະນອມແນວໄມ້
ບາໄທທ້າວ ເດີນດຽວດັ້ນດຸ່ງ
ໃຫ້ຣ້ອຍຂໍທ້າມນ້ອຍ ປ່າເອື້ອອ່າວກະສັນ ພໍ່ຖ້ອນ
ພຣະຣັດສີກ່າວແລ້ວ ທ້າວໝູ່ມຫູນຖແລງ
ວາຈາຂານ ຂອບພຣະຄຸນທັງໄຫ້
ນັບແຕ່ຂ້າພາກບ້ານ ໄກແກ່ວເມືອງມາ

ຊາວສາມວັນ　　ຮອດພຣະອົງເປັນເຈົ້າ
ເພາະເພື່ອບິນກະສັນແຄ້ນ　　ຮີນຫວງທອດທ່າວ
ລື້ອາດກັບຕ່າວຕັ້ງ　　ຄືນໄດ້ດັ່ງໃດ ພຣະເອີຍ
ແມ່ນຊິແສນສັດລ້ອມ　　ຕັນທາງຫຼວງທ່ອງ ກໍຕາມຖ້ອນ
ຂ້າບໍ່ຍິນປ່ອນປ້ານ　　ຕາຍແລ້ວສວ່າງກັນ ດອກນາ
ແນນທີ່ຈອມທັນເຈົ້າ　　ກູນາຊື່ຊ່ອງ
ຂ້າຈັກດັ້ນປ່າໄມ້　　ບໍານ້ອງບໍ່ໄລ ພຣະເອີຍ
ຄ້ອນກ່າວແລ້ວ　　ນ້ຳພຣະເນດນອງໄຫຼ
ວາງຄີງທິບ　　ທ່າວໄປເລີຍລົ້ມ
ທິບສະແດື້ນ　　ຕອນຕິນຕາຍສັ່ນ
ພຣະຮັດສີລ່ຳແລ້ວ　　ເລີຍຄ້ານອຶດູ
ແລ້ວຕອບຕ້ານ　　ໂຮມລູບຈອມຂວັນ
ຄັນບໍ່ຟັງຄຳເຮົາ　　ຊິບອກທາງຫຼວງດ້າວ
ຖ້າພຣະເດີນດອນໄທ້　　ນະໂບຣາເລີຍລ່ວງ ໄປນັ້ນ
ໃຫ້ລະວັງເຄືອງເຂົ້າ　　ຂອງລ້ຽງຊີບຊີວັງ
ອັນວ່າຝູງໝາກໄມ້　　ນີ້ມ່ວງຊາງສຸກ ກໍດີ
ຄັນພຣະເຫັນລິງກິນ　　ກໍຈົ່ງກິນດອນໄດ້
ຄັນພຣະເດີນດຽວຂວ້ານ　　ດົງໜາຫຼາຍລັ້ນ
ທີ່ນັ້ນມີໝູ່ຊ້າງ　　ຊິນກ້ຽວກ່າຍງາ
ຄັນທາກມື້ນທີ່ນັ້ນ　　ເປັນປ່າເຫັວຫີນ
ທາງຮ່ວມຫຼວງ　　ລອດງວງງາຊ້າງ

ພຣະຈິ່ງຣວາຍນິນງ້າງ　　ງາເງິນແລ້ວລ່ວງ ໄປຖ້ອນ
ກາຍດ່ານນັ້ນ　　ເຖິງພົ້ນພາກພລານ ເມື່ອໃດ
ກໍຫາກລາງລືແທ້　　ຜີແປງເປັນຕ່າງ
ລວງຫຼອກລໍ້　　ກິນຊີ້ນຊາກຄົນ
ຂໍໃຫ້ພຣະຜານດ້ວຍ　　ນິນໝາກນາວການ ນັ້ນເນີ
ແລ້ວຈິ່ງແນງທັນໂຫມ　　ປ່ອງກາງກາຍໄດ້
ຖັດນັ້ນຍັງມີຍັກໃຫຍ່ຮ້າຍ　　ຕົວສູງສຸດຂນາດ
ເຈັດຊົ່ວຕົ້ນ　　ຕານກັ້ງກໍຈິ່ງເຖິງ
ໃຫ້ຜານດ້ວຍ　　ນິນເປົ່າປື້ນຍິງ
ຄັນວ່າປືນແປວພິດ　　ພຸ່ງກາຍໄປໄດ້
ບໍຣິນໃຊ້　　ຕາງຂົວຂວ້າມໄຕ່ ໄປເຖິ້ນ
ຄັນຫາກນີ້ມທີ່ນັ້ນ　　ເຖິງນໍ້າແມ່ຫຼວງ
ນໍ້ານັ້ນຍໍ ຍື່ນຈໍ້າ　　ເຫຼັກເປື່ອຍເປັນຜົງ
ແຄມຊິນມີເຫຼືອມເຫຼົາ　　ແວດວົງລະວັງໄວ້
ນິນເປົ່າແລ້ວ　　ຫາຕົນເຕັ້ນໄຕ່ ໄປຖ້ອນ
ພາຍໜ້ານັ້ນ　　ຣິມຫ້ວຍປ່າຫວາຍ
ຍັງມີອິນທີຮ້າຍ　　ທັສດີ ລີງເດີນຮອດ (ນົກມີຮູບຄືຊ້າງ)
ເຂົານັ້ນບິນຕລອດລ້າ　　ໄກແກ້ວຊູວັນ
ໃຫ້ພຣະຣວາຍນິນຂື້ນ　　ແຂວນຂິນເຂົາຢູ່
ນົກຈັກພາແຈ່ມເຈົ້າ　　ຈອນສ້ອຍສູ່ພຣະນາງ ແທ້ແລ້ວ
ເມື່ອນັ້ນສີທົນທ້າວ　　ທົ່ງພຣະກອນຟັງທີ

ປະນົມນອບໄຫວ້ ໂດຍແຈ້ງແຈ່ມຄະດີ
ບັດນີ້ຂ້າຈັກລາບາດໄຫ້ ຫງວເຫດເດີນດົງ ກ່ອນແລ້ວ
ຂໍພຣະທົງຄຳສຸກ ປູ່ຍືນຢ່າຮ້ອນ
ຂໍຄຸນແກ້ວ ຈອມທັມນຳເຫຼືອມ
ປົກປົ່ນປ້ອງ ຕົວຂ້າຢ່າໄລ
ຂໍໃຫ້ລຸລາບໄດ້ ມະໂນຣາດມານີ້ ແດ່ຖ້ອນ
ຂ້າຂໍວອນເທພາ ຊູດົນແດນຟ້າ
ກັບທັງອິນຕາເຈົ້າ ຄວາງສວັນແສນໂຍດ
ຄຸດນາກນ້ຳ ນາງນ້ອຍເມກຄະລາ
ທຸກທີ່ພ້ອມ ໄພຍະນາດເຂົາຂວາງ
ອິສູນທໍຣະນີ ນາຄຸຣຸນລົງປົ້ມ
ຂໍໃຫ້ປຸນປອງເວັ້ນ ໄພພານພ້ອມເພີງ
ຍາມເມື່ອແຄ້ນຄັ່ງເສົ້າ ເຊີນຊ້ຳຊ່ອຍຫຼຽວ ແດ່ແມ
ອັນນຶ່ງຂໍໃຫ້ນຳປົ່ນປ້ອງ ຮັກສາຣາດນາງເມືອງ ທີ່ພຸ້ນ
ນ້ອງພີ່ເນົາແດນໃດ ດ່ານທາງຂໍແຈ້ງ
ຂໍໃຫ້ແນມນຳນ້ອງ ຕາງຕາຕ້ານຂ່າວ ອວນຖ້ອນ
ບອກວ່າພຣະພີ່ພຸ້ນ ພອຍບ້ານດຸ່ງຕາມ ວ່າເນີ
ຂໍໃຫ້ນ້ອງນາດເບື້ອນ ຄອບອຸ່ນເອົາແຝງ
ຜູ້ເພີ່ນມີຍານສູງ ໃຫ້ສ່ອງແນມນຳນ້ອງ
ພໍຍາມທ້າວ ສີຫົນທູນນາດ
ພຣະກໍແປະແຜ່ນພື້ນ ຕີນເຈົ້າໃສ່ຫົວ

ແລ້ວຈຶງບົວລະບາດບ້າຍ　　ເດີນດຸ່ງໄພຂວາງ
ທັງຄະນຶງໝັ້ງຂວັນ　　ບັ່ງເຊົາຊົງບ້າ
ປານນີ້ມະໂນຣາແກ້ວ　　ລືມພຣະອວນອົງພີ ແລ້ວນໍ
ລືແມ່ນມີໃໝ່ຊ້ອນ　　ຫຽມຂ້າງກ່ອນພີ່ຊາຍ ແລ້ວນໍ
ກໍຫາກເຫຼືອແຮງອ້າຍ　　ກອຍມະໂນນຳແອ່ວ
ປຸນດັ່ງເນື້ອນິກຣ້າງ　　ຣານຊູ້ພາກຣັງ
ເຖິງເມື່ອວັນສູນຄ້ອຍ　　ຄາແລງແລ້ວຄ່ຳ
ພູວະນາດທ້າວ　　ຄະນຶງນ້ອງເບັ່ງນອນ
ບັດນີ້ກັນກູແລ້ວ　　ເວນໃດເດີນຄອນ
ຈຶງໄດ້ພັດພາກຊ້ອນ　　ຊິມດ້າວດຸ່ງດຽວ ນີ້ເດ
ຫຼືກູໄດ້ພາກຣ້າງ　　ໝັ່ງທ່ານທັງຜົວ
ຣານພອຍພັດ　　ກຶງແນນນຳໃຊ້
ຫຼືແມ່ນເອົາສັດເຊື້ອ　　ຄະນາກາໂກຄູ່
ຜົວແອ່ວປ້ອງ　　ບິນໄຫ້ຣ່ຳຫາ
ເປັນດັ່ງຕິນກູແກ້ວ　　ໂກນາງມະໂນຣາດ
ຣູ້ວ່າເວນກ່ອນກີ້　　ນຳໃຊ້ສົງເຖິງ ແລນໍ
ຈຶງໄດ້ພັດພາກຣ້າງ　　ຣານອ່ອນອົງອິນ
ຫຼົງພອຍພັດ　　ປູ່ດອນດົງເນື້ອ
ພຣະຄ່ອຍທົງຄຳແຄ້ນ　　ແຄວນຕາຍແລ້ວຣ່ຳ
ມະໂນຣາດຄຸ້ນ　　ຄືບ້າບໍ່ສະບາຍ
ພໍຍານເນື້ອນ　　ໄສຍາແລ້ວຕື່ນ

ທ້າວຮຸ່ງຫ້ອງ ເມືອງບ້ານບໍ່ບານ
ໂອບໍປານນີ້ແສນເມືອງໜ້ອມ ເຖິງອວນເອື້ອອ່າວ
ເຈົ້າເຄີຍເປັນເຂື່ອນຂັ້ນ ແຂງບ້ານບໍ່ໃຫ້ເຄືອງ ແຫ້ນາ
ມາອີດູລູກທ້າວ ຫວຍແຫບໄຫຫານ ພູເດ
ປານນີ້ຊູມເຂົາຂຸນ ຊິຢູ່ຕອມດິນເສົ້າ
ມືວັນເຊົ້າ ສນາມໄຊຄອຍພໍ່
ບັດນີ້ເຮົາພາກແລ້ວ ເລີຍຊິເສົ້າໝົ່ນໝອງ ແລະບໍ
ຄຶດເມື່ອເນົາແຫ່ງຫ້ອງ ສເວີຍຣາດເປັນກະສັດ ທີ່ພຸ້ນ
ຝູງໝູ່ບົວບາງຂັບ ຢູ່ເວນລະວັງອ້າຍ
ດາວນີ້ເປັນປາງຮ້າຍ ຣານດິງເດີນເຖື່ອນ
ພີ່ຊິເອົາໝູ່ເນື້ອ ຕາງພ້ອມເພື່ອນຝູງ ແລະບໍ
ເມື່ອຊິກັບດິນຕັ້ງ ຄືນນະຄອນຄອງຣາດ
ຈິດນຶ່ງບັງກ່ຽວແກ້ວ ພຣະກູພຸ້ນພາກເມືອງ
ລືອາດບັງບືດໄດ້ ສອງພາກພອນສເນີ
ບັດນີ້ ຄືຄູ່ເຮືອແຊນໄຫຼ ລ່ອງທະເລເລີງກວ້າງ
ອັນໃຫ້ຖອຍຫຼັງເຂົ້າ ຄືນນະຄອນຂອງເກົ່າ ບໍ່ເອົາແລ້ວ
ປຽວວ່າໄດ້ອຸ່ນເນື້ອ ພຣະນາງນ້ອງຊິຕ່າວຄືນ ບໍ່ຮູ້
ພໍເມື່ອວັນໃສແຈ້ງ ບົວຣະພາພົ້ນທືບ ພຸ້ນເປີ
ທ້າວກໍຄຶດຮອດນ້ອງ ຄືງຄ້ອຍຄ່ອຍເດີນ

ຟັງບິນສຽງຊະນີໄຫ້ ບອບໄຣຮ້ອງຮ່ຳ
ທ້າວລ່ຳແລ້ວ ເລີບສນ້ອຍເນື້ອບລົງ
ລືອາດທ້າວ ທິງຮ່ຳຮອບຈິດ
ຊິລຫາໄຫຼ ຫຼັ່ງລິງລິບບ້ອຍ
ພຣະກໍກອບໃຈຂວ້າມ ພູພະບັງທັງຈິມ
ເບືອນທໍ່ດິນດອກໄມ້ ຕາງບ້ອງລວດກະສັບ
ຄ້ອນວ່າພຣະຮ່ຳແລ້ວ ເລີບລ່ວງເຂົາຂຽວ
ດີທໍ່ຕິບດຽວພາຍ ເພັ້ນພະບອມບໍາບ້ອງ
ຫຼີ ງດູດວງຫອມຊ້ອນ ແຊມກໍກ້ານກ່ອງ
ມີທັງຂີກຊະເດື້ອດ໋ວ ດວງແກ້ວກ່າຍລໍາ
ນະບີເຫດຊ້ອນ ແຊມດອກກັບບິກາ
ບຸສບາແຊມ ລຽບພະບອມບໍາຫ້ວຍ
ພູມີທ້າວ ທວາຍດູດິມກິ່ນ
ຄືຄູ່ປາງຈູບແກ້ມ ພຣະກູພຸ້ນພາກດຽວ ນີ໋ແລ້ວ
ບັດນີ໋ໄກກັບແລ້ວ ຣາມບອບກ໋ວກິ່ນ
ກິນນະເຣັດຫຼ້າ ຊີຫຼີ ງອ້າຍຜູ້ພອບ ບໍ່ເດ
ພຣະບາດທ້າວ ຄອບລ່ຳດວງຫອມ
ລໍາ ໆ ດິນມາລາ ແຫບທວງຕາງເຈົ້າ
ຈຽມແຕ່ໄກພຣະກູແກ້ວ ປີປາຍເຈັດຂວບ ເດືອນແລ້ວ
ຍັງບໍ່ທັນຈວບແກ້ວ ພຣະອົງຄ້ອຍຄັ່ງຫວງ
ພໍເມື້ອວັນສູບດ້າວ ດອບຫຼວງລັບຫຼ່ ຽມ

ພູວະນາດຄຸ້ມ ຄີງຄ້ອມຄ່ອຍນອນ
ຍາມເມື່ອວັນໃສແຈ້ງ ສຸຣິໂຍເບື້ອງໂລກ ພຸ້ນເຢີ (ຕາວັນຂຶ້ນສ່ອງໂລກ)
ທ້າວໜຸ່ມນ້ອຍ ພະເນຜ້າຍຜູ້ດຽວ
ລຳບາກຮ້າຍ ແຮມປ່າເຂົາເຂີນ
ພຣະກໍກິນຜາລາ (ໝາກໄມ້) ເງື່ອນລີ້ງເລັ້ນໄດ້
ມື້ວັນເຊົ້າ ອິນທະກາການຮຸ່ງ
ນັບແຕ່ພອຍພາກບ້ານ ນອນແລ້ງລ່ຳເຂົາ
ວິບາກແທ້. ເຈັ້ງຈາກນະຄອນຂວາງ
ຄອນ ໆ ຄຶດ ບໍ່ໄລລືມນ້ອງ
ພຣະກໍກອງກອຍໄຫ້ (ກອງກັ້ນ) ໃນໄພຣ້ອງຮ່ຳ
ປຸນດັ່ງເຈັບປວດຜ້ຳ ຣິມຮ້ອນຮອດຂມອງ
ອັນວ່າຈອມທອງທ້າວ ເທທວງທອດທ່າວ
ສລົບລ່າວລົ້ມ ພລານທ້ຽງຣິມຂຽວ
ເປັນດັ່ງກູທະລີກ້ວຍ ກາງພລານລົມຟາດ
ໃບອ່ອນຄ້ອມ ຄືທ້າວທ່າວທວງ ນົ້ແລ້ວ
ແຕ່ນັ້ນເລີຍເລົ້າຂ່ຳເຂືອກຮ້ອນ ທິພອາດອິນຕາ
ຫີນສີລາຟອງຟົດ ລຸກເປັນແປວກະດ້າງ
ອິນຈຶ່ງຫຼຽວແລປ້ຽມ ພຣະຍານລົງໂລກລ່າງ
ແລ້ວຈຶ່ງເຫັນໜໍ່ທ້າວ ຫວງນ້າງແຕ່ໄພ
ພຣະຈຶ່ງໃຊ້ຣີບຣ້ອນ ທັນເທພວາຣາ (ເທວະດາຜູ້ປະເສີດ)
ລົງແທນຫັດ ຖະບາດບາບຸນກວ້າງ

| | |
|---|---|
| ແລ້ວຈຶ່ງເຕນປວງທ້າວ | ເທພາອິນທິຣາດ |
| ທ້າວນີ້ບໍ່ແມ່ນເຊື້ອ | ຊາດຕ່ຳໄປໃສ (ຄົນຊົ່ວ) |
| ຫາກແມ່ນໂພທິຍານ (ໜໍ່ກະສັດ) | ໂລກຄົນຄອບສ້າງ |
| ອິນຈຶ່ງວາງສານໃຊ້ | ທວນເຖິງຈະຕຸໂລກ (ໂລກ ໔) |
| ກັບທັງທ້າວສີໜ້າ | ນາງນ້ອຍເມຄລາ |
| ແລ້ວຈຶ່ງບັນຊາໃຫ້ | ເຊີນເທພເຂົາຂວາງ |
| ກັບທັງທໍຣະນີນາງ | ນາກເນົາໃນນ້ຳ |
| ອີສູນພ້ອມ | ຍົມພິບານເທັນເຫດ |
| ບັດນີ້ທ້າວເທດດັ້ນ | ທາງນີ້ທ່ອງທຽວ |
| ເກັງວ່າແສນສັດຮ້າຍ | ຊີໂຣມກວນການອ່ອນ |
| ໃຫ້ທ່ານໄປປ່າວຕ້ອນ | ເຕືອນໄວ້ປ່າໃຫ້ທຳ ວ່ານີ້ |
| ເມື່ອນັ້ນຍົມພິບານທ້າວ | ສະເດັດລົງໂດຍດ່ວນ |
| ເຂົ້າປ່າໄມ້ | ດົງກວ້າງປ່າວພີ |
| ບັດນີ້ ສີທົນທ້າວ | ພະເນຈອນລັດລ່ວງ ທາງນີ້ |
| ສູປ່າໄດ້ | ບຽນເຈົ້າທ່ຽວມາ ນັ້ນເນີ |
| ປ່າໄດ້ກຳຣາບຮ້າຍ | ທຳແກ່ພູທອນ |
| ສູບໍ່ຟັງຄວາມກູ | ຂາດຊີວັງວາງມ້ຽນ |
| ກູຈັກສົນຫົວຖົ່ມ | ເສັ່ງກັມການຊົ່ວ |
| ສູປ່ານຽດບຽນເຈົ້າ | ຈອມສ້ອຍທີ່ເຊັ່ງ ນັ້ນເນີ |
| ເມື່ອນັ້ນຜີກໍຮີບພາກຕ້ານ | ທ້າວໃຫ່ງຍົມພິບານ |
| ພຣະກໍຖອຍຫຼັງຄືນ | ຄອບພຣະອິນເອົາຕ້ານ |

ເມື່ອນັ້ນສັກໂກໄຫ້
ພຣະອິນຕາກອບກ່າວ
ເຮົາຢ່າໄລບາດໄຫ້
ຈອມເຈົ້າຊ່ອຍຊູ
ແມ່ນວ່າພາຍຂວາໄວ້
ເທວະດາຫົກໝື່ນ
ນຳບາດທ້າວ
ຈອມດ້າວລ່ຳດູ
ອັນວ່າຈະຕຸໂລກທ້າວ
ທັງສີອິນພິບານ
ນຳອວນແຫນ
ແຫ່ຫວານທາງໜ້າ
ແມ່ນວ່າພາຍຂວາໄວ້
ທໍຣະນີນາງນາດ
ກ້ຳຝ່າຍຊ້າຍ
ນາງນ້ອງແມດລາ
ເຮົາຄ່ອຍນຳສີແກ້ວ
ກາງໄພພໍເພື່ອນ
ຢ່າໃຫ້ມີໂທດຕ້ອງ
ດົນທ້າວທ່ຽວດົງ ແທ້ນາ
ເມື່ອນັ້ນສີຫົນທ້າວ
ພູທອນເລີຍດື່ນ
ທ້າວລ່ຳນ້ອງ
ປົ້ນປີ້ປ່ອງຫຼຽວ
ພູວະນາດທ້າວ
ເບື້ອນຍ່າງທັງກະສັນ
ພາຍຄືງຄວນ
ຄ່ອຍເດີນດຽວດັ້ນ
ພຣະກໍໃສກົກັ້ນ
ຄະນີງນາງນ້ອຍອ່ອນ
ໂອນໍສົນສເລົາແກ້ວ
ນະໃນຣານ້ອງພີ້ ອວນເອີຍ
ເຈົ້າຍັງຄຶດຈອດຝັ້ນ
ແຜງຊ້ອນດັ່ງພີ້ຊາຍ ບໍ່ເດ
ພີ້ກໍຄຶດຮອດນ້ອງ
ນ້ຳພຣະເນດນອງໄຫຼ
ທຸກແຕ່ໄກເມືອງມາ
ພາກພຣະນາງນອນແລ້ງ
ແມ້ງນຶ່ງແມກນ່າຍກ້ອນ
ກາຍຫົນເມືອງແມນ ພຸ້ນເຍີ
ພູທອນເລີຍ
ລ່ວງທາງຍານເຊົ້າ

ຟັງຍິນລົມພລຽງໄມ້ (ຕີກວັດແກວ່ງ) ສຸຄັນຫາທົງກົນ

ຣົດຮ່ວງເຮົ້າ　　　　ຫອມເທົ້າທົ່ວໄພ

ເມື່ອນັ້ນພຣະບາດໄທ້　　　　ຄຶດຮຸ່ງມະໂນຣາ

ຊະເຈົາໃຈຈິດ　　　　ເມື່ອຍມະໂນຄາແຄ້ນ (ອ່ອນໃຈ)

ພໍເຫັນພົງຄະນາເນື້ອ　　　　ໜີເໜືອຍນອນນັ່ງ

ສົງແຮດຊ້າງ　　　　ຊົມຫຼີ້ນແກ່ໄພ

ພຣະບາດທ້າວ　　　　ທວຍທອດເທະບູສິນ

ຝູງໝູ່ໄພນາບເຫັນ　　　　ຫຼີກໄກກອຍເວັ້ນ

ເຂົາບໍ່ນາວຽນໃກ້　　　　ກົວຕາຍຕອນສັ່ນ

ພູວະບາດທ້າວ　　　　ຄົງຄ້ອນຄ່ອຍເດີນ

ແມ້ງບຶ້ງເຖິງແຖວຊັ້ນ　　　　ນາຣີລົມປັ່ງ

ອໍຣະອິນອ້ອຍ　　　　ຄົນຄີ້ວຄ່ຽມສເມີ

ປຸນປຽນດ້ວຍ　　　　ນາງເທບກັລຍາ

ຍາມເມື່ອລົມພານພັດ　　　　ເຫຼືອດແລຄືຊິດ້ານ

ດູຫຼາກແທ້　　　　ທັງກົນຫອມຫວານ

ສະແອວກົນສົງ　　　　ສົງອິນເອົາແຕ້ມ

ເກສາຊ້ອງ　　　　ດຳຄືຄີ້ວກ່ອງ

ຄໍຄາດປ້ອງ　　　　ບົມຕັ້ງຕຸ່ມງາມ

ຕັ້ງຫາກບໍຣະບວນດ້ວຍ　　　　ດວງຫອມບໍ່ເຫີຍກົນ

ຝູງໝູ່ເທພທ່ອນທ້າວ　　　　ຊົມຊ້ອນຊວາກສເນ

ອັນນີ້ອົນປູກໄວ້　　　　ປາງກ່ອນປະຖົມນາ

ແມ່ນວ່າຣື ສີສິນ　　ເສບທະຍານບໍ່ມີໄດ້
ເຫດວ່າສິນສເບນ້ອຍ　　ບາງບົງດວງດອກ
ຊາບເຊື້ອມດ້ວຍ　　ດວງໄມ້ນິ້ງມະລິ
ຕັ້ງຫາກດູສະອາດແທ້　　ຄືເທບເມືອງແມນ
ໃຜຜູ້ສິນພານຫຼາຍ　　ລ່ວງໃພພອຍພ້
ມີທັງວັດຖັງຜ້າ　　ສ້ງວານສຸບສອດ
ທ້າວລ່ຳແທ້　　ຫຽມນ້ອງບາຖແພງ
ພຣະກໍໄຫຼຫຼັ່ງນ້ຳ　　ຕາຫຼັ່ງລິນວິກ
ຄະນຶງເມັຽຂວັນ　　ຄ່ອຍປິ້ນໄປປ້ຽມ
ມືທວາຍກ້ານ　　ກິນນະຣີລິງຈູບ
ຄືດັ່ງຫອມກິ່ນແກ້ວ　　ໃຈທ້າວອ່າວກະສັນ
ພຣະກໍຊົມດອກໄມ້　　ຕາງບາດບາງເມືອງ
ມືຊອນອົກ　　ອິ່ມພຣະໄທຫວງທ້າວ
ພໍເມື່ອເວລາລ້ຳ　　ອັສດົງເດີນຕ່ຳ ລົງນັ້ນ (ຕາວັນຕົກລົງຕ່ຳ)
ພູວາບາດທ້າວ　　ຄຶງຄ້ອມຄ່ອຍເຊົາ
ບານນັ້ນຍັງມີປັກຂີເຊື້ອ　　ຊຸມທັງເຫາະຫ່ອນ ນານັ້ນ
ຫຼາຍໝູ່ເຕົ້າ　　ຕອມເຈົ້າຄ່ອຍຖາມ
ສັງເລົ້າເດີນດົງຂວາງ　　ຜູ້ດຽວດາຍໄດ້
ເມື່ອນັ້ນສີທົນທ້າວ　　ຈາທົງໄທ້ຕ່
ບັດນີ້ເວນຄອບເບື້ອ　　ນຳຂ້ອຍຂຶດຫວງ
ເພື່ອວ່າຣານໃສນ້ອງ　　ບາງແມນມະໃນຣາດ

ກໍຈິງດັ່ງປ່າໄມ້ ມາພີ້ຣອດສູ ນີ້ແລ້ວ
ສູບັງເຫັນໂສມນ້ອຍ ມະໂນຣາກູບໍ່
ເມື່ອນັ້ນຫົງກໍບິນບອກຂໍ້ ນາງນ້ອຍລ່ວງມາ ນີ້ແລ້ວ
ອັນວ່າໂສມສເລົານ້ອຍ ມະໂນຣາເມັຽມິ່ງ ພຣະອົງນັ້ນ
ບິນລ່ວງລ້ຳ ກາຍຂ້ອຍຫ້າປີ ນີ້ແລ້ວ
ເມື່ອນັ້ນບາບຸນທ້າວ ບິນດີຊົມຊື່ນ
ເພື່ອວ່າຮູ້ຂ່າວນ້ອງ ນາງນ້ອຍຜູ້ປະສົງ
ພຣະກ່າວຕ້ານ ຊ້ຳເລົ້າຖາມຫົງ
ສູເຄີຍເຫັນເມືອງພູເງິນ ດັ່ງໃດໄກໃກ້
ຫົງກໍໄຂຄຳຕ້ານ ໄຂຄະດີບິນບອກ
ຜິວ່າບິນເຜັ່ນຜ້າຍ ພບອງລ້ຳລ່ວງກະວານ
ສອງຂວບນີ້ ເມືອຮອດພູເງິນ
ຜິວ່າເດີນທາງດິນ ສ່ວນແດນຄາວຊ້ຳ
ສອງປີເທົ້າ ເຖິງແດນນະຄອນຣາດ
ຕັ້ງຫາກໄກຂນາດແທ້ ບາທ້າວຊິດຸ່ງດຽວ ໄດ້ເດ
ຫົງກ່າວແລ້ວ ທ້າວເລົ້າເລີຍລາ
ແບງໄພສົບ ສອດສແວງຫານ້ອງ
ຟັງບິບສະກຸນາເຄົ້າ ຍຽງຄອນຄອຍຄູ່
ຮ້ອງຮຽກເອີ້ນ ອອຍຊູ້ສົ່ງສຽງ
ມີທັງອ້ຽງກ່າງກີ້ ເຂົ້າແຂກຂັບຄູ
ຕອມພາລາ ເລືອກເຊີຍຊົມພົວ

ສີຫົນຫ້າວ  ຫຽວເຫັນຫົວຮຸ່ງ
ບາງພ່ອງໄຫ້  ຄະນຶງເອື້ອອ່າວດົນ
ມີນານເຫົ້າ  ເຖິງດົງດິບຕາດ
ຫີນນັ້ນເປັນປ່າເປົ້າ  ໂພງເຊື້ອເຜດຜີ
ເຂົາກໍຊວ່າ ໆ ພ້ອມ  ຝູງໝູ່ຄະນາຜີ
ເຂົາກໍເນື່ອງຄຳຈາ  ຊູ່ອັບເອົາຕ້ານ
ສີຄານຫ້າວ  ຍິນກົວຄະນາເຜດ
ຫຼາຍໝູ່ເຕົ້າ  ດົງໄມ້ໜຶບຕົວ
ແຊວ ໆ ເອີ້ນ  ຫາຜົວສຽງສນັ່ນ
ຫຼາຍສ່ຳເຊື້ອ  ຜີເຜດຊຸມນິງ
ກໍບໍ່ມີຄົນຊາຍ  ຢູ່ປົນປອມໄດ້
ເຜດນຶ່ງນັ້ນຫົວ ໆ ລື້ນ  ຍາວຮີໜອນໄຕ່
ໂຫ ໆ ຮ້ອງ  ດົງໄມ້ມີນັບ
ເຜດນຶ່ງນັ້ນຕົວດຽວຕັ້ງ  ສອງຫົວຝາແຝດ
ຜິດແຜກດ້ານ  ຝູງເຜດທັງຫຼາຍ
ພູມີເຫັນ  ໜ່າຍມະໃນຍິນຄ້ານ
ພຣະຈິງຖາມເຖິງຖ້ອຍ  ຊາວຜີຝູງເຜດ
ວິບາກເບື້ອງ  ສູ້ນັ່ງໃດ
ເຂົາກໍໄຂຄຳຕ້ານ  ທູນທັນຖວາຍບາດ
ຊາດກ່ອນພຸ້ນ  ເວນຮ້າຍມາກຫຼາຍ ພຣະເອີຍ
ຕູໄດ້ປນາດມ້າງ  ແຫນງໜ່າຍຜົວຂວັນ (ຖືຫຸ່ນ)

ເລີຍເລົ່າມາເປັນເວນ　　ບໍ່ມີຊາຍຊ້ອນ
ເພາະເພື່ອກັມຊັ່ງແກ້ວ　　ຜົວຕົນແຫນງໜ່າຍ
ຄັນແມ່ນເບື້ອງຝ່າຍຊູ້　　ດູຂ້າຊື່ນຊົມ
ເຫັນວ່າເປັນພຍາດຮ້າຍ　　ບັງເກີດຊັງຜົວ
ຫຼື ວ່າສາມີດົນ　　ແກ່ຊະຣາເລີຍຮ້າງ
ຄຶດປາກຫາຜົວຊ້ອນ　　ຊາຍຮາມນ້ອຍໜຸ່ມ
ອັນນີ້ເວນກໍ່ໄວ້　　ນຳໃຊ້ຊາດລຸນ ພຣະເອີຍ
ຄ້ອມພຣະຮູ້ຮ່າງເບື້ອງ　　ຖາມຊ້ຳຕໍ່ໄປ
ອັນວ່າຫິວ ໆ ລົ້ນ　　ບາວຣີໜອນໄຕ່ ນັ້ນເດ
ເປັນເຫດຮ້າຍ　　ກັມສ້າງສິ່ງໃດ
ເມື່ອນັ້ນຝູງຜີພ້ອມ　　ຖວາຍຄະດີບົນບອກ
ອັນນີ້ເປັນແຕ່ບາບກ່ອນກີ້　　ເວນໄດ້ດ່າຜົວ ພຣະເອີຍ
ກໍຫາກເປັນບາບແຫ້　　ໂທດໃຫ່ຍໜັກໜາ
ໜອນຕົວຫຼວງ　　ທໍ່ກະບອງກິນລົ້ນ
ອັນວ່າຄີງດຽວຕັ້ງ　　ສອງຫົວຝາແຝດ ນັ້ນນາ
ມັນໄດ້ອຸ້ມລູກນ້ອຍ　　ໃນຫ້ອງເຂດສິງ
ລູກເລົ່າໄຫ້　　ໃນເມື່ອຟັງຫັນ
ເວນຫຼັງຫຼາຍ　　ຄອບຕົນປາງນີ້
ເມື່ອນັ້ນຝູງຜີພ້ອມ　　ທູນຣາດເຮົາໄຂ
ພຣະຫາກເຄືອງໃຈສັງ　　ທ່ອງຫຽວຫາງນີ້
ສີຫົນຕ້ານ　　ກູເດີນດອນອ່ອນ

ພັນທະນຶງຂ້ອຍ ເຂີນຮ້າງຊີຫ່ຽວຕາມ ດອກບາ
ຄ້ອນກ່າວແລ້ວ ລາເຜດຝູງຜີ
ເຂົາກໍແຊວ ໆ ສຽງ ສັ່ງບາບຸນກວ້າງ
ໄປເປີເຈົ້າ ຈອມທັມທຽວໂລກ
ຈິ່ງໃຫ້ໄດ້ບາດບ້ອງ ບາງແກ້ວຜູ້ປະສິງ ບັ້ນຖ້ອນ
ຍາມໃດພູທອນທ້າວ ເສັດການໄດ້ອຸ່ນ
ຂໍພຣະນາໂຜດຂ້າ ຝູງຮ້າຍແກ່ໄພ ແດ່ແມ
ຖັດບັ້ນລືກຽນແກ້ວ ສີທິນເລີຍລ່ວງ ໄປແລ້ວ
ຂວ້າມປ່າໄມ້ ແດນດ້າວດ່ານຜີ
ພຣະກໍໂຫຍແຮງກັ້ນ ເສໂຫທິມເຫື່ອ
ເລີຍເລົ້າໄປຮອດຊ້າງ ຊິມກ້ຽວກ່າຍງາ
ຣາຊາທ້າວ ມິນຍຳຍາເປົ້າ
ພູວະນາດທ້າວ ບໍ່ມີຢ້ານລ່ວງກາຍ
ຍ່ອງ ໆ ດັ້ນ ເດີນຕາດຕີນເຫວ
ຕິນດຽວຕິກ ຕ່າງແດນດົງເນື້ອ
ດູນານໄດ້ ຫຼາຍປີຜ້າເປື່ອຍ
ທ້າວກໍເອົາເປືອກໄມ້ ຕາງຜ້ານຸ່ງໄປ
ນ້ອຍບຶ່ງເຖິງທີ່ຜາໃຫ່ງຕັ້ງ ຕັນງ່ອນງອຍເຂົາ
ພູທອນມິນຍາຍຳ ໃສ່ໜາກນາວຍໍ້ຖຸ້ມ
ຈອມແພງທ້າວ ບໍ່ມີກິວເກັງອ່ອນ
ເລີຍເລົ້ານັ້ນທີ່ຮ້າຍ ເມື່ອໜ້າຄ່ຳຈວນ

ຊະຊ່ອນເບື໊ອ  ນິວລະທ່າວເນົາບອນ
ຄອນ ໆ ເໜືອບ  ເຮັ້ງຮວາຍຮຳໄມ້
ຟັງບິນລົມສເລົາຕ້ອງ  ຕອງເດີບໃກ້ຊີຮຸ່ງ
ພູວະບາດເບື໊ອນ  ບິນແລ້ວຄ້າງພຣະໄຫ
ກໍບໍ່ຫຼັບບືບໄດ້  ນ້ອຍບຶ້ງພໍຄາວ
ພໍເມື້ອສຸຣະພາພາງ  ພາດດອຍດູແຈ້ງ
ຈອມແພງທ້າວ  ທີງສະອອນເບື໊ອນຍ່າງ
ແລ້ວພາກດ້າວ  ເດີນດັ້ນດຸ່ງໄປ
ມີທ່ຊິລຫາຍ້ອຍ  ສອງແຄມໄຫຼຫຼັ່ງ
ກໍບໍ່ພັກບິບຍັ້ງ  ປຽວຊ້າເຄີກຄາວ
ແມ້ງບຶ້ງເຖິງແຖວໄມ້  ພຶ້ງຄະບາບາມເຜດ
ເຂົາກໍເນົາປູ່ຫັ້ນ  ແຮມເຮື໊ອຮອດປີ
ເພາະເພື້ອວິບາກເບື໊ອງ  ກັມກ່ອນເວນຫຼັງ
ຄອນ ໆ ຄັບ  ຄັ້ງດອຍດີງກວ້າງ
ຫຼີງດູຈັກຫັບຄວ້າງ  ຜັນກາຍເລືອດຫຼັ່ງ
ພ່ອງກໍກິນເຫົ໊າກ້ອນ  ໄຟກ້າລວກລົນ
ຕິກຖືກໄສ້  ຊື້ມເປື້ອຍເປັນຜີງ
ມັນກໍທິນສະແດດັບ  ບໍ່ຕາຍທະລອນເບື໊ອນ
ເມື້ອນັ້ນພູມີທ້າວ  ຖາມຜີເຜດໃຫ່ງ
ອັນວ່າບາບເກົ່າພຸ້ນ  ສູສ້າງສິ່ງໃດ
ຜີກໍໄຂຄຳຕ້ານ  ດອມບາບຸຕຣາດ

ຊາດກ່ອນພຸ້ນ　　ນີ້ຊູ້ຈາກຜົວ ພຣະເອີຍ
ເພີນວ່າຮ້າຍ　　ໂດຫາກແສະຫາ
ປາປັງເລີຍ　　ລວກລາມເຖິງເນື້ອ
ອັນນຶ່ງບັງເລົ້າຈອນໃຈລ້ຽວ　　ແປງປຳປາແຝດ
ຊູກເຊື້ອງໄວ້　　ຂອງຄ້ຽວເຄືອງກິນ
ກໍຈຶ່ງເປັນບາບຮ້າຍ　　ໂຮມເຮົ້າເຖິງຕົວ
ພາກັນມາກິນໄພ　　ລວກລົນລົງຫ້ອງ
ຄັນພຣະຄືນເມືອຫ້ອງ　　ເມືອງຄົນຄອງຮາດ ເມືອໃດ
ເຊີນພຣະຊ່ອຍໂພດລ້ຽງ　　ດູຂ້າເພິ່ງບຸນ ແດ່ຖ້ອນ
ແຕ່ນັ້ນພຣະກໍລັດລ່ວງຂວ້ານ　　ເຂົ້າມາດເມືອເຫັວ
ເຫັນມັນຕາຣະດູໜາວ　　ໜ່ວງໃບນອນສະອື້ນ
ໄພຂວາງໄອ້　　ສຸຖັນຫາທິງກິນ
ຫ້າວຫອດປ້ຽມ　　ດວງໄມ້ມ່າຍເມີນ
ມີດອກຊ້ອນ　　ແຊມດອກດາວພຣະກາຍ
ກະດັບງາແຊມ　　ພຸ່ມດວງດວນດົ້ວ
ມີຫ້ງອຸມພຸມຊ້ອນ　　ຊອນກໍດອກຊະນັ່ງ
ກຸຫຼາບເຫຼືອງລຽນກ້ານ　　ແຊມພົ້ວພຸ່ມກະຈວນ
ຫຼີງດູພຸມມະຣາເຜີ້ງ　　ຜັນເຊີຍຊີນກິນ
ຄືດັ່ງຫ້າວແນບນ້ອງ　　ໃບຫ້ອງຮ່ວມໜາວ
ພ່ອງໂກດກ້າ　　ຊີງດອກດູຫວງ
ພູຫອນເຫັນ　　ຊື່ນພຣະໄທເລີຍຫ້ວງ

ມີຫວາຍກ້ານ
ຊົມດວງດົມກີບ
ຄືຄູ່ຫອມກີບແກ້ວ
ພຣະກູທ້າວທີກະສັບ ແລະນາ
ເມື່ອນັ້ນໃສມສຽງມໄຫ້
ທໍຣະນີນາງນາດ
ເຫັນແຈ່ມເຈົ້າ
ຣົນຮ້ອນອີດູ
ນາງກໍກັບເພດຜຽງ
ພຽງດັ່ງຊາວມະນຸດ
ສົມສຽງມຄື
ດັ່ງນາງນະຄອນຟ້າ
ອາພອນຜ້າ
ຜືນງາມທິງນຸ່ງ
ຫຼີງລ່ຳແຈ້ງ
ກະບວນເບື້ອງດັ່ງພຣະອິນ
ທຳກະບວນເບື້ອງ
ປະສົງຊາຍຊອມຄູ່
ລວງຫຼອກທ້າວ
ບຸນກວ້າງພຣະບອດເມືອງ
ນາງກໍສວນສຽດເວົ້າ
ວາງວາດມາຍາ
ສັງວ່າດິບດຽວເດີນ
ປ່າໄພແກມເນື້ອ
ຫຼື ພຣະເຄືອງຄຳແຄ້ນ
ພາບໃດດັ່ງດຸ່ງ ມານີ້
ສັງເລົາທິງເປືອກໄມ້
ຕາງຜ້າໜີບໜອງ
ອັນວ່າໃບຫິນຫ້ອງ
ຄືນະຄອນອິນທະຣາດ
ພຣະບາດເຈົ້າ
ຣາມໄວ້ດັ່ງໃດ
ເມື່ອນັ້ນອໍຣະໄໜ່ທ້າວ
ຂານຕອບນາງຄານ
ບັດນີ້ເວນວຽນເຖິງ
ຖືກຄືງຄາເນື້ອ
ເພື່ອວ່າຣາມນາງແກ້ວ
ມະໂນຣາໂສມສະອາດ
ນາງຫາກພັດພີຮ້າງ
ຣາມແກ້ວແຈ່ມສມຄນ
ພີ່ນີ້ກົງເກືອບໄຫ້
ຫານາດນາງແພງ

ຮຽນກໍມາໄກພັດ- ພາກເຮືອນຮານຮ້າງ
ເມື່ອນັ້ນນາງຄານແກ້ວ ທໍຣະນີກອບກ່າວ
ເມັງພຣະເຈົ້າຕົວສ້ອຍ ນີລົ້ນອະເນກນອງ ແທ້ນາ
ອັນວ່ານາງນາດນ້ອຍ ເມັງເກົ້າເປັງຈານ ທີ່ພຸ້ນ
ການບິງຊາຍ ກໍດັ່ງດຽວກັນແລ້ວ
ນ້ອງນີ້ແນວນາມເຊື້ອ ຊຸມດຽວດາເກີງ ກັນນັ້ນ
ນ້ອງກໍຮູ້ຂ່າວທ້າວ ແພງລ້ານລ່ວງໄພ
ທຸກຍາກເບື້ອນ ນ້ອງໃຄ່ຄ່ອຍເຫັນ
ເອົາອວນເມືອເປັງຈານ ປູ່ເຊີນຊິນຊ້ອນ
ທຽມສີແກ້ວ ນະໂນຣາລືເກີງ ກັນບໍ ?
ຂໍພຣະກັບຕ່າວຕັ້ງ ເມື່ອຫ້ອງຮ່ວມແຝງ ພີ່ເອີຍ
ເມື່ອນັ້ນມ່າຍ ໆ ໜ້າ ທ້າວໜຸ່ມບິນສງວນ
ນາງປ່ານມາລວງອວນ ຫ່າງສະເທີນທາງອ້າຍ
ນາງນີ້ມີໃຊ່ສິນສັນແກ້ວ ກະສັດຕີດິງເກີດ (ນາງພຍາ)
ຮ້ອຍທີ່ເທບແຜ່ນຫຼ້າ ລວງອ້າຍເບິ່ງກະບວນ ດອກນາ
ທ້າວກ່າວແລ້ວ ນາງນາດທໍຣະນີ
ນາຍາສວຍ ສຽດບາບຸນກວ້າງ
ອັນວ່າໄສມສເລົານ້ອຍ ນະໂນຣາເມັງນຶງ ພຣະອົງນັ້ນ
ຮູ້ວ່າງາມກວ່ານ້ອງ ພັນສ້ຽວສິ່ງໃດ ພຣະເອີຍ
ທ້າວຕອບຕ້ານ ມີປຽບປຸນພຣະນາງ ດອກນາ
ແຕ່ວ່າເມັງຂວັນອວນ ກ່ອນແນນນຳກ້ຽວ

ບຸນຫາກເຄີຍສົນສ້າງ　　ນຳກັບແຕ່ປາງກ່ອນ
ຈຶ່ງບໍ່ລະມ່ອນນ້ອງ　　ນາງໄດ້ດຸ່ງຕາມ ນັ້ແລ້ວ
ເມື່ອນັ້ນນາງງາມໄທ້　　ທໍຣະນີກັບເພດ
ກໍຈຶ່ງມາຢູ່ໃກ້　　ຮັກສາທ້າວທ່ຽວດົງ
ລືນາດທ້າວ　　ທົງດາບເດີນກາຍ
ແບງໄພຂວາງ　　ຂອບພູພຽງຟ້າ
ປັພຕາບັ້ນ (ພູເຂົາ)　　ປະຖົມນື້ມາກ່າວ
ເຖົ້າເກົ້າເຮື້ອງ　　ມີຖ້ວນທ່ຽວເຫັນ
ມີທັງນໍຣະກົດແກ້ວ　　ພິທູນແສງໃສຮຸ່ງ
ອັນນີ້ໂລກເລົ່າໄວ້　　ປະຖົມເຖົ້າຊົ່ວລາງ
ຕາມຕາດຫ້ວຍ　　ແກ້ວກ່ານປະພາພືວ
ນະນີໂຊໃສ (ແກ້ວສີແດງ)　　ສົງດາວດາບ້ອຍ
ພູມີທ້າວ　　ທວາຍດູແກ້ວບໍ່ ?
ແລ້ວລ່ວງບ້າຍ　　ຜາລ້ານລຽບລົງ
ພໍເມື່ອວັນສອດໄມ້　　ນົວມືດເສັ້ງແສງ
ພຣະຄ່ອຍບັນທົມພັກ (ນອນ)　　ຜ່ອນແຮງພລານກ້ອນ
ຕັ້ງຫາກຕອງຕອຍຜ້າ　　ພື້ນດຽວດູເກົ້າ
ເຊີງນຶ່ງເຈົ້າ　　ປູແລ້ວເລົ່ານອນ
ອັນວ່າພູທອນທ້າວ　　ຄະນິງນາງຄືດຮ່ຳ
ຫັບບີບນ້ອຍ　　ເລີຍສະດຸ້ງຕື່ນຕົນ
ພໍ້ເມື່ອສຸຣະພາພົ້ນ　　ເຂົາຈວງຈວນຊີຮຸ່ງ
ພູວະນາດທ້າວ　　ຂຽວຂຶ້ນຂອບເຂົາ

ຫຼື ໆ ຕາດຕ້າຍ　　ເຂົາມາດນອນພາຍ

ລວງສູງສຸດ　　ຊີວຕາເຕັນປ້ຽມ

ຊື່ວ່າເອງຊັບຊ້ອນ　　ເຂົາບິນບົວລະຫ່າວ

ເຫັນທັງຜູກມ່າຍກັ້ນ　　ກວມກ້ຽວບອດດອຍ

ດອຍເຫັນສັດບົວຣະພັບພົ້ນ　　ພຽງດາວເປັນຫຼັບ ພຸ້ນເປີ

ເຈັດລູກລ້ອມ　　ລຽບຖ້ານຫຼັ່ນລີງ

ຜູ້ກິງທ້າວ　　ຫຽວທ່ອງທິງເຫັນ

ຜີສາງເສືອ　　ຊູ່ແດນດາເວັ້ນ

ວັນດຽວທ້າວ　　ເດີນໄກສິບສອງໂຍດ

ເພື່ອວ່າອີນຊ່ອຍບູ້　　ຍາມຫຍຸ້ງຄ່ອຍປອງ

ພູໄຊທ້າວ　　ເຖິງທີ່ພູໄຟ

ເຮືອງ ໆ ແສງ　　ສ່ອງດອຍດົງໄມ້

ທາງຮ່ອມຫ້ວຍ　　ເຫັວເດີນລຳບາກ

ມີທີ່ທາງທ່ອງເທົ້າ　　ຫຽວຂຶ້ນປ່ອງດຽວ

ບາດານແຄ້ນ　　ເຄືອງພຣະໄທທົງຮ່ຳ

ລືຈັກມຸດນອດມ້ຽນ　　ດາວບໍ່ຜູ້ດຽວ ບັ້ນເດ

ຫຼົກ ໆ ດູໄຟລາມໄໝ້　　ເປັນຄວັນມົວໝອກ

ພຣະບາດເບື້ອງ　　ທະນູແກ້ວແກວ່ງບີງ

ໄຟມອດມ້ຽນ　　ທ້າວຜັ່ນພະຍຈອນ

ຜາຊັນສູງ　　ຊໍ່ເນີນບານມົ້ນ

ທາງຫຽວຮ້າຍ　　ພູທອນສະເດັດພາກ

| | |
|---|---|
| ໄດ້ສິບສີໂບດແຫ້ | ຫຽວຮ້ອນເຮັ້ງຄາວ |
| ຫ້າວກໍເລື່ອນ ໆ ບ້າ | ບອງພຣະເນດຫຼານໄຫຼ |
| ຕິບດຽວບອບ | ແຄ່ພູພະບັງກວ້າງ |
| ແນ້ງບຶ່ງອາຣຸບພົບ | ຫິນພານເຣືອງໂລກ (ແສງສວ່າງ) |
| ຫ້າວໜຸ່ມບ້າຍ | ເມືອເຊົາບໍ່ເຊົາ |
| ນ້ອບດຸ່ງເຫົ້າ | ເຖິງທີ່ດອບລົມ |
| ຟັງບົບທິນ ໆ ກວັດ | ແກວ່ງດິງດັງສະທ້ອນ |
| ພູຫອບຫ້າວ | ຫວບດູປັ້ງນຜໍ່ |
| ຜິດປລາດຫ້າວ | ຫວງສະເອີ້ນອ່າວປາງ |
| ເບື້ອນຍາກຮ້າຍ | ເດີນດຸ່ງທີວໄຫບ |
| ບາກໍຫວບທະນູສອນ | ກົ້ງບິງຍານແຄ້ນ |
| ປີ້ນຜລງງລ້າ | ລົມພານນ້າງມຸ່ນ |
| ພູວະບາດບ້ອນ | ຄືງຄ້ອນຄ່ອບໄປ |
| ມີ້ບານເຫົ້າ | ເຖິງຂອບແດນສມຸດ |
| ນະທີຫຼວງໄຫຼ | ຊົ້ວຕາເຕັນປັ້ງມ |
| ຫຼີ ງດູຟອງຂາວບ້າ | ໂບບພະໂບນລົມເບີກ |
| ຍາວໂບດກວ້າງ | ເຫຼື ອລ້າລີ້ນປະມານ |
| ຫ້າວກໍເລື່ອນ ໆ ບ້າ | ຕາຫຼັ່ງໄຫຼດິກ |
| ບັບແຕ່ກູໄກພັດ | ພາກເມືອງບານແລ້ວ |
| ພຣະກໍ ຕີອິກແຄ້ນ | ນອນ ໆ ແລ້ວນັ່ງ |
| ພຣະກໍພັກຈອດບັ້ງ | ເຊົາຫັ້ນເມື່ອນແດນ |

ເຈັດວັນຍັ້ງ ແຄມຊິບເຊົາຫາດ
ເມືອນັ້ນພູວະນາດທ້າວ ທວາຍແກ້ວແກວ່ງທະນູ
ປີນພລຽງລ້ຳ ລີງແປວນາກໃຫ່ຽ
ຟອງຟາດຟົ້ງ ຊາວນ້ຳຕື່ນຕິນ
ອັນນີ້ຫາກແມ່ນສອນສິບເຈົ້າ ຈອມທັ້ນທຽວໂລກ
ເຮົາຢ່າຊ້າ ທູນນ້ອມນອບພຣະອົງ ທ່ຽວເຖີ້ນ
ຄ້ອນກ່າວແລ້ວ ຊາວນາກຜັນຜອງ
ແບງຈອມທັ້ນ ຂານກອນກອບໄຫວ້
ເຂົາກໍນຳເອົາໄດ້ ດວງຫອມຖວາຍອ່ອນ
ບາງພ່ອງໄດ້ໝາກໄມ້ ມາຕ້ອນຕື່ມແຮງ
ພໍຖາວທ້າວ ລີລາສະເດັດພາກ
ພຣະກໍຕ້ານສັ່ງເຊື້ອ ຊາວນ້ຳນາກຄຳ
ຂ້າມຍ່ານນ້ຳ ນອງທຸ່ມເຖິງພະນອມ
ຄອບດູເຂົາ ເຂື່ອນພະໂນມຍັງຟ້າ
ປັພຕານັ້ນ ຝູງຄະນາເປົ້າປ່າ
ມີທັງບຸງເຫຼືອກຣີ້ນ ຕົວຮ້າຍຮ່ອນຕອນ
ມີທັງເຫຼືອມເຫຼົາຫ້ອມ ສົງດົງເດ່ຽຣະດາດ
ຕົວໃຫ່ຽຜ້ຽງ ຕານຕົ້ນທໍ່ກັນ
ມີທັງຈົງອາງຫ້ອມ ທຳທານທັງເທົ້າ
ເດ່ຽຣະດາດລົ້ນ ເຕັ້ນດ້າວດ່ານດົງ
ມີທັງໝາຫຼີງຮ້ອງ ຫອນສະເທີນຫວງຫວ່າ

ພູວະບາດທ້າວ　　ບໍ່ມີປ້ານປ່ອນສັງ
ພຣະກໍຫວຍຫິງງ້າວ　　ພຣະຂັນໂທໂຫມຜ່າ
ປຶນປຶນເປື້ອງ　　ສັດຕູມ້ວຍມອດຕາຍ
ແລ້ວເລົ່າພາກທີ່ນັ້ນ　　ເດີນດາດດີນຜາ
ຫຼີ ງດູອຸທິຍານສວນ　　ໜາກດານຕູມພ້າວ
ສັພສັນເຕົ້າ　　ແຕງຫຼາຍເຫຼືອແຜ່ນ
ມີທັງມັນເທດຫໍ້　　ສະເພົາພ້ຽງພ່ຳແກວ
ມີທັງກຸຫລີກ້ວຍ　　ກາກີນເຫຼືອງຫຼີ ນ
ເພື່ອງຜ່າສົ້ມ　　ສົມຕົ້ນເວີນາວ
ມີທັງອຳພອນພົ້ວ　　ຂນຸນບໍ່ມີ້ມ່ວງ
ມັງຄຸດແຂວນຂຽບຫ້ອຍ　　ຣາມກ້ານກ່ອງທະຣາ
ມີທັງຊຸມພູຫວ້າ　　ລຳປາງປາຍປ່ຽວ
ຝູງໝູ່ລີງແລ່ນເຕັ້ນ　　ໂຕນໂຫ້ຽຍາດແຊງ
ທ້າວທອດແລ້ວ　　ເລີຍພາກພອຍສເວີຍ
ກີນຜາລາ　　ເງືອນລີງເລັ້ນຖົ້ມ
ຫຼີ ງດູໄພພະນັງພຸ້ນ　　ຄືຄິນຄອຍແຕ່ງ
ພົ້ນຣາບກ້ຽງ　　ຜາລ້ານລ່ວງສະບາຍ
ພໍເມື່ອວັນວຽນຍ້າຍ　　ດອຍຫຼວງລົມລ່ວງ
ພູວະບາດຄ້ຳ　　ຄະນີງນ້ອງຄ່ອຍເດີນ
ຫຼີ ງເຫັນນີຄນາເບື້ອ　　ນອນແຝງຝີງອຸ່ນ
ມີລະເມີຍນັ້ງນ້າ　　ກະທີງພ້ອມພ່ຳກວາງ

| | |
|---|---|
| ເບິງເຂົາກິນກຽງຫຽ້າ | ແຄນເຂົາຂຽວອ່ອນ |
| ບາງພ່ອງປົ໊ປອກເຕັ້ນ | ຕາມຂ້າງແມ່ມັນ |
| ມີທັງນອນໜີເໜັ້ນ | ກະຈ້ອນເຈັ້ງແກມບ່າງ |
| ແລ່ນຫຼົ໊ບພ້ອມ | ຄະບານ້ອຍກ່າຍຕອງ |
| ເຂົາກໍກິນກຽງຫຽ້າ | ຍາມແລງແດດສ່ອງ |
| ທ້າວຫອດປ້ຽມ | ແຍງມ້າມ່າຍລວາ |
| ສີຄານແກ້ວ | ຫວາຍເຫັນຫົວຊື້ນ |
| ນ້ອຍຄຸ່ງເທົ້າ | ແພງລ້ານລ່ວງກາຍ |
| ຟັງຍິນກິດກ່າວທ້ວງ | ໃນເລົາດອນເລົາ  ພຸ້ນເຢີ |
| ສະກູນານົກ | ແຂກຂຽວເຂົາຄູ້ |
| ມີທັງນົກມູນຮ້ອງ | ອຸນອູຫຽນຄູ່ |
| ນົກຈີຈູ້ | ຈາຈ້ອຍອຶນອອຍ |
| ຄືຄູ່ຈຽນປາງຂ້ອຍ | ມະໂນຣາບຳແອ່ວ |
| ພຣະບາດທ້າວ | ຟັງແລ້ວລ່ວງກາຍ |
| ຟັງຍິນເຄັງ ໆ ນ້ຳ | ນອງກະແສໃສສ່ອງ |
| ນ້ຳນັ້ນເປັນເປືອກຊ້ຳ | ໃສສົ໊ງເນືອແລ |
| ເປັນແປວນ້ຳ | ກົດທອງທົງເດດ |
| ມີທັງເຫຼືອມປູ່ເຕົ້າ | ດັນຫັ້ນທໍ່ເຮືອ |
| ເຈົ້າຮູ້ແລ້ວ | ນົບພາບຫາວືນ |
| ພູມີສະເດັດ | ລ່ວງກາຍໄປໄດ້ |
| ແລ້ວເລົາຫຼຽວຫຼັງປ້ຽມ | ເຫຼືອມລາຍລອຍແກວ່ງ |

ຕັ້ງຫາກເຮືອງເຮືອແຈ້ງ ໃນນ້ຳອະເນກນອງ
ເມື່ອນັ້ນລືນາດທ້າວ ເຫັນໝາກກ້ຽງສຸກ
ພຣະກໍຫວາຍຫິງປິດ ໃສ່ຖົງແພງໄວ້
ຄັນວ່າໄປເຖິງນ້ອງ ມະໂນຣາຊິນຳຝາກ
ພຣະພີ່ເຈົ້າ ແພງໄວ້ບໍ່ກິນ
ບໍຣິນທ້າວ ຫຽວເຖິງຜາແອ່ນ
ດີແກ່ລົມລ່ວງຕ້ອງ ຕາວຄ້ອຍຄ່ອຍເດີນ
ທຸກບົ່ງໃນໂລກນີ້ ຜັງມີງໄກກັນ ນີ້ນໍ
ພຣະກໍນອນດິນດາຍ ແກ່ພະນອມນຳເນື້ອ
ຣາສີທ້າວ ຜອມໂຊເຊີງປ່ວຍ
ພີ່ຈັກຕາຍຈາກນ້ອງ ນາງແກ້ວບໍ່ເຫັນ ລະນໍ
ພໍເມື່ອເນື້ອນຣອດນ້ອງ ນ້າວສັ່ງຊີມເສັງ ນ້າງແມ
ຢ່າຟ້າວນໍຣະນາດັບ ແຄ່ດົງດອມເນື້ອ
ພໍໃຫ້ເຫັນໂສມນ້ອງ ມະໂນຣາເຫຼົາລ່ຽນ
ແລ້ວຈິ່ງມຸດນອດນ້ຽນ ມີເອື້ອອ່າວປາງ ດອກນາ
ຄ້ອມຮ່ຳແລ້ວ ພູວະນາດລີລາ
ມີນານເຖິງ ດ່ານແດນສາງຮ້າຍ
ຫຼົງດູບັກໂຂເຂັ້ນ ຄືງຕາວເຕັ້ນໄຕ່
ມັນຫາກເຫັນອ່ອນນ້ອຍ ແພງຕື້ວ່າຊິກິນ
ເມື່ອນັ້ນພຣະນາດທ້າວ ເລີຍລັ້ນທະນູສິນ
ປຶນປາພິດ ພຸ່ງແປວຜັນເນື້ອ

ພູມີທ້າວ ທິງທະນູມີປ່ອນ
ບັກມອດມ້ຽນ ຕາຍຂວ້າແຄ່ດິນ  ເຈົ້າເອີຍ
ແລ້ວພາກນັ້ນ ເຖິງດ່ານດົງຜີ
ໂພງຫຼວງຫຼາຍ ເຫຼືອດແລນຳທ້າວ
ບາງພ່ອງບັງເພືອນຟ້ອນ ໂກວແພນເປື້ອງແກວ່ງ
ຂາແຄ່ງສ້ວຍ ເລົານ້ອຍທໍ່ກະສວຍ
ລາງຄິນຄີງຄາງສັ້ນ ປູນຫຼວງທ້ອງໃຫ່ຽ
ບັ້ງ ໆ ນ້ອຍ ຄືນ້ຳດູດກິນ
ວິບາກເບື້ອງ ປາງກ່ອນເປັນເວນ
ບາໄທເຫັນ ລ່ຳດູພໍຢ້ານ
ເມື່ອນັ້ນພູທອນທ້າວ ສອນສັ່ງປວງພີ
ທັງກຸມພັນ ເວສຸວັນນວນພ້ອມ
ໃຫ້ຄ່ອຍນຸສະຫານ້ອມ ພາວະນາທຸກເຊົ້າຄ່ຳ
ສິບຫ້າຕັ້ງ ໃນເນື້ອຢ່າໄລ
ອັນວ່າສິບຫ້ານີ້ ອຸດົມດີດາປະເສີດ
ຕັ້ງຫາກໄສສິງແກ້ວ ເຣືອງຂື້ນຮອດສວັນ  ແທ້ແລ້ວ
ຄ້ອນວ່າທ້າວສັ່ງແລ້ວ ເທເທດສອນສັດ
ອິນພົມທັງເທວາ ນ່ຽວວອນບູຊາເຈົ້າ
ທິພບຸບຜາພ້ອມ (ດອກໄມ້ທິບ) ພາຍລົງເລີຍວ່ານ
ຕົກແຕ່ຟ້າ ບູຊາເຈົ້າເທສນາ
ຝູງໝູ່ກຸມພັນພ້ອມ ເທວາໄຫຼຫຼັ່ງ

ຄັບຄັ່ງເຂົ້າ ບູຊາເຈົ້າແທບຕີນ
ເມື່ອນັ້ນເມຄລາແກວ່ງແກ້ວ ເປື້ອນປືນກິ່ງຈັກ
ຕາໃຊໃສ ບາດຕານາບສະດຸ້ງ
ເຂົາກໍຕົກໃຈປ້ານ ປານຂວານຟ້າຜ່າ
ຫົວງບໍ່ໄດ້ ຣິດທີ່ແກ້ວບາດຕາ
ຄອບເທັນນານ ໆ ພຸ້ນ ເປໂຕຟູງເພດ
ເຂົາກໍໄຫຫຼັ່ງເຂົ້າ ທູນເຈົ້າຊູ່ພາຍ
ເມື່ອນັ້ນພູທອນທ້າວ ຫຼຽວເຫັນຟູງເພດ
ແລ້ວຈຶ່ງຖາມທ່ານທ້າວ ພຍາເວສຸວັນ
ຊຸມນີ້ເວນຂອງມັນ ສິ່ງໃດຂໍແຈ້ງ
ເມື່ອນັ້ນເວສຸວັນໄຫວ້ ຖແລງກອບບົນບອກ
ເຂົານີ້ທຸກຂະເວດໃຊ້ ໃນໜໍ້ໜື່ນປີ ພຣະເອີຍ
ຟູງກາແຮ້ງ ນຳມາສັບຕອດ
ໜັງແລະຊີ້ນ ພຸງໄສ້ເລົ້າໂກນ
ບັງແຕ່ດູກຮ່າງຮ້າຍ ເອັນຕໍ່ຕາມຕິດ
ມັນກໍໂຮຍແຮງປົນ ປ່າຍປືນປາຍງົ້ວ
ບັງເລົ້າແລນ ໆ ຊີ້ ທາພຶ່ງພາຍລຸ່ມ
ມັນກໍຂຶ້ນບໍ່ໄດ້ ແທງນໜ້າລຳດາຍ
ບັງເລົ້າໂອຍ ໆ ຮ້ອງ ດົງກັບຊັກຊັ້ນ
ເພາະວ່າກັມກ່ອນກີ້ ນຳໃຊ້ສິ່ງເຖິງ
ມັນນັ້ນມີສຈານແທ້ ຫຽວຊີມເມັ່ງທ່ານ

ກັນສິ່ງໃຫ້ ຜອງພົ້ນເຂດເວນ ແຫ້ແລ້ວ
ເຜດບຶ່ງກົງຈັກຕັ້ງ ເທິງຫົວຜັນຢູ່
ເລືອດຫຼັ່ງຍ້ອຍ ແດງເຂັ້ມອາບຄີງ
ເຜດບັ້ນຫຼີ້ນໝາກບ້າ ໃບຂວ່າງອາຣາມສິງ
ກໍຫາກເປັນເວນວຽນ ຄອບເຂົາປາງນີ້
ເຜດບຶ່ງເອົາຫົວເຂົ້າ ຊົນກັນກັບຄ້ອນທັ່ງ
ເລືອດຫຼັ່ງລົ້ນ ຫົວຊ້ຳແຕກທະລາຍ
ພໍຄາວຊ້ຳ ຊົນກັນກອນໄລ່
ຝູງນີ້ເວນເຂົາໄດ້ ຕີໄກ່ຊົນຄວາຍ
ກໍຈຶງເປັນເວນໄຫຼ ຕອບກັບບໍ່ມີແລ້ວ
ເຜດບຶ່ງຫົວ ໆ ລົ້ນ ບາວຣີໜອນໄຕ່
ໄຟລວກໄໝ້ ສຽງຣ້ອງສັ່ນສາຍ
ເຜດນີ້ຊາດກ່ອນພຸ້ນ ປ້ອຍດ່າເວນຜົວ
ມືຄວາຈັບ ຟາດກະບຸງບຽນດົ້ງ
ທຳສວຍເຈົ້າ ສາມີໂກກອນດ່າ
ເວນບໍ່ແລ້ວ ລົງໄໝ້ແຜ່ນແດງ
ເຜດບຶ່ງອູມບູມພົ້ວ ພວງພັນຕັບໄກ່
ຕິດຕໍ່ເນື້ອ ຕົວໄວ້ທໍ່ພູ
ຂ້າຄວາຍພ້ອມ ຂ້າໝູ່ເມີຍມັ້ງ
ຕິດຕໍ່ພ້ອມ ເປັນໂຄ້ນຖ່ານໄຟ
ແຊວ ໆ ພ້ອມ ຄະນາກາຣ້ອງຣ່ຳ

ສັບຕອດຈົ້ມ ກິນລີ້ນຈີ່ກຕາ
ມັນກໍເຊຊວນລົ້ມ ໄປມາກິ້ງເກືອນ
ໄຟລຸກກຸ້ມ ແດງເຂັ້ມທົ່ວໂຕ
ເຜດນຶ່ງທົນ ໆ ເຕັ້ນ ໂດນບຳຮ້ອງຮ່ຳ
ນີ້ໃຫ່ງຜັ່ງງ ໃບພ້າວກິ້ງດານ
ເຜດນຶ່ງຕິນຕົວນ້ອຍ ຫົວມັນໂພດໃຫ່ງ
ສອງຝ່າຍແກ້ມ ເປັນຫູ້ອງທໍ່ເຮືອນ
ລົນ ໆ ໄມ້ ແຫງຄໍຄາປາກ
ເລືອດຫຼັ່ງລົ້ນ ໄຫຼນ້ອຍອາບຄີ້ງ
ຕາແດງເຂັ້ມ ຄືໄຟລົນລວກ
ປົບປ່ວງພ້າວ ໄປແຫ້ຜູ້ດຽວ
ຊຸມນຶ່ງຍາບ ໆ ພ້ອມ ອິນໄກ່ແຫງປາກ
ເປັນແປວລຸກ ແລ່ນບຳພໍຮ້ອຍ
ອັນວ່າເວນຫຼັງໃຊ້ ປາປັ້ງປ້ອຍພໍ່ແມ່
ບາບແບ່ງໄວ້ ກັນກ້ຽວເນື້ອລຸນ ແທ້ແລ້ວ
ເຜດນຶ່ງປຸນຫຼວງຜັ່ງງ ຖງຄາງທ້ອງສວດ
ມັນໂລບລ້ຽວ ກິນເຂົ້າກ່ອນພົວ
ເລີຍເລົ່າເປັນບາບຮ້າຍ ທ້ອງໃຫ່ງປຸນຫຼວງ
ເວນຫຼັງຫຼາຍ ຮອດຄີ້ງຄາວນີ້
ເຜດນຶ່ງແຂນຍາວສ້ວຍ ມືມັນຄ້ອມສັ້ນ
ຊາດກ່ອນເປັນແມ່ນ້ອນ ເພືອນພ້ອນບໍ່ວາຍ ແທ້ແລ້ວ

ເມື່ອນັ້ນຊະພັງພ້ອມ ຝູງເພດປະນົມກອບ
ດວາຍພູທອນພຣະ ໂພດປຸນປາງຮ້ອນ
ອັນວ່າກັມເວນຮ້າຍ ພາຍຫລັງຈຳຈ່ອງ
ວິບາກເບື້ອງ ເວນຮ້າຍຫາກຫລາຍ ພຣະເອີຍ
ບັດນີ້ເຄືອງໃຈເຈົ້າ ການໃດດັ່ງດຸ່ງ
ຂໍພຣະຊີ້ສັ່ງໃຫ້ ພໍຮູ້ເຫດການ ແດ່ຖ້ອນ
ແຕ່ນັ້ນພູບານຕ້ານ ດອນພີເພີຍບອກ
ແພະຮ່າງໃຫ້ ການໃຫ້ທ່ຽວດີງ
ກູກໍເຄືອງໃຈດ້ວຍ ດອນອີງມະໂນຣາດ
ຈຶ່ງໄດ້ຂ້າມປ່າໄມ້ ມາພົ້ພ່ຳນານ ແລ້ວເດ
ຄ້ອນວ່າທ້າວກ່າວແລ້ວ ລາຈາກຝູງພີ
ເຂົາກໍແຊວ ໆ ສຽງ ສັ່ງບາບຸນກວ້າງ
ຍາມໄດ້ແລ້ວ ການພຣະອີງກັບຕ່າວ
ຂໍພຣະມາໂພດຂ້າ ຄາວແຄ້ນແດ່ເຂົາ ແດ່ຖ້ອນ
ເມື່ອນັ້ນສີທົນທ້າວ ຣາຊາເລີຍລ່ວງ
ນົ້ມທີ່ນັ້ນ· ເມືອໜ້າດັ່ງຫລັງ
ຟັງນົນສະກຸນາຮ້ອງ ຮົນເຂົາຂັບອ່ອນ
ເປົ້າປ່າໄມ້ ຍາມຮ້ອງຮົ່ນບາງ
ຄືຄູ່ປາງປະເທົ່ງຫໍ້ ລະບຳບິນກັ້ງງກ່ອນ
ແຊວໄຊ່ທ້ວງ ຫວງທ້າວອ່າວກະສັນ
ພູມີທ້າວ ຫິວຕາຍຕອນໂສກ

ເພາະເພື່ອຣາມຮູບໜ້າ ຫຼື ງໄດ້ກໍບໍ່ເຫັນ
ດູນານໄດ້ ຫຼາຍປີເປັນເຂດ ມາແລ້ວ
ທ້າວກໍແສນໂສກຮ້ອນ ຣາມເອົາຂາດແລງ
ປານນີ້ຍັງບໍ່ເຫັນແຫ່ງຫ້ອງ ນົງທ່າວມະໂນຣາ ພີ່ນັ້ນ
ແໜງວ່າໄດຕາຍເສັຽ ສວ່າງເວນລາງແລ້ວ
ປານນີ້ມະໂນຣາສ້ອຍ ໂສນງາມຊິລົງທ່າ ໄດເດ ?
ເຈົ້າຊິເບື່ອດ ໆ ເບື່ອ ຄຶງຄ້ອນຢູ່ທ່າໃດ ພີ່ບໍ ?
ຫຼື ນ້ອງໄລພຣະອວນອ້າຍ ໜາຍເຊີຍຊົມເປີດ
ຈຶ່ງໄດ້ພາກພີ່ໄວ້ ແດດິ້ນດັ້ງດຽວ ນີ້ເດ
ແມ່ນຊິໜາງເປີດອ້າຍ ກໍພໍແຕ່ຕາມເຫັນ ພີ່ແມ
ດຽວນີ້ອິກພີ່ເພພັງດອນ ນາດຸຮຸນລວງຊ້ອຍ
ເຊີນນ້ອງເອົາອວນໄວ້ ຕາງຕີນໃຊ້ຊ່ວງ ແດ່ຖ້ອນ
ຢ່າໄດ້ປະຂະມ່ອມໄຫ້ ຫົວກະດ້າງຢູ່ດົງ ພີ່ຖ້ອນ
ພຣະກໍດັ່ນ ໆ ດິ້ນ ຫົນໂສກແສນກະສັນ
ຄຶງງາມຫງາຍ ແດ່ຫົນເຫັວຫ້ວຍ
ພໍເມື່ອຣາຕີຄ້ອຍ ຍາມແດຸແດມຖ່າຍ
ຟັງຍິນລົມປ່າຍໄມ້ ຍາມຊິແຈ້ງຮຸ່ງຈວນ
ຍາມນັ້ນອິນທີເຊື້ອ ສະກຸນານອນເບັ້ງ
ພໍເມື່ອສູນສ່ອງແຈ້ງ ມັນເວົ້າຕໍ່ກັນ
ເຂົາວ່ານາຣີແກ້ວ ນາງງາມມະໂນຣາດ
ໜີຈາກພຣະບາດທ້າວ ສີຫົນພຸ້ນພາກມາ

ເຂົາກໍພາພົນເຕົ້າ     ເດີນກັບຮັບອ່ອນ
ຂ້າຊ້າງມ້າ     ບູຊາເຈົ້ານົງນະຄອນ
ວັນລຸນແທ້     ເຮົາບິນບິນແອ່ວ
ກິນຊາກຊີ້ນ     ພາຍພຸ້ນສ່ວນດີ ທ່ານເອີຍ
ເມື່ອນັ້ນພູທອນທ້າວ     ສີກິນຟັງດີ
ພຣະກໍມິນເປົ່າຂຶ້ນ     ປອນລຶ້ຫຼືບຂິນ
ພໍເມື່ອວັນວຽນພ້ອມ     ບົວຣະພາເພັງໂລກ ພຸ້ນເຍີ
ແສງສ່ອງດ້າວ     ດົງໄມ້ນ່າຍມົວ
ເມື່ອນັ້ນອິນທີຣ້ອງ     ຫາກັບເດີນປ່າວ
ນົກກໍພາແຈ່ມແຈ້ວ     ບິນຜ້າຍແຜ່ນຜຍອງ
ນໍາເຫັນຮ່ວນ ໆ ແຈ້ງ     ເຂົາເດີນງາມໂງ່ນ ພຸ້ນເຍີ
ຄືດັ່ງຜາສາດທ້າວ     ທອງເລັ້ມລຽນຫາ
ມີທັງຈວງຈັນພ້ອມ     ເກສອນໄຂກາບ
ດີແກ່ລົມລ່ວງຕ້ອງ     ຫອມເຮົ້າທົ່ວເມືອງ
ຫຼິງດູບານ ໆ ເຫຼື້ອມ     ຫໍຣາດໂຮງຄໍາ
ເມືອງ ໆ ໃສ     ສ່ອງງາມເງົາແກ້ວ
ຫັສດີ ລີງເຫົ້າ     ສາລາເຊົາຈອດ
ຮອດທີ່ເຂົາແຕ່ງຂ້າ     ຄວາຍຊ້າງນອກວຽງ
ພຣະບາດທ້າວ     ລັກລອບລົງໜີ
ພູທອນເຊົາສາລາ     ຢູ່ສະບາຍມີຟ້າວ
ຟັງຍິນເຄງ ໆ ກ້ອງ     ກອງບາວລ້ອງລັ່ນ ພຸ້ນເຍີ

ສຽງຕຶງຕ້ອງ ພິນພ້ອມມ່ວນເມືອງ
ຫຼີ ງຖຸໂຮງຫຼວງບ້ອງ ມະໂນຣາລາຍເຮືອ
ພູວະນາດຮູ້ ມະໂນໜ້ອມເມື່ອຍພຣະໄທ
ອັນນີ້ ຄຶດັ່ງມິນຫຽນໄຫ້ ເມືອງຫຼັງບ້ານເກົ່າ ກູພຸ້ນ
ບັດນີ້ຮຽນໄດ້ມາຢູ່ແລ້ວ ຮາມນ້ອງພາກເມືອງ ນີ້ແລ້ວ
ທ້າວກໍເລື່ອນ ໆ ນ້ຳ- ຕາຫຼັ່ງນອງໄຫຼ
ແຄນເຄືອງຄຶດ ຊູ່ລ່ວງເລີຍໄຫ້
ຟັງສຽງກາແກງຮ້ອງ ໂຮຍສຽງສັບປີ
ທ້າວກໍຄຶດຮອດນ້ອງ ນີງໜ້າແຈ່ມພຣະຈັນ
ແຕ່ນັ້ນກຸມພະທາສີຂ້າ ມະໂນຣາລິງທາ
ຕັກຕຸ່ມນ້ຳ ນອງຖ້າອາບພຣະນາງ
ຖັດນັ້ນທ້າວກໍອະທິຖານນ້ອມ (ຕັ້ງໃຈ) ມະໂນຣານຳແອ່ວ
ຜີແມ່ນຂ້ອຍແຈ່ມເຈົ້າ ຍນ້ຳຢ່າໃຫ້ແກນ
ເມື່ອນັ້ນນີງຕັກນ້ຳ ເຂົາກໍບັງທານ
ຂຶ້ນບໍ່ໄດ້ ວານທ້າວຊ່ອຍໂຈມ
ອໍຣະແນບເນື້ອ ທ້າວແທບທິງແທວນ໌
ພຣະກໍແບງຄັນທີ ປ່ອນລີງໃນນ້ຳ
ນາງກໍ ລີລາຜ້າຍ ຜັນເມືອໂຮງຫຼັ້ງ
ຕີກນາດຊ້າ ພາຍຊ້ອຍແມ່ນມັນ
ເມື່ອນັ້ນອໍຣະໄໝ່ໜ້າ ນາງນາດມະໂນຣາ
ບໍຄັນທີ ອາບສີສີງລ້າງ

ທາສີເປື້ອງ ຄັນທີໄຫຼຫຼັ່ງ
ແຫວນຝາກທ້າວ ກວມນິ້ວແນບມື
ເມື່ອນັ້ນນາງນາດນ້ອຍ ຄະນຶງຮຸ່ງຫາຜົວ
ອັນນີ້ຈອມແພງພຣະ ຮູ້ວ່າໃຜແຜວດັ້ນ
ຫາກວ່າສີທິນທ້າວ ຫວນຕາມນ້ອງອຸ່ນ ຈິງຫຼື
ນາງຮ່ຳແລ້ວ ເຣວຣ້ອນເຣົ້ງການ
ທັນຂ້າໃຊ້ ສາວທາດທາສີ
ທັງປວງເຂົາ ຂານຊູລີລຽນເບື້ອ
ມະໂນຣາຕ້ານ ຈາເຂົາໄຂຂ່າວ
ມຶງຢ່າອື້ງ ອຳໄວ້ບໍ່ດີ
ອັນວ່າຝູງເພື່ອນພ້ອມ ເປັນໝູ່ມາເປືອງ
ມຶງນີ້ເປັນການສັງ ຜູ້ດຽວພອນຊ້າ
ເມື່ອນັ້ນທາສີຂ້າ ໄຂຄະດີດອມອ່ອນ
ອັນວ່ານ້ຳໜ້ານ້ອຍ ບໍໄດ້ບໍ່ແກນ
ຂ້າກໍເຫັນຕ່າງທ້າວ ໂສມສິງອິນຂຽນ
ເລີຍເລົ້າວານບາບຸນ ຊ່ອຍບໍບັງໃຫ້
ມີໃຊ່ອັນເຫັນແທ້ ຫັນໃດໂດຍດ່ວນ
ເມື່ອນັ້ນນາງນາດຄຸ້ມ ຄືບ້າເມືອຍມະໂນ
ຈິດສວາດແກ້ວ ຈອມພີພອນພັດ
ອັນນີ້ ສີທິນເດີນ ດຸ່ງພະນອມນຳນ້ອງ
ນາງຈິງປິງຄຳຫ້າມ ຢ່າປຸນປອງນອກ ໃຜຖ້ອນ

| | |
|---|---|
| ໄວ້ບາດຫຼ້າ | ເລີງຮູ້ຮ່ອນເຫັນ ດອກບາ |
| ຄ້ອນກ່າວແລ້ວ | ບາງຂີດຂຽນສານ |
| ຖແລງຄຳຮັກ | ຮໍ່ເຖີງຖນອມຫ້າວ |
| ໂອບໍສານນີ້ | ນັບແຕ່ພາກພີເຈົ້າຊິເບົາໃຈນ້ອຍນຶ່ງ ບໍ່ມີແລ້ວ |
| ມື້ນຶ່ງເຈັບມື້ນຶ່ງໄຂ້ | ມື້ນຶ່ງໄຫ້ຫາອ້າຍຢູ່ຮ່ວມຮິນ |
| ພໍແຕ່ເຫັນຄິນໄຊ້ | ໄຂຄະດີກອບກ່າວ |
| ຈິດລ່າວລົ້ນ | ເລີຍສມ້ອຍເມື່ອຍລີງ |
| ຄ້ອນກ່າວແລ້ວ | ແລ້ວເລົ້າພັນສານ |
| ອາພອນພັບ (ຜ້າແພ) | ຈີບດີດາມ້ຽນ |
| ອາຫານພ້ອມ | ໂພຊະນັງນ້ອງແຕ່ງ (ເຂົ້າ) |
| ກັບຫົງຈັບແລະຄູ້ | ນວນແປ້ງປີນຂາວ |
| ແລ້ວມອບໃຫ້ | ສນິມແບບນຳຖວາຍ |
| ສີທິນພັກ | ເບິງສານສແວງຮູ້ |
| ມືຫວຍຄົ້ນ | ສານນາງນ້ອຍອ່ານ |
| ປານດັ່ງຕາຍເກີດກ້າ | ເມືອງຟ້າພາກພຣະອິນ |
| ແລ້ວນຸ່ງຜ້າ | ຜືນອາດເອົາໂສມ |
| ຫັງສເວີຍຂອງທີບ | ເທພແພນມາໃຫ້ |
| ບາໄຫຫ້າວ | ຄະນຶງນາງນ້ອງອຸ່ນ |
| ບັດນີ້ນ້ອງພີ່ຄຸ້ນ | ຄະນຶງຂ້ອຍດັ່ງດຽວ ຢູ່ນໍ |
| ພໍເມື່ອວັນວີງຄ້ອຍ | ນິດຣິ້ມພູເງີນ ພຸ້ນເຢີ |
| ນະໂບຣາເຖີງ | ພໍ່ຕີນປະນີມນີ້ວ |

ເມືອນັ້ນອິງກະສັດໄຫ້　　ພູເງິນກອຍກ່າວ
ຮັກລູກນ້ອຍ　　ຖາມຊັ້ນຊູ່ອັນ
ຜິວແຈ່ມເຈົ້າ　　ເຊື້ອຊາດບານໃດ ພໍ່ເດ
ເປັນຣາຊາ　　ສິງໃດຂໍແຈ້ງ
ເມືອນັ້ນມະໂນຣານ້ອຍ　　ໄຂຄຳທູນພໍ່
ປະນົມນອບນິ້ວ　　ຈາແຈ້ງຊູ່ອັນ
ລືວ່າສີທິນທ້າວ　　ເປັງຈານນະຄອນຣາດ
ຮ້ອຍປະເທດດ້າວ　　ທູນໄຫວ້ສ່ວນສືບ ພໍ່ເອີຍ
ອັນວ່າໄກຣາດທ້າວ　　ຖາມຖ້ວນຊູ່ປະການ
ຜີວ່າສີທິນທິງອິດທີແຮງ　　ພໍ່ໄດ່ຫຸນເຫັນໜ້າ
ຖ້າວ່າສີທິນແກ້ວ　　ກອຍນຳນາງນາດ
ພໍ່ຈັກວາງອາດໄທ້　　ສອງເຈົ້າຮ່ວມກັນ ພໍ່ແລ້ວ
ເມືອນັ້ນນາງກໍຮູ້ຮ່າງເບື້ອງ　　ໃຈຣາດເຮງໂບ
ມະໂນຣາເອີຍ　　ເລົ້າທູນທັນອ້າງ
ນັດນີ້ ສີທິນທ້າວ　　ເດີນໄພມາຮອດ
ທ້າວກໍພັກຈອດຍັ້ງ　　ສາລາກວ້າງນອກວຽງ ວ່ານາ
ປຽວວ່າປິດຕຸເຣດໄທ້　　ທິງໂທດພຣະສີທິນ
ລູກຈິງອຳອິງເສັງ　　ແກ່ແລງວານນີ້
ເມືອນັ້ນພູມີໄທ້　　ປິດຕາດິນພໍ່
ຮູ້ຂ່າວຂໍ້　　ຈອມສ້ອຍດຸງຕາມ
ພຣະກໍເຣວຣີບຕ້ານ　　ເດີນປ່າວເສນາ

ຮຽງຄະດີກອຍ ກ່າວໄວແວນແຈ້ງ
ສູຈົ່ງໄປທັນທ້າວ ສີທົນມາຣົບ
ບອກວ່າພຣະພໍ່ໃຊ້ ເຊີນນ້ອຍສູ່ວັງ ວ່າເນີ
ຄ້ອນກ່າວແລ້ວ ເຂົາເລົ່າລົງລາ
ແຍງສາລາ ກ່າວກອບທູນທ້າວ
ບັດນີ້ພູທອນໄຫ້ ປິດຕາຕົນພໍ່
ໃຊ້ຂ້ານ້ອຍ ທັນທ້າວທ່ຽວເມືອງ ວ່າບາ
ເມື່ອບັ້ນອໍຣະໄໝ່ໜ້າ ທ້າວໜຸ່ມຍິນສງວນ
ມາຍາຂານ ຕໍ່ຂຸນໄຂແຈ້ງ
ອັນວ່າຈອມແພງເຈົ້າ ພຣະປິດຕາຕົນພໍ່
ບັງບໍ່ເຫັນທີຮ້າຍ ດີດ້ວຍໃຜຄນາຍ ແທ້ລື
ພຣະກ່າວແລ້ວ ທົງແຜ່ນພູສາ
ອາພອນແພງ ຄ່າເມືອງນາງໃຫ້
ບາໄທທ້າວ ພູທອນປະດັບແຕ່ງ
ເອົາຂອກແຫຼ້ງ ທະນູແລ້ວນຸ່ງທົງ
ຄືດັ່ງແກ້ວປາດຟ້າ ທອງຫຼໍ່ ຣາສີ
ເໝືອນດັ່ງອິນຕາພາຍ ຜັ້ນພະໂຍນລົງປ້ອງ
ສົມສນິດໜ້າ ພຽງພົມລົງຫຼໍ່
ປະດັບເຊືດແກ້ວ ມະນີຮ້ອຍຮອດຄຳ (ເຄື່ອງປະດັບຫົວເຮັດດ້ວຍແກ້ວ)
ມີນານທ້າວ ທົງພຣະກາຍເບື້ອນຍ່າງ
ຍ້າຍຈາກຫ້ອງ ສນາມກວ້າງແກວ່ງແຂນ

ອໍຣະໄໜ່ໜ້າ    ທ້າວອວດເອົາໂສມ
ຊາວເມືອງເມີນ    ຜໍ່ດູດາລົ້ບ
ໂສມສງຽມຄ້າມ    ຄືງງາມເບື້ອອ່ອນ
ພຣະທ່ອນທ້າວ    ເລີຍລ້ຳລ່ວງໄປ
ເອົາກໍ ລືບາດໄຫ້    ຫາງປະເຫດເປັງຈານ
ຄືດັ່ງອິນຕາຕົກ    ແຕ່ງລວງລິງປ້ອງ
ຊາວນະຄອນຄ້ອຍ    ຕີທວງດົ້ນດັ້ນ
ມວນທົວທ້ອງ    ທັງຄ້າຍວ່າງາມ ແຫ້ນໍ
ຊຸມສາວນ້ອຍ    ນະໃບຣາຫຼືງລ່ຳ
ຄືດປາກໄດ້    ດອນເອື້ອຍອ່ອນກໍໃຈ
ໂອນໍສັງນາງງາມກະດັດເດ    ສເນືອິບລິງຫຼໍ່ ແຫ້ນໍ
ບານເນື້ອບົວຣະບາດບ້າຍ    ມືຊ້າຍແກວ່ງແຂນ
ພຣະບາດທ້າວ    ບ້າຍບ່າງລືລາ
ຄືງແພງເຖິງ    ແຫນທອງພຣະໂຮງກວ້າງ
ບໍພຣະກອນນ້ອມ (ມື)    ຣາເຊັງປິດຕຸເຣດ
ພຣະພໍ່ພ້ອມ    ຫູບທ້າວທ່ຽວຖາມ
ຈຽມແຕ່ເຈົ້າຈາກບ້ານ    ເດີນເຫດຫຽວເຖິງ ພໍ່ພົ້
ບັງຄ່ອຍຄອງຄຳສຸກ    ສິງໃດເດເຈົ້າ
ປານໃດທ້າວ    ຫຽວດົງເດີນຮອດ
ເມື່ອນັ້ນທ້າວຕອບຖ້ອຍ    ເຖິງພົ້ຄ່ອຍຄົງ ພໍ່ເອີຍ
ຈຽມແຕ່ເດີນດົງຜ້າຍ    ເຈັດປາຍປີຂບາດ ມືແລ້ວ

ຕັ້ງຫາກແສນໂສກຮ້ອນ　　ຮານເຂົ້າຂາດຫິວ
ຂ້າຄອບແຈ້ງ　　ເຖິງທີ່ພູເງິນ ພໍ່ພີ້
ເປັນວັນວານ　　ເມື່ອສູນແສງເສົ້າ
ເມື່ອນັ້ນກໍເມືອງເຈົ້າ (ເຈົ້າຜູ້ມີເມືອງຂຶ້ນຫຼາຍ) ຊົມຂວັນເຂີຍອ່ອນ
ອັນວ່າທາງທ່ອງເທົ້າ　　ບາທ້າວດຸ່ງດຽວ ໄດ້ເດ
ແຕ່ນັ້ນເປັງຈານທ້າວ　　ສີທົນກອຍກ່າວ
ຝູງນັ້ນຂ້າຜານແພ້　　ບໍ່ມີປ້ານປ່ອນກົວ ພຣະເອີຍ
ເມື່ອນັ້ນພໍ່ກ່າວຕ້ານ　　ທ້າວຊື່ນານໃດ
ລືເລົ່າເຣືອງທະນູສິນ　　ສິງອິນອິງລ້ຳ
ບັດນີ້ພໍ່ປາກເຫັນໂສມທ້າວ　　ທິງທະນູເອ້ອວດ
ພໍ່ຈັກຕັ້ງແຕ່ງໃຫ້　　ເຂົາກົ່ງກໍ່ຫີນ
ເປັນກອງໄວ້　　ພຽງພະໂບນຍັງເມກ
ຄັນຫາກທ້າວທ່ຽວໃຊ້　　ປືນມ້າງມຸ່ນທະລາຍ ດັ່ງນັ້ນ
ພໍ່ຈັກບໍ່ບົກແກ້ວ　　ນະໂບຮາຣຽງຜ່າງ ກັບແລ້ວ
ບໍ່ໃຫ້ເຂີນຂາດຮ້າງ　　ຮານໄດ້ປູ່ດຽວ ພໍ່ແລ້ວ
ເມື່ອນັ້ນສີທົນທ້າວ　　ໂສມະບາຊ້ອຍຊື່ນ
ຄຶດໃຄ່ໄດ້　　ໂດຍດ້ານດັ່ງປະສົງ
ຝູງໝູ່ຊາວນະຄອນຄ້າຍ　　ຄອຍດູຢັ້ງມພໍ່
ພຣະບາດທ້າວ　　ທະນູແກ້ວກົ່ງບິງ
ຖືກທ່ອນກ້າ　　ຫີນແຕກເປັນກະຈວນ
ທໍຣະນີເຟືອນ　　ແຜ່ນດິນດັ້ງສະທ້ານ

ປີ້ນພລຽງຂຶ້ນ ກາງຫາວສຽງສນັ່ນ
ແລ້ວເລົ້າລົງສູ່ພື້ນ ພລານກວ້າງຟັ່ງເຟືອນ
ທູກທີພ້ອມ ຝູງໝູ່ມົນຕີ
ເນືອງນອງເຂົາ ຂານຫູນໄຫທ້າວ
ລາງພ່ອງກອງກັນລົ້ມ ລຽນຂອນຂືນໄຂວ່
ພ່ອງກໍໜ້າລ່າເບື້ອ ໃຈສະທ້ານຫວັ່ນໄຫວ
ພຣະບາດເຈົ້າ ດິນພໍ່ພຍາຫຼວງ
ເຊຊວນຫຼົບ ຫຼ່າວົນຕາຍກະລ້າງ
ລືວ່າຣາຊາໄທ້ ສີ້ທັບທ້າວເອກ
ຜັດແຕ່ໄດ້ລຸ່ມຟ້າ ລືແທ້ທໍ່ນາ ນີ້ແລ້ວ
ເມື່ອນັ້ນໄກຣາດທ້າວ ເຫັນຫຼາກອັສຈັນ (ເຫັນເປັນແນວໜ້າງຶດ)
ອັນນີ້ຮ້ອຍແມ່ນແນວພູມີ ໝໍ່ພຸດໂທທົງເກື້ອ
ບັງທໍ່ສໍຣະສົບແກ້ວ ມົງຄົນອັນປະເສີດ
ພັນຄົນບໍບໍ່ໄດ້ ເສັງເຈົ້າແຈ່ມສມອນ
ຜິວ່າບໍແກນໄວ້ ນະໂນຣາສັນເກົາ
ພໍ່ຈັກໄດ້ແຕ່ງຕັ້ງ ເປັນເຈົ້າສືບເມືອງ ພໍ່ແລ້ວ
ເມື່ອນັ້ນພຣະບາດເຈົ້າ ທົງຣາດເປັງຈານ
ບໍ່ມີທູນ ເທພອິນເອົາອ້າງ
ອະທິຖານແລ້ວ ເລີຍບໍບົກແກວ່ງ
ເໝືອນດັ່ງບອງຜ້າຍກັງວ ປາຍກ້ອນແກວ່ງໄປ
ທຸກປະເທດນ້ອມ ເຕີນແຕ່ງສາທຸການ

ຣິນ ໆ ຊາວພູເງິນ　　ແຫນຫຸລີທູນໄຫວ້
ເມື່ອນັ້ນພູມີເຈົ້າ　　ເອົາເງິນກອບກ່າວ
ພໍ່ຈັກເສັງແຈ່ມເຈົ້າ　　ບຸນກວ້າງຊູ່ປະການ ກ່ອນແລ້ວ
ບັດນີ້ຍັງມີກິນນະຣີນ້ອຍ　　ເຈົ້າດບາງນຳເກິງ ກັນນັ້ນ
ໃສນສະອາດນ້ອຍ　　ດິນຖົ່ວຄ່ຽນສເມີ
ແຂນແພນພັ້ງ　　ນວນລະອອງເອົ້າການ
ຍາມເມື່ອຍິວຣະບາດຍ້າຍ　　ດວງໜ້າແປກກັນ
ພໍ່ຊີໃຫ້ຢູ່ຍັ້ງ　　ຮຽງພວກພຽງກັນ
ຖ້າແມ່ນເມັງຂວັນພຣະ　　ໃຫ້ຄ່ອຍບາຍເອົານ້ອງ
ຫາກຈັກເປັນແນວເຊື້ອ　　ເມັງຂວັນເຄີຍຄອບ ກັນແລ້ວ
ພໍ່ຫາກຄືດໃຄ່ຮູ້　　ບາທ້າວຢ່າເຄືອງ ແດ່ຖ້ອນ
ເມື່ອນັ້ນພຣະບາດທ້າວ　　ຫວງເທບທະລາຍຫັກ
ຄະນຶງເຖິງປາຣະມີທັນ (ສິບທັມທີ່ເຮັດໄວ້ໃນປາງກ່ອນ) ຊ່ອຍຊູຄຸນຄ້ຳ
ອິນຕາໃຫ້　　ສແວງລິງຜາຍໂຜເ
ມາຢູ່ໃກ້　　ບາທ້າວສຳສຽງ
ຂ້ອຍຈັກນີຣະມິດພັ້ງ　　ເປັນດັ່ງແນງວັນ
ຄັນຫາກບິນໄປຈັບບາງໃດ　　ກໍຈິງບາຍນາງນັ້ນ
ບາຣາມຮູ້　　ຄະດີການອັນບອກ
ພຣະຮຸ່ງແລ້ວ　　ບາຍໄດ້ແມ່ນນາງ ແທ້ແລ້ວ
ເມື່ອນັ້ນຝູງໝູ່ພ້ອມ　　ເດີນແຕ່ງສາທຸການ
ຣິນ ໆ ຊາວພູເງິນ　　ຂ່າວຂານຂໍໄຫວ້

ຣາຊາເຈົ້າ ທັງເມືອງອະພິເສກ
ມວນມອບໃຫ້ ນາງແກ້ວນຶ່ງເມືອງ
ທ້າວກໍລຸໄຊກໄດ້ ໄດຍດັ່ງຄຳປະສົງ ແທ້ແລ້ວ
ບຸນເຮືອງບົດ ບຶງໄທທູນໄຫວ້
ໃນທີບຫ້ອງ ຈອມເຂົາໄກຣາດ
ເຂົາກໍໄດຍອາດເຈົ້າ ທຽວໄຫວ້ສ່ວຍສິນ
ພຣະກໍເວນມອບໃຫ້ ຜາສາດລາຍຄຳ
ສອງແພງພຣະ ປູ່ສເວີຍເມືອງບ້ານ
ບັດນີ້ມະໄນຣາໄດ້ ທຽມຜົວສັນເກົ້າ
ເໝືອນດັ່ງໄດ້ພ່າງທ້າວ ທຽມຊ້ອນເທພດາ
ນັບແຕ່ປາຖນາສ້າງ ສົມພານເພັງໂລກ
ພຣະກໍໄດ້ສືບສ້າງ ສິບຊ້ອຍໝື່ນອະສົງ
ຈຽມແຕ່ໄພທີສັດສ້າງ ສເວີຍເມືອງໄກຣາດ
ກໍຫາກເຮືອງຮຸ່ງແຈ້ງ ດູເຫຼື້ອມກວ່າຫຼັງ
ບໍ່ເດືອດຮ້ອນ ປະການສິ່ງສັນໃດ
ບູກະເສີມສຸກ ໄພ່ເມືອງບໍບ້ອງ
ນັບແຕ່ຄອງສົມສ້າງ ເຈັດປີໄກຣາດ
ທ້າວກໍຄຶດອ່າວໂອ້ ຄະນຶງໜ້ອນແມ່ດົນ
ຍາມເມື່ອໄລຍາທ້າວ ລົມຂວັນຂານອຸ່ນ
ລອງເລັດນ້ອງ ຊີລາລ້າລ່ວງພະນອມ
ຄ່ອຍປູ່ດີເປີສາຍສມອນນ້ອງ ມະໄນຣາລີໂລກ ອວນເອີຍ

ບັດນີ້ພີ່ຈັກພາຍແຜ່ນລ້ານ ຄືນເຂົ້າສູ່ນະຄອນ ກ່ອນແລ້ວ
ເມື່ອນັ້ນກັລຍາແກ້ວ ນະໃນຣາບາງບາດ
ຄຶດສລາດຮູ້ ໃຈທ້າວທີ່ປະສົງ
ແລ້ວຕອບຕ້ານ ພູວະນາດພົວຂວັນ
ນ້ອງຈັກໄລພູທອນ ດຸ່ງດຽວໃດໄດ້
ນ້ອງຈັກຕວຍຕາມອ້າຍ ບໍ່ມີຍອມຍັງແອ່ວ
ນ້ອງບໍ່ລະມ່ອນໄວ້ ເປັນຮ້າງຫ່າງກັນ ດອກນາ
ເມື່ອນັ້ນມ່ານ ໆ ໜ້າ ທ້າວເທດທູນຫົວ
ປຽວວ່າຈອມແພງນາງ ບໍ່ປະສົງດອນອ້າຍ
ພໍເມື່ອພ່າງ ໆ ຟ້າ ບົດມືດມົວຝົນ ພຸ້ນເຢີ
ສອງແພງພຣະ ຄ່ອຍປຸນໄປເຝົ້າ
ບັດນີ້ລູກໄດ່ ຄືນປາມຫ້ອງ ເປັງຈານຈອມປະເທດ ພາຍພຸ້ນ
ຂ້າຂໍລາບາດໄຫ້ ທູນອ້າງແອ່ວໄປ
ເມື່ອນັ້ນພຣະບາດເຈົ້າ ຕົນພໍ່ພຍາຫຼວງ
ດູແລງຄຳຄວນ ຕໍ່ບາບຸນກວ້າງ
ປຽວວ່າບາໄທທ້າວ ລືມຄຸນພໍ່ແມ່
ລະເຜົ່າເຊື້ອ ພາຍພຸ້ນພໍ່ານານ
ເຮົາຫາກຄືດວ່າເຂີຍຂວັນໄທ້ ຈອມເມືອງບຸຕຣາດ
ຍັງຈັກປູ່ສືບສ້າງ ເມືອງນັ້ນງສເວີຍ ແທ້ດາຍ
ເມື່ອນັ້ນຣາຊາໄທ້ ພຍາຫຼວງຕົກແຕ່ງ
ເຮົາຈັກໄປສົ່ງເຈົ້າ ຈອມສ້ອຍປູກແປງ ກ່ອນແລ້ວ

ຄ້ອນກ່າວແລ້ວ ຄ້ອງລັ່ນອະດິນພິບ
ພູທອນທິງ ສັ່ງເຂົາຊຸບຂ້າ
ໃຫ້ເຂົາເອົາຍິນຫ້າງ ຫົວຫາງທັງປີກ
ມອບໃຫ້ທ້າວ ສີຫົນໃຫ້ທ່ຽວພລັບ
ທ້າວກໍສຸບສອດແລ້ວ ຄືດັ່ງກິນນະຣອນ
ຊະອອນແອວໄຂ ຄ່ອງງາມຄືຊິບ້ອຍ
ພໍຍາມທ້າວ ທະຍານບິນບິນແອ່ວ
ມະໂນຣາດນ້ອງ ບໍາທ້າວບໍ່ວາງ
ຝູງໝູ່ກິນນະຣອນລ້ອມ ກິນນະຣີບໍາແຫ່
ສອງຂອກຂ້າງ ຂວາຊ້າຍດັ່ງດາວ
ພໍເຫັນໄພພະນອນດົ້ວ ດວງຫອມຫາຍສວ່າງ
ມີທັງດອກເກດແກ້ວ ກາຍໃກ້ກິນຫອມ
ທ້າວກໍຫຼີ ໆ ຟາກກ້ຳ ກິງທີບເຂົາຂວາງ
ເຫັນໝູ່ມອນເມີຍຜາ ຜ່າຍທະຍານແຜງເຕັ້ນ
ຫຼີ ໆ ເຫັນເມໂຄຟ້າ ແຜງດອຍເປັນໂງ່ນ
ບາງພ່ອງເປັນຮູບເບື້ອ ເມີນຊູ້ຊ່າງປອງ
ທ້າວລ່ຳແລ້ວ ຫວາຍບອກມະໂນຣາ
ບາງກໍລໍາ ໆ ຫຼີ ໆ ຫຼາກຫຼາຍເລີຍຫ້ອງ
ໄພຂວາງຂັ້ນ ຫຼາຍພະນອນແມ່ນ້ຳລ່ວງ
ຝູງບ່າວທ້າວ ຫວງສະອື້ນພໍ່ຜາຍ
ເມື່ອນັ້ນສຸຣິໂຍຍ້າຍ ຄາແລງອັ່ງງອ່ວຍ

ພຣະພີນ້ອງ　　　ບິນຟ້າວຟັ່ງເຟືອງ
ຫຼິງເຫັນເມືອງ ໆ ເຫຼື້ອມ　　　ປາງທອງແຫວະຮາດ
ບອກພຸ່ງພົ້ນ　　　ພຽງຂ້າວຂື້ນພະໂຍມ
ພຣະບາດທ້າວ　　　ເດີນຮາດລາລິງ
ແບງບາພຽງ　　　ພ່ຳສີສອງບ້ອຍ
ເມື້ອນັ້ນຈຽມປາງທ້າວ　　　ສີຫິນຫຽວຍໍ່
ເຂົ້າສູ່ຫ້ອງ　　　ເມືອງກວ້າງຮອດສະຖານ
ພວກໄພ່ພ້ອມ　　　ພິງຮາດເປັງຈານ
ແຊວ ໆ ສຽງ　　　ກ່າວທູນຫັນອ້າງ
ບາກໍພາບາງຂື້ນ　　　ຂນິງທອງທູນພໍ່
ນັບແຕ່ລູກທ່າງເຈົ້າ　　　ໃຈແຫ້ງຫອດຫິວ
ລຳບາກຮ້າຍ　　　ຫຽວທ່ອງເຂົາຂວາງ
ຮ້ອຍທີສິນພານຄຸນ　　　ຮອດເມືອງພາຍພົ້
ເມື້ອນັ້ນນາດາແກ້ວ　　　ຈຽມໃຈຈອມຮາດ
ອຸ້ມລູກສະໄພ້　　　ສອງເຈົ້າຈູບຊິມ
ພຣະບາດທ້າວ　　　ດິນພໍ່ພຍາຫຼວງ
ສອງແພງຮັກ　　　ຮ່ວມກັນກອຍຕ້ານ
ນາຫຼື ສະຫາຍເຈົ້າ　　　ຈອມເຂົາໄກຮາດ
ພຣະຄ່ອຍຫວ້າຍຍ່ານໄມ້　　　ມາພົ້ຮອດດີ ແດ່ລື
ພຣະບາດເຈົ້າ　　　ຈອມມິງພູເງິນ
ແຫນຄຳຄວນ　　　ຂອບໃຈຈິງຕ້ານ

ເຮົາປະສົງມາໄຫວ້　　ສອງດອງດົນປະເສີດ

ອັນວ່າສອງອ່ອນນ້ອຍ　　ເຮົາໄດ້ປູກແປງ ແລ້ວເດ

ເມື່ອນັ້ນແກ້ວແກ່ນໄທ້　　ດົນແມ່ ສີທົນ

ນົງແພງຂານ　　ຂານຄະດີ ດີແລ້ວ

ບັດນີ້ເໝືອນດັ່ງອິນຕາໄທ້　　ເມືອງສວັນພານໂພດ ຈິງແລ້ວ

ນຳເອົານ້ຳທິບແກ້ວ　　ນະຄອນຟ້າໄສດສົງ

ເມື້ອນັ້ນທົ່ນ ໆ ພ້ອມ　　ພິນພວກໄທຄົວ

ດາກັນຈັດ　　ແຈກພາພານລ້ຽງ

ຂອງສເວີຍເຂົ້າ　　ທູນຖວາຍຮ້ອຍສິ່ງ

ທຸກເບື່ອງພ້ອມ　　ທັ້ງປີ້ງປີ່ນແກງ

ເຂົາກໍເດືອນກັນໃທ້　　ຫາມາລຽນແຈກ

ນ້ຳດອກໄມ້　　ປະສົງລ້າງລູບມື

ສະເພັງພ້ອມ　　ພຽງພວກດອມພາ

ຣິນ ໆ ຖອຍ　　ເລີກລາເລີຍລ້າງ

ຂັນຄຳຕັ້ງ　　ບໍສລາຄ້ຽວໝາກ

ພຣະບາດເຈົ້າ　　ໃຈແຈ້ງແຈກຖວາຍ

ເມື່ອນັ້ນພູເງີນເຈົ້າ　　ຈອມເຂົາໄກຣາດ

ພຣະກໍເດີນແດ່ງພ້ອມ　　ດີແລ້ວເລົ່າລາ

ທະຍານບິນຜ້າຍ　　ເວຫາອາກາດ

ຍານ ໆ ຍ້າຍ　　ລາເຈົ້າພຣະບອດເມືອງ

ຄັນຄັ່ງຂ້າມ　　ເຂົ້າມາດນອມຜາຍ

ພໍບານເຖິງພູເງິນ    ຈົມກະແສແສນຫ້າງ
ບັງທໍ່ຈຽມປາງຫ້າວ    ສີຫິນທິງຣາດ
ກັບທັງບາງບາດນ້ອຍ    ທິງສ້າງສືບເມືອງ
ກໍບໍ່ເຄືອງຄຳຮ້ອນ    ປະການໃດຈັກຢ່າງ
ບູທ່າງສອງກໍ່ສ້າງ    ສິບຊ້ອຍສ່ຳຣານ ແທ້ແລ້ວ
ຄັນວ່າສັງຂານສ້ຽງ    ເສັຽຊີວັງມໍຣະບາດ
ກໍໄດ້ຂຶ້ນສູ່ຜາສາດກວ້າງ    ຕຸດສີຕາພຸ້ນຟາກສວັນ ເຈົ້າເອີຍ
ອັນນີ້ ນິທານນັ້ນ    ສີຫິນທ່ຽວໂລກ
ປໂຍກເດີມມີທີ່ນີ້    ລົງໄວ້ທີ່ຄວນ ກ່ອນແລ້ວ ໆ

24 / VII

ຈົບ

ຫ້າມຈຳໜ່າຍ